ມະຫາວິທະຍາໄລແຫ່ງຊາດ

ຄະນະອັກສອນສາດ

ພາກວິຊາພາສາລາວ-ສື່ສານມວນຊົນ

# ວິຊາ ວັດທະນະທຳລາວ

( ສຳລັບລະບົບ 0+5 )



ຮຽບຮຽງໂດຍ: ຮສ. ສົມໄພ ວິໄລສັກ

ວຽງຈັນ ໒໐໐໗

ມະຫາວິທະຍາໄລແຫ່ງຊາດ

ຄະນະອັກສອນສາດ

ພາກວິຊາພາສາລາວ-ສື່ສານມວນຊົນ

# ວິຊາ ວັດທະນະທຳລາວ

( ສຳລັບ 0+5 )

ກວດແກ້ໂດຍ: ຄະນາຈານຈຸວິຊາ ວັດທະນະທຳລາວ

ຣສ. ສົມໄພ ວິໄລສັກ

ອຈ. ບຸນໜັກ ພະລະຄອນ

ອຈ. ແສງວັນ ມະນີວົງ

ພິມ ແລະຈັດໜ້າໂດຍ:

ອຈ. ສີບ ສຸລິນຄຳ

ວຽງຈັນ ໒໐໐໗

# ສາລະບານ

ໜ້າ

ພາກທີ I ຄວາມຮູ້ພື້ນຖານທາງດ້ານວັດທະນະທຳ-ສັງຄົມລາວ

ບົດທີ 1 ຄວາມໝາຍຄວາມສຳຄັນຂອງວັດທະນະທຳລາວ.......................................1–6

ບົດທີ 2 ຊົນເຜົ່າຕ່າງໆໃນວົງຄະນະຍາດແຫ່ງຊາດລາວ ແລະສະພາບວັດທະນະທຳລາວແຕ່ລະໄລຍະ.......................................7-1 7

ບົດທີ 3 ລັກສະນະວັດທະນະທຳ, ພິທີກຳຊີວິດ ແລະຮີດຄອງປະເພນີລາວ........18-45

ບົດທີ 4 ຄຸນສົມບັດ ແລະນິດໄສຂອງຄົນດີ.......................................46-51

ບົດທີ 5 ມາລະຍາດທາງສັງຄົມ ແລະການສົ່ງເສີມປະຕິບັດແບບມີສ່ວນຮ່ວມ...52-62

ພາກທີ II ບູຮານວັດຖຸ, ປູຊະນີຍະສະຖານ ແລະທັດສະນະສະຖານໃນລາວ

ບົດທີ 1 ບູຮານວັດຖຸ.......................................63-77

ບົດທີ 2 ປູຊະນີຍະສະຖານ.......................................78-90

ບົດທີ 3 ທັດສະນະສະຖານ ....................................... 91-103

# ຄຳນຳ

ປຶ້ມຕຳລາວັດທະນະທຳສັງຄົມລາວສະບັບນີ້, ທາງຄະນາຈານໃນຈຸວິຊາວັດທະນະທຳລາວ ພາກວິຊາພາສາລາວ-ສື່ສານມວນຊົນໄດ້ຮຽບຮຽງຂຶ້ນມາ ຕາມວັດຖຸປະສົງຂອງໂຄງການຫລັກສູດ ເພື່ອຮັບໃຊ້ໃຫ້ແກ່ການຮຽນ-ການສອນໃນໝວດວິຊາພື້ນຖານຂອງລະບົບ ( 0+5 )

ຕຳລາສະບັບນີ້ ລວມມີ 2 ພາກ ແລະມີທັງໝົດ 8 ບົດຄື: ພາກທີ 1 ແມ່ນບາງຄວາມຮູ້ພື້ນຖານທາງດ້ານວັດທະນະທຳ-ສັງຄົມລາວ ( ມີ 5 ບົດ ) ແລະພາກທີ 2 ແມ່ນ ບູຮານວັດຖຸ, ປູຊະນີຍະສະຖານ ແລະ ທັດສະນະສະຖານທີ່ສຳຄັນບາງແຫ່ງໃນປະເທດລາວ ( ມີ 3 ບົດ ).

ການຮຽນ-ການສອນ ວິຊາວັດທະນະທຳສັງຄົມລາວ ແລະ ສະຖານບູຮານຕ່າງໆທາງປະຫວັດສາດ ແລະສັງຄົມນັ້ນ, ແມ່ນມີຄວາມຈຳເປັນຢ່າງຍິ່ງ ທີ່ຈະນຳມາສຶກສາຮຽນຮູ້ຢູ່ໃນໝວດວິຊາພື້ນຖານ ເພື່ອໃຫ້ນິສິດນັກສຶກສາລະດັບມະຫາວິທະຍາໄລໄດ້ຮັບຮູ້ ແລະ ຊາບຊຶ້ງເຖິງຄວາມດີງາມທາງດ້ານຄຸນຄ່າສິລະປະວັດທະນະທຳ, ຮີດຄອງປະເພນີ, ມາລະຍາດຂອງບັນພະບຸລຸດລາວທີ່ໄດ້ສ້າງ ແລະສະສົມໄວ້ນັ້ນ ໃຫ້ເກີດປະໂຫຍດແກ່ຜູ້ຮຽນຮູ້ແລ້ວ ຈະໄດ້ພ້ອມກັນບັນຈົງອະນຸລັກຮັກສາ ແລະສົ່ງເສີມ ອັນຈະພາໃຫ້ເປັນພົນລະເມືອງດີ ແລະ ສະແດງເຖິງຜູ້ມີວຸດທິພາວະຕໍ່ຄວາມເປັນເຈົ້າຂອງມໍລະດົກວັດທະນະທຳສັງຄົມຂອງຊາດຢ່າງເລິກເຊິ່ງ.

ການຮຽບຮຽງຕຳລານີ້, ເຊື່ອແນ່ວ່າ ບໍ່ອາດປາສະຈາກໄດ້ເຖິງຄວາມຜິດພາດ ຫລືບົກພ່ອງທາງດ້ານຂໍ້ມູນຂ່າວສານ, ຄວາມບໍ່ສົມບູນທາງດ້ານເນື້ອໃນ ຕະຫລອດເຖິງການພິມຜິດດ້ານອັກຂະຫລະ ຫລືພິມຕົກ. ດັ່ງນັ້ນ, ຈຶ່ງຂໍຄວາມຮ່ວມມືຈາກທ່ານ ດ້ວຍການສົ່ງຂ່າວແບບສ້າງສັນ ເພື່ອຈະໄດ້ນຳໄປປັບປຸງໃນຄັ້ງຕໍ່ໄປ ແລະຂໍຂອບໃຈມານະໂອກາດນີ້ດ້ວຍ.

ດ້ວຍຄວາມນັບຖື

ທີ່ພາກວິຊາພາສາລາວ-ສື່ສານມວນຊົນ

ວຽງຈັນ, 2009

ຄະນະຮຽບຮຽງ

# ພາກທີ I

# ຄວາມຮູ້ພື້ນຖານທາງດ້ານວັດທະນະທຳ-ສັງຄົມລາວ

## ບົດທີ 1

## ຄວາມໝາຍຄວາມສຳຄັນຂອງວັດທະນະທຳລາວ

### 1. ຄວາມໝາຍ

ຄຳວ່າ " ວັດທະນະທຳ " ແມ່ນຄຳສະໝາດໃນພາສາບາລີ ( Compound word ) ຖ້າແປຕາມຄຳສັບ ໂດຍບໍ່ຂະຫຍາຍຄວາມ " ວັດທະນະ " ແມ່ນຄວາມຈະເລີນ, ຄວາມງອກງາມ. ສ່ວນຄຳວ່າ " ທຳ" ແປວ່າ ຄຸນຄວາມດີ, ຄວາມງາມ, ຄວາມບໍລິສຸດ, ຄວາມຖືກຕ້ອງ ດັ່ງນີ້ເປັນຕົ້ນ. ເມື່ອແປຕາມຄວາມໝາຍຂອງສັບ, ມີຄວາມໝາຍວ່າ " ຄວາມຈະເລີນ, ຄວາມໝັ້ນຄົງ ຫລື ລັກສະນະທີ່ສະແດງເຖິງຄວາມດີ, ຄວາມງາມ, ຄວາມເປັນລະບຽບຮຽບຮ້ອຍ, ຄຸນນະທຳ " ( ທອງຄຳ ອ່ອນມະນີສອນ,1992: 418, 681 ) ความ

ຄຳວ່າ " ວັດທະນະທຳ " ໃນພາສາລາວກົງກັບຄຳໃນພາສາອັງກິດວ່າ " Culture " ເຊິ່ງມັນເປັນເລື່ອງຂອງມະນຸດ, ພົວພັນກັບມະນຸດຢູ່ຕະຫລອດເວລາ. ເລີ່ມແຕ່ມະນຸດເກີດມາ, ມະນຸດທຸກຊາດໄດ້ເລີ່ມປະດິດສ້າງວັດທະນະທຳ ໂດຍຜ່ານຂະບວນວິວັດການດຳລົງຊີວິດອັນຍາວນານ. ມະນຸດໄດ້ສ້າງ ແລະສະສົມຄວາມຮູ້ຄວາມສາມາດ ຈົນກາຍເປັນລະບຽບແບບແຜນຂອງການດຳເນີນຊີວິດສືບຕໍ່ກັນມາ. ສະນັ້ນ, ຄຳວ່າ " ວັດທະນະທຳ " ຈຶ່ງມີຄວາມໝາຍກວ້າງຂວາງ. ຕໍ່ກັບບັນຫານີ້, ມີນັກສັງຄົມວິທະຍາຫລາຍທ່ານໄດ້ຂຽນໄວ້ດັ່ງນີ້:

1.1. Green ນັກສັງຄົມວິທະຍາ ຊາວອາເມຣິກາ ໄດ້ໃຫ້ຄວາມໝາຍຂອງວັດທະນະທຳວ່າ : " ວັດທະນະທຳຄື ຂະບວນການຖ່າຍທອດທາງສັງຄົມ ເພື່ອໃຫ້ບຸກຄົນເກີດຄວາມຮູ້, ຮູ້ຈັກວິທີປະຕິບັດ, ມີຄວາມເຊື່ອ ຕະຫລອດເຖິງຄວາມເຂົ້າໃຈຜະລິດຜົນທາງສິລະປະທັງຫລາຍ ແລະດຳລົງຮັກສາສິ່ງເຫລົ່ານັ້ນໄວ້ ຫລືປ່ຽນແປງໄປໃນເວລາທີ່ເໝາະສົມ. "

1.2. Linton ນັກມະນຸດວິທະຍາຊາວອາເມຣິກາ. ໄດ້ໃຫ້ຄວາມໝາຍວັດທະນະທຳວ່າ: " ວັດທະນະທຳເປັນຜົນຂອງຄວາມຮັບຮູ້, ທັດສະນະຄະຕິ, ແບບແຜນ, ພຶດຕິກຳ ຫລື ລັກສະນະທີ່ສະມາຊິກຮ່ວມກັນ ແລະຖ່າຍທອດໄປຍັງສະມາຊິກຮຸ່ນຕໍ່ໆມາໃນສັງຄົມໃດສັງຄົມໜຶ່ງ ".

ນອກຈາກນີ້, ອົງການວິທະຍາສາດ ແລະວັດທະນະທຳ ( ສປຊ ) ໄດ້ວາງແຜນການພັດທະນາໃໝ່ຄື " ການພັດທະນາໃນສະຕະວັດນີ້, ຕ້ອງໃຫ້ວັດທະນະທຳເປັນສູນກາງຂອງການພັດທະນາ ໂດຍໃຫ້ຄຸນຄ່າຂອງມະນຸດ ແລະວັດທະນະທຳເປັນຫົວໃຈສຳຄັນໃນການພັດທະນາເສດຖະກິດສັງຄົມ ແລະເທັກໂນໂລຢີ. "

ລັດຖະບານລາວຍາມໃດກໍ່ເອົາໃຈໃສ່ປົກປັກຮັກສາ ແລະເສີມຂະຫຍາຍມູນເຊື້ອວັດທະນະທຳຂອງຊາດທີ່ບັນພະຊົນໄດ້ສ້າງໄວ້ ເພື່ອມາສືບຕໍ່ຜັນຂະຫຍາຍໃນການພັດທະນາແນວຄິດສັງຄົມຕາມຍຸກສະໄໝ, ວັດທະນະທຳມີຄວາມໝາຍສຳຄັນຕໍ່ຄວາມຈະເລີນກ້າວໜ້າຂອງມະນຸດຕາມລະບອບໃໝ່.

ສະນັ້ນ, ປັນຍາຊົນ, ນັກຮຽນນັກສຶກສາຕ້ອງເຂົ້າໃຈບົດບາດຄວາມສຳຄັນຂອງວັດທະນະທຳ, ຕັ້ງໃຈຮຽນຮູ້ ແລະເຝິກຝົນຕົນເອງໃຫ້ກາຍເປັນຄົນມີວັດທະນະທຳດີ, ພ້ອມກັນນຳເອົາວັດທະນະທຳເຂົ້າມາພັດທະນາຕົນເອງ ແລະພັດທະນາປະເທດຊາດ, ຊ່ວຍໃຫ້ປະເທດຊາດໝັ້ນຄົງ ແລະຈະເລີນກ້າວໜ້າ.

# ບົດທີ 2

# ຊົນເຜົ່າຕ່າງໆໃນວົງສາຄະນະຍາດແຫ່ງຊາດລາວ ແລະສະພາບ ວັດທະນະທຳລາວແຕ່ລະໄລຍະ

## 1. ຊົນເຜົ່າຕ່າງໆທີ່ປະກອບເຂົ້າເປັນຊາດລາວ

ຊາດລາວແມ່ນຊາດໜຶ່ງທີ່ເກົ່າແກ່ ເຊິ່ງມີທີ່ຕັ້ງພູມລຳເນົາຢູ່ແຫລມອິນດູຈີນແຫ່ງນີ້ ມາຕັ້ງແຕ່ສະໄໝບູຮານຈົນຮອດສະໄໝປັດຈຸບັນບໍ່ຕ່ຳກວ່າ 2500 ປີມາແລ້ວ. ( ສິລາ ວິລະວົງ, 1957: 1) ໂດຍອີງຕາມອີງການທີ່ກ່ຽວຂ້ອງທີ່ໄດ້ສຶກສາຄົ້ນຄວ້າສັບຊ້ອນ, ຈັດແບ່ງຊື່ເອີ້ນຂອງເຜົ່າຕ່າງໆຄືນອີກ ແລະ ອີງຕາມການຕົກລົງເຫັນດີຂອງກອງປະຊຸມຄົ້ນຄວ້າປຶກສາຫາລືຊື່ເອີ້ນຂອງເຜົ່າໃນ ສ.ປ.ປ ລາວ ໃນຄັ້ງວັນທີ 14-15/ 08/ 2000 ແລະວາລະປະຊຸມສະພາແຫ່ງຊາດ ສະໄໝທີ 6 ຊຸດທີ VI ໄດ້ຮັບຮອງວ່າ ປະເທດລາວມີ 49 ເຜົ່າ ແລະມີ 4 ໝວດໃຫຍ່. ສ່ວນການຈັດແບ່ງເປັນ 4 ໝວດໃຫຍ່ນັ້ນ ແມ່ນອີງໃສ່ໝວດທີ່ໃຊ້ພາສາ, ວັດທະນະທຳ ແລະຮີດຄອງປະເພນີທີ່ຄ້າຍຄືກັນ ລາຍລະອຽດມີດັ່ງນີ້:

### 1.1. ໝວດພາສາລາວ-ໄທ

ເຜົ່າລາວ-ໄຕແມ່ນກຸ່ມຄົນສ່ວນໜຶ່ງຂອງເຊື້ອຊາດອາຊີໃຕ້. ບັນດາເຜົ່າລາວ-ໄຕໄດ້ເຂົ້າມາຢູ່ດິນແດນນີ້ ແຕ່ເຫິງນານແລ້ວ, ໄລຍະຜ່ານມາພວກເຮົາເຄີຍເອີ້ນວ່າ " ລາວລຸ່ມ " ມາຮອດສະຕະວັດທີ 8 ບັນດາເຜົ່າລາວ-ໄຕໄດ້ກ້າວຂຶ້ນສູ່ຖານະເປັນເຈົ້າປົກຄອງດິນແດນແຫ່ງນີ້ຢ່າງສິ້ນເຊີງ, ໂດຍແມ່ນຂຸນລໍເປັນເຈົ້າຊີວິດອົງທຳອິດຂອງລາວຢູ່ເມືອງຊວາ ( ບໍ່ແສງຄຳ ວົງດາລາ ພ້ອມຄະນະ 1987:15 )

ສະຕະວັດທີ 14 ຄືປີ 1353 ເຈົ້າຟ້າງຸ່ມມະຫາລາດ ບັນພະບຸລຸດຜູ້ມີຄວາມປີຊາສາມາດໄດ້ທຳການທ້ອນໂຮມບັນດາຫົວເມືອງລາວຕ່າງໆເຂົ້າມາເປັນອັນໜຶ່ງອັນດຽວເອີ້ນວ່າ "ອານາຈັກລາວລ້ານຊ້າງເອະກະພາບ " ເປັນສູນກາງດ້ານວັດທະນະທຳ, ພາສາວັນນະຄະດີ, ເສດຖະກິດ ແລະດ້ານອື່ນໆ. ຈາກນັ້ນ, ປະເທດໄດ້ຮັບການສ້າງສາພັດທະນາໃຫ້ຈະເລີນຮຸ່ງເຮືອງຢ່າງຕໍ່ເນື່ອງໄດ້ຫລາຍສະຕະວັດ.

ໝວດພາສາລາວ-ໄຕປະກອບດ້ວຍ 8 ຊົນເຜົ່າເຊັ່ນ ເຜົ່າລາວ, ເຜົ່າຜູ້ໄທ, ເຜົ່າໄຕ, ເຜົ່າລື້, ເຜົ່າຍວນ, ເຜົ່າຍັ້ງ, ເຜົ່າແຊກ ແລະເຜົ່າໄທເໜືອ. ບັນດາຊົນເຜົ່າທີ່ກ່າວມາຂ້າງເທິງນີ້ ມີພາສາປາກເວົ້າ, ມີຮີດຄອງປະເພນີ, ມີສິລະປະວັດທະນະທຳ, ຄວາມເຊື່ອຖື...ທີ່ແຕກຕ່າງກັນ; ແຕ່ກໍມີລັກສະນະຄ້າຍຄືກັນ ເປັນຕົ້ນວ່າ ສາມາດເຂົ້າໃຈພາສາກັນໄດ້, ສາມາດຄົບຄ້າສະມາຄົມ, ສົນທະນາເຊິ່ງກັນ ແລະກັນ. ບັນດາຊົນເຜົ່າໃນໝວດພາສາລາວ-ໄຕ ສ່ວນຫລາຍແມ່ນເຄື່ອນຍ້າຍມາຈາກຈີນຕອນໃຕ້; ມີແຕ່ເຜົ່າ

ແຂກເທົ່ານັ້ນ ທີ່ເຄື່ອນຍ້າຍມາຈາກແຂວງເຫງ້ອານ ປະເທດຫວຽດນາມ ( ສູນກາງແນວລາວສ້າງຊາດ, 2005: 1-41 ).

### 1.2. ໝວດພາສາມອນ-ຂະແມ

ໝວດພາສາມອນ-ຂະແມ ເປັນກຸ່ມຄົນສ່ວນໜຶ່ງທີ່ສຳຄັນໃນພົນລະເມືອງຂອງລາວ. ໃນໄລຍະຜ່ານມາ ເຄີຍເອີ້ນວ່າ " ລາວເທິງ ຫລືລາວກາງ " ເຂົາເຈົ້າເປັນຄົນດັ້ງເດີມໄດ້ທຳມາຫາກິນໃນແຜ່ນດິນລາວ ແລະຢູ່ຫລາຍແຫ່ງໃນເຂດອາຊີຕາເວັນອອກສ່ຽງໃຕ້ນີ້ ມາແຕ່ດຶກດຳບັນ. ບັນດາເຜົ່າເຫລົ່ານີ້ໄດ້ສ້າງພື້ນຖານວັດທະນະທຳອັນເກົ່າແກ່, ລືຊື່ ແລະ ມະຫັດສະຈັນເຊັ່ນ ທາດເສົາຫີນທີ່ປາກອູ ແຂວງຫລວງພະບາງ, ວັດພູທີ່ແຂວງຈຳປາສັກ, ຈຸ້ມຫລັກຫີນ ເຂດເມືອງເປີນ ແຂວງຫົວພັນ, ໄຫຫີນແຂວງຊຽງຂວາງ, ຄ້ອງລາງ, ຄ້ອງບັ້ງ ( ບໍ່ແສງ ຄຳວົງດາລາ ພ້ອມຄະນະ, 1987: 16-17 ).

ໝວດພາສາມອນ-ຂະແມ ປະກອບດ້ວຍ 32 ຊົນເຜົ່າເຊັ່ນ ເຜົ່າກຶມໝຸ, ເຜົ່າກະຕ່າງ, ເຜົ່າກະຕູ, ເຜົ່າກະຣຽງ, ເຜົ່າຕະຣຽງ, ເຜົ່າກະຣີ, ເຜົ່າຂະແມ, ເຜົ່າສະດາງ, ເຜົ່າຊິງມູນ, ເຜົ່າຍະເຫີນ, ເຜົ່າຕະໂອ້ຍ... ຊົນເຜົ່າໃນໝວດພາສາມອນ-ຂະແມມີພາສາຄຳເວົ້າທີ່ສາມາດສື່ສານກັນໄດ້ຈຳນວນໜຶ່ງ, ມີວິຖີຊີວິດ, ວັນນະຄະດີ, ສິລະປະກຳ ແລະຮີດຄອງປະເພນີ ວັດທະນະທຳສັງຄົມອັນດີງາມ ທີ່ຫລາກຫລາຍ. ບັນດາຊົນເຜົ່າໝວດພາສາມອນ-ຂະແມມີເຊື້ອສາຍພົວພັນກັບຊົນຊາດຂອມ ເຊິ່ງເປັນຊົນເຜົ່າຂອງອິນເດຍບູຮານ. ທ້າຍສະຕະວັດທີ 4 ຊົນຊາດຂອມ ໄດ້ຍ້າຍມາຕັ້ງຖິ່ນຖານຢູ່ເຂດອິນດູຈີນ ຫລືສຸວັນນະພູມເຊິ່ງໝາຍເຖິງ ປະເທດລາວ ( ສູນກາງແນວລາວສ້າງຊາດ, 2005: 48-212 ).

### 1.3. ໝວດພາສາຈີນ-ຕິເບດ

ບັນດາເຜົ່າໃນໝວດພາສາຈີນ - ຕິເບດ ປະກອບດ້ວຍ 7 ຊົນເຜົ່າຄື ຊົນເຜົ່າສີງສີລີ, ເຜົ່າສີລາ, ເຜົ່າລາຫູ, ເຜົ່າໂລໂລ, ເຜົ່າຫໍ້, ເຜົ່າອາຄາ ແລະເຜົ່າຮ່າຍີ່. ຊົນເຜົ່າທັງ 7 ທີ່ກ່າວມາຂ້າງເທິງນີ້ ມີພາສາປາກເວົ້າສະເພາະ, ມີວັດທະນະທຳ, ຮີດຄອງປະເພນີ, ຄວາມເຊື່ອຖື...ທີ່ເປັນເອກະລັກປະຈຳເຜົ່າຢ່າງຫລວງຫລາຍ. ເຜົ່າຕ່າງໆໃນໝວດພາສາຈີນ-ຕິເບດ ມີຕົ້ນກຳເນີດ ແລະມີທີ່ຢູ່ດັ້ງເດີມແມ່ນປະເທດຈີນ. ມີແຕ່ຊົນເຜົ່າສີງສີລີເທົ່ານັ້ນ ທີ່ມີຕົ້ນກຳເນີດຢູ່ປະເທດມຽນມາ ແລະ ເຂົ້າມາລາວສະຕະວັດທີ 16 ( ສູນກາງແນວສ້າງຊາດ, 2005: 212-257 ).

### 1.4. ໝວດພາສາມົ້ງ-ອີວມຽນ

ຊົນເຜົ່າໃນໝວດພາສາມົ້ງ - ອີວມຽນ ປະກອບດ້ວຍ 2 ຊົນເຜົ່າໃຫຍ່ຄື ຊົນເຜົ່າມົ້ງ ແລະຊົນເຜົ່າ

ອີວມຽນ. ແຕ່ລະຊົນເຜົ່າກໍຍັງມີແຊງ ຫລື ຂະແໜງຍ່ອຍອອກໄປອີກເຊັ່ນ ຊົນເຜົ່າມົ້ງມີ: ມົ້ງຂາວ, ມົ້ງລາຍ ແລະ ມົ້ງດຳ; ຊົນເຜົ່າອີວມຽນມີ: ເຜົ່າອີວມຽນ, ເຜົ່າແລນແຕ, ເຜົ່າຢ້າວຂາວ ແລະເຜົ່າພົມໄໝແດງ ເປັນຕົ້ນ. ເຜົ່າມົ້ງ ແລະເຜົ່າອີວມຽນ ມີພາສາປາກເວົ້າທີ່ແຕກຕ່າງກັນ, ມີວັດທະນະທຳ, ມີຮີດຄອງປະເພນີ, ຄວາມເຊື່ອຖື... ຊົນເຜົ່າມົ້ງໄດ້ເຄື່ອນຍ້າຍມາຈາກຕີເບດ, ຊີບີລີ ແລະມົ້ງໂກລີ ເຂົ້າມາຈີນ ແລ້ວເຂົ້າມາສູ່ລາວ, ຫວຽດນາມ ແລະໄທ ເມື່ອປະມານສະຕະວັດທີ 19; ສ່ວນຊົນເຜົ່າອີວມຽນມີຖິ່ນກຳເນີດຢູ່ຕອນກາງ ປະເທດຈີນ ແລະເຄື່ອນຍ້າຍລົງມາສູ່ພາກໃຕ້ ເຂົ້າສູ່ຫວຽດນາມ, ລາວ ແລະໄທ ( ສູນກາງແນວລາວສ້າງ ຊາດ, 2005: 262-267 ).

ເປັນອັນວ່າ ບັນດາເຜົ່າຕ່າງໆທີ່ກ່າວມາຂ້າງເທິງນີ້ ລ້ວນແຕ່ແມ່ນປະຊາຊົນພົນລະເມືອງລາວທີ່ດຳລົງຊີວິດຮ່ວມກັນເປັນເວລາດົນນານ, ເປັນວົງສາຄະນະຍາດລາວອັນດຽວກັນ ແລະພົນລະເມືອງທຸກຄົນມີສິດເທົ່າທຽມກັນທາງດ້ານກົດໝາຍ ເຊິ່ງຢູ່ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ. ຍາມໃດພວກເຮົາກໍຊ່ວຍເຫລືອສາມັກຄີກັນ, ຮ່ວມກັນປົກປັກຮັກສາຜືນແຜ່ນດິນ ແລະພັດທະນາປະເທດຮ່ວມກັນແລກປ່ຽນວັດທະນະທຳ. ພວກເຮົາທຸກຊົນເຜົ່າ ໄດ້ກາຍເປັນເຈົ້າຂອງປະເທດຊາດ, ເປັນເຈົ້າພາສາ, ສິລະປະວັດທະນະທຳ ແລະຮີດຄອງປະເພນີອັນດີງາມໄວ້ຮ່ວມກັນທຸກວັນນີ້. ພ້ອມກັນນັ້ນ, ລັດຖະບານລາວ ( ສະພາແຫ່ງຊາດ) ກໍມີນະໂຍບາຍໃໝ່ທີ່ສອດຄ່ອງຕາມຍຸກສະໄໝ ເຊິ່ງເພິ່ນບໍ່ໃຫ້ເອີ້ນວ່າ ປະເທດລາວມີ 3 ຊົນຊາດຄືແຕ່ກ່ອນອີກແລ້ວ.

247 VII

## 2. ສະພາບວັດທະນະທຳລາວແຕ່ລະໄລຍະ

### 2.1. ໄລຍະກຳເນີດ, ຂະຫຍາຍຕົວ ແລະຈະເລີນຮຸ່ງເຮືອງຂອງວັດທະນະທຳລາວ

ຄວາມຈິງແລ້ວ ວັດທະນະທຳລາວໄດ້ກຳເນີດມາກ່ອນສະໄໝອານາຈັກລາວລ້ານຊ້າງ ແຕ່ຍ້ອນວ່າກ່ອນນັ້ນ ບໍ່ມີຂໍ້ມູນທີ່ບັນທຶກລະອຽດຄືຢູ່ໃນສະໄໝອານາຈັກລ້ານຊ້າງເອກະພາບ. ສະນັ້ນ, ເອກະສານສະບັບນີ້ ຈຶ່ງນຳສະເໜີສະພາບວັດທະນະທຳລາວ ນັບແຕ່ອານາຈັກລາວລ້ານຊ້າງເອກະພາບເມື່ອກາງສະຕະວັດທີ 14 ເປັນຕົ້ນມາເທົ່ານັ້ນ.

ໃນຊຸມປີ 1350 ແມ່ນປີແຫ່ງການຕໍ່ສູ້ ແລະ ທ້ອນໂຮມອານາຈັກລາວທີ່ກະແຈກກະຈາຍໃນເມື່ອກ່ອນ ໃຫ້ເຂົ້າເປັນອັນໜຶ່ງອັນດຽວ ໂດຍພາຍໃຕ້ການນຳພາຂອງພະເຈົ້າຟ້າງຸ່ມ ມະຫາລາດ. ເມື່ອພະອົງໄດ້ຂຶ້ນຄອງລາດ ໃນປີ 1353, ພະອົງສືບຕໍ່ຕໍ່ສູ້ຈົນສຳເລັດໃນປີ 1357 ( ສິລາ ວີລະວົງ, 1957: 70 ). ພາຍຫລັງທີ່ສ້າງຕັ້ງເປັນອານາຈັກລາວລ້ານຊ້າງເອກະພາບ. ພະອົງກໍໄດ້ປັບປຸງ, ສ້າງສາພັດທະນາຂຶ້ນສູ່ລະດັບສູງເທື່ອລະກ້າວ ໂດຍສະເພາະແມ່ນການພັດທະນາພື້ນຖານຊີວິດສັງຄົມ, ບົດບາດຂອງຊາວຜູ້ອອກແຮງງານທຸກຄົນໃນປະເທດ ເຊິ່ງໄດ້ສະແດງອອກຢ່າງຈະແຈ້ງໃນບົດພະລາຊະໂອວາດຂອງເຈົ້າຟ້າ

ງຸ່ມ " ເຊິ່ງໄດ້ສະຫລຸບເອົາເນື້ອໃນຫຍໍ້ດັ່ງນີ້: "....ໃຫ້ທຸກຄົນມີຄວາມເຄົາລົບນັບຖືເຊິ່ງກັນ ແລະກັນ, ໃຜຮ້າຍໃຜດີກໍໃຫ້ເຫັນແຈ້ງ, ໃຫ້ປະຊາຊົນມີຄວາມສາມັກຄີແໜ້ນແກ່ນ, ພ້ອມກັນປົກປັກຮັກສາບ້ານເມືອງໄວ້ໃຫ້ດີ, ບໍ່ໃຫ້ມີສັດຕູພາຍໃນ ແລະພາຍນອກບຽດບຽນຮາວີ, ບໍ່ຜິດຖຽງ ແລະຂ້າຟັນກັນ, ຖ້າຜູ້ໃດມີຄວາມຜິດປະການໃດ ກໍໃຫ້ພິຈາລະນາລົງໂທດຕາມຄວາມເໝາະສົມ, ບໍ່ໃຫ້ນາຍເອົາປະຊາຊົນໄປເປັນຂ້ອຍໃຊ້ ແລະ ບໍ່ໃຫ້ປັບໃໝປະຊາຊົນເກີດຂອບເຂດດັ່ງນີ້ເປັນຕົ້ນ " ( ສິລາ ວິລະວົງ, 1957: 68-70 ).

ສົມເດັດພະຍາຟ້າຫລ້າທໍລະນີ ມະຫາລາດຟ້າງຸ່ມເຈົ້າ ເຫັນໄດ້ຄວາມສຳຄັນຂອງພື້ນຖານແນວຄິດສັງຄົມໃນສະໄໝນັ້ນ ຕ້ອງຊຸ້ນຊ້ຽວພັດທະນາແນວຄິດໃຫ້ເປັນເອກະພາບ ເພື່ອສ້າງຄວາມສາມັກຄີໃຫ້ເປັນປຶກແຜ່ນແໜ້ນໜາໃນສັງຄົມ. ມາເຖິງປີ 1359 ພະອົງຈຶ່ງໄດ້ແຕ່ງລາຊະທູດ, ຂ້າລາຊະການເຊັ່ນ: ພະລາຊະສານ ແລະເຄື່ອງມຸງຄຸນບັນນາການໄປຂໍເອົາສາສະໜາພຸດເຂົ້າມາເຜີຍແຜ່ໃນລາຊະອານາຈັກ, ຂໍອັງເຊີນອົງພະບາງ, ນິມົນພະສົງສະມາເນນ, ນັກປາດອາຈານ, ຄຳພີພະໄຕປີດົກ, ນາຍຊ່າງ, ເຄື່ອງດົນຕີ ແລະສິ່ງອື່ນໆ ມາສະຖິດຢູ່ນະຄອນຊຽງດົງຊຽງທອງ. ຕັ້ງແຕ່ນັ້ນມາ ສາສະໜາພຸດໄດ້ຖືກເຜີຍແຜ່ຢ່າງກວ້າງຂວາງ ແລະເປັນທີ່ຍອມຮັບຂອງປວງຊົນລາວທັງຊາດຄື ມີຜົນປະຕິບັດທາງກິດຈະກຳສັງຄົມ, ຮີດຄອງປະເພນີ, ຂະໜົບທຳນຽມຢ່າງເປັນຮູບປະທຳ ແລະໄດ້ສືບທອດມາເຖິງປັດຈຸບັນນີ້.

ມາຮອດສະໄໝພະເຈົ້າສາມແສນໄທໄຕພູວະນາດ ພະອົງໄດ້ສືບຕໍ່ບຳລຸງຄູນສ້າງສຳສະໜາພຸດໂດຍໄດ້ສ້າງວັດວາອາຮາມຂຶ້ນອີກໃຫ້ຫລາຍກວ່າເກົ່າ, ໄດ້ຮຽບຮຽງໜັງສື ( ພົງສາວະດານ ), ນິທານຂຸນບູລົມລາຊາທິລາດ, ນາງໂຕຕັນ, ທ້າວຮຸ່ງທ້າວເຈືອງ ແລະເລື່ອງອື່ນໆອີກຈຳນວນໜຶ່ງ.

ຕໍ່ມາຮອດລາຊະການຂອງເຈົ້າໂພທິສາລາດ (ໂພທິສານ) ພະອົງມີພະລາຊະໂອງການໃຫ້ລາຊະອາດຍາຍົກເລີກການເຊື່ອຖືຜີໃນປີ 1527, ທໍາລາຍຫໍຜີຫໍແຖນຢູ່ສັງຄະໂລກທີ່ເຈົ້າຕ່າງໆເຄີຍຈັດຕັ້ງນັບຖືບູຊາມາເປັນເວລາເກືອບ 200 ປີນັ້ນ ກໍຖືກມ້າງ ແລ້ວສ້າງວັດຂຶ້ນແທນ ແລະໃຫ້ປະຊາຊົນຫັນມານັບຖືພຸດທະສາສະໜາ, ສ້າງຄວາມເປັນເອກະພາບແຫ່ງຊາດຕາມຄຳຂວັນທີ່ວ່າ " ຊາດ ສາສະໜາ ມະຫາກະສັດ " ( ບໍ່ແສງຄຳ ວົງດາລາ ພ້ອມຄະນະ, 1987:173 ) ພ້ອມນັ້ນ ບັນດາໜັງສືພະແຊກຄຳ, ນິທານພະແກ່ນຈັນ, ນິທານຂຸນບໍລົມ ສະບັບທີ 2 ກໍໄດ້ລິດຈະນາຂຶ້ນ.

ນັບແຕ່ລາຊະການຂອງເຈົ້າໄຊຍະເຊດຖາທິລາດ, ພະອົງໄດ້ຍ້າຍນະຄອນຫລວງ ທີ່ຕັ້ງຢູ່ຊຽງດົງຊຽງທອງ ( ຫລວງພະບາງ ) ມາຕັ້ງລາຊະທານີຢູ່ເມືອງວຽງຈັນໃນປີ ຄ ສ 1560; ພະອົງໄດ້ນຳພາປະຊາຊົນສ້າງເມືອງວຽງຈັນໃຫ້ຈະເລີນຮຸ່ງເຮືອງ, ສ້າງວັດວາອາຮາມເຊັ່ນ ວັດພະແກ້ວ, ວັດອົງຕື້, ວັດອິນແປງ,

ພະທາດພະນົມ, ພະທາດເຈດີ ແລະວັດອື່ນໆຢູ່ທົ່ວລາຊະອານາຈັກ. ຫລໍ່ພະພຸດທະຮູບອົງຕື້, ສິ່ງທີ່ເດັ່ນທີ່ສຸດ ແມ່ນການສ້າງພະທາດຫລວງວຽງຈັນໃຫ້ກາຍເປັນມິ່ງບ້ານຂວັນເມືອງຂອງຊາວລາວລ້ານຊ້າງ.

ມາຮອດສະໄໝພະເຈົ້າສຸລິຍະວົງສາ ເຊິ່ງເປັນໄລຍະທີ່ອານາຈັກລາວລ້ານຊ້າງກ້າວເຂົ້າສູ່ຄວາມຈະເລີນຮຸ່ງເຮືອງສູງສຸດກວ່າເວລາໃດໝົດ. ໄລຍະນີ້ພະອົງໄດ້ນຳພາສ້າງຫໍພະສາດລາຊະວັງຫລວງ, ສ້າງວັດວາອາຮາມ, ສ້າງພື້ນຖານວັດທະນະທຳ, ສິລະປະວັນນະຄະດີ ໃຫ້ມີຄວາມຈະເລີນເຂັ້ມແຂງໃນຂົງເຂດນີ້. ພ້ອມນັ້ນ, ພະອົງໄດ້ສືບຕໍ່ຂະຫຍາຍມູນເຊື້ອ ໂດຍສົ່ງເສີມສິລະປະວັນນະຄະດີຕິດພັນກັບສາສະໜາພຸດ. ດັ່ງນັ້ນ, ບົດວັນນະຄະດີຊຽນຈິ່ງກຳເນີດມາໃນສະໄໝຂອງພະອົງຫລາຍກວ່າໝູ່.

ຮວມຄວາມແລ້ວ, ບັນດາພື້ນຖານວັດທະນະທຳລາວທາງດ້ານວັດຖຸ ແລະຈິດໃຈທີ່ກຳເນີດມານັ້ນ ເຖິງວ່າຈະຜ່ານປະຫວັດສາດຢ່າງລະອຽດລະອ່ຽວກໍຕາມ ແຕ່ມັນຍັງຖືກອະນຸລັກໄວ້ເປັນມໍລະດົກຕົກທອດ ເຊິ່ງເຮົາຍັງໄດ້ປະຕິບັດເປັນປະເພນີລາວເຖິງທຸກວັນນີ້.

## 2.2. ໄລຍະຕົກເປັນຫົວເມືອງຂຶ້ນຂອງຕ່າງຊາດ

### 2.2.1. ໄລຍະຕົກເປັນຫົວເມືອງຂຶ້ນຂອງສັກດີນາສະຫຍາມ

ຫລັງຈາກລາຊະການຂອງເຈົ້າສຸລິຍະວົງສາ ທຳມິກະລາດ ໄດ້ສິ້ນສຸດລົງໃນປີ 1690. ອານາຈັກລາວລ້ານຊ້າງທີ່ຈະເລີນຮຸ່ງເຮືອງໃນເມື່ອກ່ອນເລີ່ມເຂົ້າສູ່ຄວາມແຕກແຍກ, ສັບສົນວຸ້ນວາຍຂຶ້ນເລື້ອຍໆ ເຊິ່ງເປັນສາເຫດໃຫ້ສັກດີນາຕ່າງດ້າວເຂົ້າມາແຊກແຊງພາຍໃນ ໂດຍສະເພາະແມ່ນສັກດີນາສະຫຍາມເຂົ້າມາຍຶດເອົາລາວເປັນຫົວເມືອງຂຶ້ນ.

ມາຮອດປີ 1713 ອານາຈັກລາວລ້ານຊ້າງ ຖືກແຍກອອກເປັນສາມອານາຈັກຄື ອານາຈັກລ້ານຊ້າງວຽງຈັນ, ອານາຈັກລ້ານຊ້າງຫລວງພະບາງ ແລະອານາຈັກລ້ານຊ້າງຈຳປາສັກ. ສະພາບການດັ່ງກ່າວ ເຮັດໃຫ້ສັກດີນາສະຫຍາມຫາທຸກໂອກາດ ເພື່ອເຂົ້າມາແຊກແຊງ - ຮຸກຮານລາວ. ໃນທີ່ສຸດ ມາຮອດປີ 1778-1779, ລ້ານຊ້າງຖືກສະຫຍາມບຸກທຳລາຍ, ໂດຍສະເພາະແມ່ນນະຄອນຫລວງວຽງຈັນ. ພວກມັນໄດ້ກວາດຕ້ອນ ເຊື້ອພະວົງຂອງກະສັດລາວນັບທັງເຈົ້າອານຸວົງ, ເສນາບໍດີ, ຂ້າລາຊະການຊັ້ນຜູ້ໃຫຍ່, ກອງລະຄອນ, ສາວສະໜົມ, ນາຍຊ່າງ ແລະຍັງປຸ້ນສະດົມເອົາວັດຖຸຊັບສົມບັດມີຄ່າຕ່າງໆເຊັ່ນ ພະແກ້ວມໍລະກົດ, ພະແຊກຄຳ, ພະສຸກ, ພະໃສ, ພະເສີມ ໜັງສືຜູກໃບລານ ແລະສິ່ງຂອງອື່ນໆໄປໄທຈົນເກືອບໝົດ. ຈົນມີຄຳເວົ້າເລົ່າລືກັນມາຮອດຊູມື້ນີ້ວ່າ " ເສຍຫົວຊຽງໝຽງ, ເສຍກອງໝາກແຄ້ງ, ເສຍເມັດເຂົ້າໃຫຍ່ທໍ່ໝາກໂຕນ " ເປັນຕົ້ນ. ຈາກຄຳເວົ້ານີ້, ມັນເປັນຄວາມຮູ້ສຶກທີ່ມີຢູ່ໃນຈິດໃຈຂອງປະຊາຊົນລາວທັງຊາດທີ່ສູນເສຍປະເທດ, ເສຍຄວາມເປັນເອກະລາດ, ເອກະພາບ, ເສຍມໍລະດົກທາງວັດທະນະທຳດ້ານວັດຖຸ ແລະຈິດໃຈ.

### 2.2.2. ໄລຍະຕົກເປັນທີ່ເມືອງຂຶ້ນຂອງຈັກກະພັດຝຣັ່ງ ແລະອາເມຣິກາ.

ພວກຈັກກະພັດລ່າເມືອງຂຶ້ນຝຣັ່ງເຂົ້າປົກຄອງລາວນັບແຕ່ປີ 1893-1954. ພວກມັນມີນະໂຍບາຍຈຳກັດລະບົບການສຶກສາ, ລົບລ້າງວັດທະນະທຳລາວເຊັ່ນ ບັງຄັບຄົນລາວຕ້ອງຮຽນພາສາຝຣັ່ງແທນພາສາລາວ,ເອົາວັດທະນະທຳຕາເວັນຕົກມາເຜີຍແຜ່ ແລະປະຕິບັດ, ພະຍາຍາມລົບລ້າງປະເພນີທີ່ດີງາມ, ຈຳກັດບໍ່ໃຫ້ຄົນລາວຮ່ຳຮຽນ ແລະເຮັດວຽກນຳຝຣັ່ງ. ຊ້ຳບໍ່ໜຳ ພວກມັນຍັງຍຶດ ແລະຂຸດຄົ້ນເອົາຊັບໃນດິນສິນໃນນ້ຳ, ເງິນຄຳ, ວັດຖຸມີຄ່າໄປປະເທດພວກມັນ, ເຮັດໃຫ້ມູນມໍລະດົກວັດທະນະທຳທີ່ເຫລືອໄວ້ນັ້ນຍິ່ງເຫລືອໜ້ອຍລົງ. ສະພາບການເຊັ່ນນີ້ ໄດ້ກະທົບເຖິງແນວຄິດຈິດໃຈຂອງຄົນລາວ ແລະວັດທະນະທຳລາວບໍ່ໜ້ອຍ.

ໃນປີ 1955 ຈັກກະພັດອາເມຣິກາເຂົ້າມາມີບົດບາດຢູ່ລາວແທນຝຣັ່ງ ໂດຍອ້າງເຫດຜົນວ່າ " ຕ້ານການຮຸກຮານຂອງຝ່າຍກອມມູນິດ " ໄລຍະນີ້ສະພາບສັງຄົມ, ວັດທະນະທຳລາວຍິ່ງເພີ່ມຄວາມສັບສົນວຸ້ນວາຍຂຶ້ນຕື່ມ ເຮັດໃຫ້ວົງການໄວໜຸ່ມລາວບໍ່ໜ້ອຍ ຮຽນເອົາແນວຄິດ, ວັດທະນະທຳແບບເສລີນິຍົມ ທີ່ບໍ່ສອດຄ່ອງກັບຮີດຄອງປະເພນີລາວ, ໂດຍສະເພາະແມ່ນແບບແຜນການດຳລົງຊີວິດທີ່ເສລີ. ເອົາເນຍນອກປະເພນີ, ມີໂຮງໂສເພນີ, ເສບຢາເສບຕິດ, ແນວຄິດນິຍົມນຸ່ງຖືແບບຕາເວັນຕົກຫລາຍຂຶ້ນ. ພວກມັນແບ່ງແຍກຄົນລາວ, ຈຳແນກຊົນຊາດຊົນເຜົ່າ, ເຮັດໃຫ້ເສຍຄວາມສາມັກຄີ. ນອກຈາກນີ້ພວກມັນຍັງຍຶດເອົາວັດຖຸມີຄ່າ, ພະພຸດທະຮູບ ແລະສິ່ງອື່ນໆໄປອີກ. ເຖິງວ່າອຳນາດການປົກຄອງ ແລະປະຊາຊົນລາວພະຍາຍາມສູ້ຊົນຕໍ່ສູ້ ເພື່ອປົກປັກຮັກສາໄວ້ເຊິ່ງວັດທະນະທຳອັນດີງາມຂອງຊາດລາວໄວ້ ແຕ່ບໍ່ສາມາດສະກັດກັ້ນອິດທິພົນວັດທະນະທຳເຫລົ່ານັ້ນ. ສະນັ້ນ, ວັດທະນະທຳຕາເວັນຕົກຈຶ່ງໄດ້ແຊກຊຶມເຂົ້າໃນວັດທະນະທຳລາວທີ່ບໍ່ອາດປະຕິເສດໄດ້ໃນຍຸກສະໄໝຕໍ່ມາ.

ເວົ້າລວມແລ້ວ ໃນໄລຍະທີ່ປະເທດຊາດຢູ່ໃນສະພາບທີ່ສູນເສຍຄວາມເປັນເອກະລາດໃຫ້ຊາດອື່ນທີ່ກ່າວມາຂ້າງເທິງນີ້. ມັນໄດ້ເຮັດໃຫ້ມໍລະດົກວັດທະນະທຳຂອງຊາດຖືກທຳລາຍ ແລະສູນເສຍໄປຢ່າງໜັກໜ່ວງ, ແຕ່ບໍ່ສາມາດທຳລາຍຈິດໃຈອັນດີງາມຂອງປະຊາຊົນລາວ; ປະຊາຊົນລາວທຸກຊົນເຜົ່າໄດ້ພ້ອມກັນຮັກສາ, ສົ່ງເສີມ ແລະສ້າງວັດທະນະທຳຂອງຕົນໃຫ້ຈະເລີນງອກງາມຂຶ້ນເລື້ອຍໆ.

### 2.3. ສະພາບວັດທະນະທຳລາວພາຍຫລັງສ້າງຕັ້ງເປັນ ສ. ປ.ປ. ລາວ.

ນັບແຕ່ປະເທດຊາດໄດ້ຮັບການປົດປ່ອຍໃນປີ 1975 ເປັນຕົ້ນມາ. ພັກ-ລັດຖະບານລາວຍາມໃດ

ກໍໄດ້ເອົາໃຈໃສ່ໃນວຽກງານແນວຄິດ ວັດທະນະທຳສັງຄົມເປັນບັນຫາສຳຄັນໃນການພັດທະນາປະເທດຊາດຕາມລະບອບໃໝ່. ເຮັດໃຫ້ພື້ນຖານວັດທະນະທຳໃໝ່ມີລັກສະນະຊາດ, ກ້າວໜ້າ ແລະທັນສະໄໝ ເປັນຂອງປວງຊົນລາວທັງຊາດ.

ບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງທັງພາກລັດ ແລະເອກະຊົນ, ຂະແໜງການວັດທະນະທຳແຕ່ສູນກາງລົງຮອດທ້ອງຖິ່ນໃນທົ່ວປະເທດ ສົມທົບກັບປະຊາຊົນຜູ້ອອກແຮງງານທຸກເຜົ່າປະສານໃຈກັນ ຂຸດຄົ້ນ, ຟື້ນຟູ, ກໍ່ສ້າງ ແລະ ສົ່ງເສີມວັດທະນະທຳຂອງຊາດຢ່າງຕັ້ງໜ້າ, ສຶກສາແນວຄິດຄຸນສົມບັດ, ສົນທຳປະຕິວັດໃນຖັນແຖວພະນັກງານລັດຖະກອນ, ປະຊາຊົນ, ນັກຮຽນ, ນັກສຶກສາ, ປັນຍາຊົນ.

ຮີດຄອງປະເພນີອັນດີງາມຂອງເຜົ່າຕ່າງໆໃນທົ່ວປະເທດ, ໄດ້ຮັບການຮັກສາ ແລະສົ່ງເສີມໃນທ່າຕັ້ງໜ້າ, ນຳເອົາການສຶກສາ, ວັດທະນະທຳໃນລະບອບໃໝ່ເຂົ້າໄປເຖິງຊົນເຜົ່າ, ເຮັດໃຫ້ເຂົາເຈົ້າໄດ້ຮຽນຮູ້ສິ່ງໃໝ່ໆຫລາຍຂຶ້ນ. ຄຸນນະພາບຊີວິດຂອງປະຊາຊົນບັນດາເຜົ່າໄດ້ຮັບການພັດທະນາດີຂຶ້ນຕາມລຳດັບ. ພ້ອມນັ້ນ ຄອບຄົວແບບຢ່າງວັດທະນະທຳກໍເກີດຂຶ້ນຢ່າງຫລວງຫລາຍ ຕາມນະໂຍບາຍສ້າງບ້ານວັດທະນະທຳຂອງລັດຖະບານ, ສັງຄົມມີຄວາມສະຫງົບຂັ້ນພື້ນຖານ.

ມີຫໍສະໝຸດ ແລະຫໍພິພິດຕະພັນ, ຂັ້ນທ້ອງຖິ່ນ, ຫໍວາງສະແດງມູນເຊື້ອ, ສະໂມສອນ, ຫໍວັດທະນະທຳແຫ່ງຊາດ, ສວນສາທາລະນະ, ສວນສັດ, ສວນວັດທະນະທຳບັນດາເຜົ່າ ແລະສິ່ງອື່ນໆ ເຊິ່ງສະແດງໃຫ້ເຫັນເຖິງຄວາມເອົາໃຈໃສ່ຂອງລັດຖະບານໃນການອະນຸລັກ, ທ້ອນໂຮມຜະລິດຕະພັນ, ຊັບສົມບັດທາງປັນຍາຂອງປະຊາຊົນລາວ.

ປັບປຸງ ແລະກໍ່ສ້າງສາທາລະນູປະໂພກ, ຂຸດຄົ້ນ, ພັດທະນາບັນດາສະຖານທີ່ທ່ອງທ່ຽວທາງວັດທະນະທຳ ແລະທຳມະຊາດຢູ່ທ້ອງຖິ່ນຕ່າງໆ, ສະຖານທີ່ທາງປະຫວັດສາດ, ຮ່ອງຮອຍວັດຖຸບູຮານ, ປູຊະນີຍະສະຖານ, ບູຮານສະຖານ, ບູຮານວັດຖຸ...ໄດ້ຮັບການປົວແປງ, ກໍ່ສ້າງຈາກທຶນພາຍໃນ ແລະສາກົນ. ເມືອງບູຮານຫລວງພະບາງ ທາງອຸຍເນສໂກ ( UNESCO ) ໄດ້ຮັບຮອງເອົາເປັນມໍລະດົກໂລກໃນປີ 1995 ແລະຮັບຮອງເອົາຜາສາດຫີນວັດພູຈຳປາສັກ ເປັນມໍລະດົກໂລກໃນປີ 2002. ພ້ອມນັ້ນບູຮານສະຖານກຸ່ມໄຫຫີນຢູ່ຊຽງຂວາງ ທາງລັດຖະບານລາວກໍສະເໜີຕໍ່ອົງການ UNESCO ເພື່ອພິຈາລະນາ ເປັນມໍລະດົກໂລກອີກແຫ່ງໜຶ່ງໃນອະນາຄົດນີ້.

ໜັງສືຜູກໃບລານທີ່ເປັນບູຮານວັດຖຸ, ເປັນມໍລະດົກອັນລ້ຳຄ່າທາງຊັບສົມບັດທາງປັນຍາຂອງຊາດ

ໄດ້ຮັບການສຳຫລວດ-ຂຶ້ນທະບຽນຢູ່ທົ່ວປະເທດນັບແຕ່ປີ 1993-2003; ເປັນຕົ້ນແມ່ນໂຄງການຮ່ວມມື ລາວ-ເຢຍລະມັນ ເປັນໂຄງການປົກປັກຮັກສາໜັງສືຜູກໃບລານລາວ, ໄດ້ໄປວາງສະແດງຢູ່ປະເທດ ເຢຍລະມັນ, ໄດ້ຮັບການຍົກຍ້ອງຈາກນານາຊາດ, ເປັນໂຄງການວັດທະນະທຳທີ່ຍິ່ງໃຫຍ່, ເປັນທົດສະວັດແຫ່ງວັດທະນະທຳ. ພ້ອມນັ້ນ ໜັງສືຕ່າງໆກາຍເປັນສູນຂໍ້ມູນທາງດ້ານປະຫວັດສາດ, ພາສາ, ວັນນະຄະດີ, ອັກສອນສາດ, ຮີດຄອງປະເພນີ, ກົດໝາຍ... ເພື່ອການສຶກສາຄົ້ນຄວ້າວິທະຍາສາດສັງຄົມ, ມີການລົດຈະນາ, ປະລິວັດ, ແປໜັງສືບູຮານອອກເຜີຍແຜ່ຕໍ່ສັງຄົມ ແລະສຶກສາຮ່ຳຮຽນໃນໂຮງຮຽນຢ່າງເປັນຮູບປະທຳຍິ່ງຂຶ້ນກວ່າເດີມ.

ວຽກງານຫັດຖະກຳ ກໍໄດ້ຮັບການເສີມຂະຫຍາຍທົວຄິດປະດິດສ້າງ, ສີໄມ້ລາຍມືຢ່າງກວ້າງຂວາງ. ການຈັກສານ, ຕຳຫູກທໍໄໝ, ຫຍິບປັກທັກແສ່ວ, ປັ້ນໝໍ້ຫລໍ່ໄຫ, ເຄື່ອງວິຈິດຕະກຳໄດ້ຮັບການສົ່ງເສີມ, ຊຸກຍູ້ຈາກພາກລັດ ແລະເອກະຊົນ, ຜະລິດໃຫ້ເປັນສິນຄ້າວັດທະນະທຳຢູ່ພາຍໃນ ແລະຕ່າງປະເທດ.

ວຽກງານສິລະປະວັນນະຄະດີໄດ້ຮັບການຟື້ນຟູຄື ແລະສົ່ງເສີມຢ່າງຕັ້ງໜ້າ ນັບແຕ່ສູນກາງລົງຮອດທ້ອງຖິ່ນ, ມີວົງດົນຕີພື້ນເມືອງ, ວົງດົນຕີຮ່ວມສະໄໝ ແລະດົນຕີສາກົນເກີດຂຶ້ນຢ່າງຫລວງຫລາຍ. ທາງພາກລັດຈັດຕັ້ງມີການປະກວດສິລະປະບັນດາເຜົ່າທົ່ວປະເທດຫລາຍຄັ້ງ, ກວດສອບວັນນະຄະດີ, ກາບກອນ, ເລື່ອງສັ້ນ. ຈັດຕັ້ງເສັງເປົ່າແຄນທົ່ວນະຄອນຫລວງວຽງຈັນ ແລະ ລະດັບຊາດເປັນປະຈຳ. ມີນັກປະພັນ, ນັກຂຽນສະໝັກຫລິ້ນ ແລະ ອາຊີບເກີດຂຶ້ນມາເລື້ອຍໆ. ບັນດາຜະລິດຕະພັນທາງດ້ານສິລະປະເຊັ່ນ: ບົດຮ້ອງ, ບົດຂັບລຳ, ເພງ, ບົດຟ້ອນ, ລະຄອນ, ລຳເລື່ອງໄດ້ຜະລິດເປັນສິນຄ້າ. ພ້ອມນີ້, ບັນດາມູນເຊື້ອວັດທະນະທຳວັນນະຄະດີໄດ້ຜະລິດເປັນພິມຮູບເງົາ, ສາລະຄະດີ, ວີດີໂອ, ວາລະສານອອກເຜີຍແຜ່ ແລະຈຳໜ່າຍນັບມື້ນັບຫລາຍທາງດ້ານປະລິມານ ແລະຄຸນນະພາບ. ນັກສິລະປິນ, ສື່ສານມວນຊົນ, ຄູອາຈານ, ພະສົງເປັນສື່ໂຄສະນາເຜີຍແຜ່ວັດທະນະທຳຢູ່ໃນສັງຄົມ.

ຄຽງຄູ່ກັບການຂຸດຄົ້ນ ແລະສົ່ງເສີມວັດທະນະທຳຢູ່ພາຍໃນ. ພວກເຮົາຍັງໄດ້ມີການພົວພັນ, ຮ່ວມມືແລກປ່ຽນວັດທະນະທຳກັບນານາປະເທດ. ພວກເຮົາໄດ້ຮ່ຳຮຽນເອົາສິ່ງທີ່ດີງາມຍອດຍິ່ງຈາກຫລາຍປະເທດໃນໂລກໃນທາງກົງ ແລະທາງອ້ອມຢ່າງປະດິດສ້າງ, ສອດຄ່ອງກັບສະພາບສັງຄົມລາວ, ທັງເປັນການເສີມສ້າງຊີວິດ ແລະວັດທະນະທຳໃນຍຸກໃໝ່ໃຫ້ກ້າວໜ້າ ແລະທັນສະໄໝ.

## 3. ວັດທະນະທຳຕ່າງປະເທດມີອິດທິພົນຕໍ່ວັດທະນະທຳລາວ

ວັດທະນະທຳລາວໄດ້ກຳເນີດ ແລະຂະຫຍາຍຕົວມາເປັນເວລາຍາວນານ ໂດຍຜ່ານຂະບວນ

ວິວັດທາງປະຫວັດສາດຫລາຍໄລຍະທີ່ລະອຽດລະອ່ຽວ. ມາຮອດປັດຈຸບັນ ວັດທະນະທຳລາວນັບມື້ນັບມີການພັດທະນາເປີດກວ້າງ, ປັບປຸງ, ສົ່ງເສີມ ບໍ່ສະເພາະແຕ່ມູນເຊື້ອຢູ່ພາຍໃນເທົ່ານັ້ນ; ແຕ່ມັນໄດ້ພົວພັນກັບຫລາຍປະເທດຕາມສະພາບ ແລະເງື່ອນໄຂຕົວຈິງຂອງຍຸກສະໄໝ. ດັ່ງນັ້ນ, ວັດທະນະທຳລາວຈຶ່ງມີການປະສົມປະສານກັບວັດທະນະທຳໂລກທັງດ້ານໃນໂຕ ແລະນອກໂຕອີກດ້ວຍ.

### 3.1. ວັດທະນະທຳຈີນ

ປະເທດລາວໃນສະໄໝບູຮານນະການ ຈົນຮອດສະໄໝປັດຈຸບັນ ມີທີ່ຕັ້ງຕິດກັບປະເທດຈີນ. ອີງຕາມປະຫວັດສາດຊົນຊາດລາວມີເຄົ້າກຳເນີດມາຈາກພູອານໄຕ ອັນເປັນດິນແດນຂອງມົງໂກລີ ແລະຈີນຕິດຈອດກັນ; ຈາກປະຫວັດສາດອັນຍາວນານມາໄດ້ຫລາຍພັນປີນັ້ນ, ເຊື້ອຊາດລາວຈຶ່ງໄດ້ເຄື່ອນຍ້າຍມາຢູ່ໜອງແສ-ເສສວນ ກ່ອນຈະມາຕັ້ງເປັນອານາຈັກລາວລ້ານຊ້າງເມື່ອປີ 1353 ທີ່ນະຄອນຊຽງດົງ-ຊຽງທອງ ( ຫລວງພະບາງປັດຈຸບັນ )

ລາວໄດ້ຮັບອິດທິພົນມາຈາກວັດທະນະທຳຈີນ ເປັນຕົ້ນແມ່ນການເຊື່ອຖືດວງວິນຍານບັນພະບຸລຸດ, ວິນຍານທຳມະຊາດ, ຜີຟ້າຜີແຖນ ແລະດວງວິນຍານອື່ນໆ. ຄວາມເຊື່ອຖືນີ້ນັບວ່າເປັນຄວາມເຊື່ອຫລື ເປັນສາສະໜາເກົ່າແກ່ດັ້ງເດີມຂອງລາວ ແລະໄດ້ສືບເນື່ອງມາເຖິງສູ່ມື້ນີ້ ກ່ອນຈະມີການເຊື່ອມປະສານກັບສາສະໜາພຸດຕໍ່ມາ.

### 3.2. ວັດທະນະທຳອິນເດຍ

ວັດທະນະທຳລາວ, ໄດ້ຮັບອິດທິພົນຈາກວັດທະນະທຳອິນເດຍ ມາແຕ່ສະໄໝບູຮານນະການ ໂດຍສະເພາະ ແມ່ນການຮັບເອົາການເຜີຍແຜ່ສາສະໜາພາມ, ສາສະໜາພຸດ ແລະຄວາມເຊື່ອຕ່າງໆຈາກອິນເດຍ, ເຮັດໃຫ້ແນວຄິດ ແລະຄວາມເຊື່ອທາງສາສະໜາເຫລົ່ານັ້ນ ໄດ້ແຊກຊຶມເຂົ້າໃນສັງຄົມ, ຮີດຄອງປະເພນີ, ວິຖີຊີວິດຂອງຄົນລາວຈົນສືບມາເຖິງຊູ່ມື້ນີ້ ແລະໄດ້ປະຕິບັດຢູ່ຮີດສິບສອງຄອງສິບສີ່, ເປັນຕົ້ນແມ່ນພາສາ ແລະຕົວອັກສອນ, ວັນນະຄະດີ. ເຖິງແມ່ນວ່າ ອັກສອນ ແລະພາສາບາລີ-ສັນສະກິດບໍ່ເປັນພາສາບັນທຶກທາງການແລ້ວກໍຕາມ, ແຕ່ຄົນລາວຍັງໄດ້ຮຽນພາສາບາລີ. ສັບໃນພາສາບາລີ-ສັນສະກິດ ຍັງໄດ້ດັດແປງໃຊ້ເຂົ້າໃນການຂີດຂຽນ, ການເວົ້າຢູ່ໃນວົງການວິຊາການຢ່າງຫລວງຫລາຍ, ວັນນະຄະດີອິນເດຍຖືກນຳມາຮຽນຢູ່ໂຮງຮຽນຊັ້ນຕ່າງໆເຊັ່ນ ເລື່ອງພະລັກພະລາມ, ເລື່ອງນາງຕັນໄຕ ຕະຫລອດເຖິງຮີດຄອງປະເພນີ, ການເຮັດບຸນຕ່າງໆຫລາຍຢ່າງ ກໍໄດ້ຮັບອິດທິພົນຈາກວັດທະນະທຳອິນເດຍສະໄໝບູຮານເຊັ່ນກັນ. ອາດເວົ້າໄດ້ວ່າ ວັດທະນະທຳອິນເດຍ, ສາສະໜາພຸດ ເປັນບໍ່ເກີດວັດທະນະທຳ ແລະຮີດຄອງປະເພນີລາວອີກອັນໜຶ່ງ.

### 3.3. ວັດທະນະທຳບັນດາປະເທດໃກ້ຄຽງ

ວັດທະນະທຳບັນດາປະເທດໃກ້ຄຽງ ໂດຍສະເພາະປະເທດທີ່ມີຊາຍແດນຕິດຈອດກັນເຊັ່ນ ກຳປູເຈຍ, ພະມ້າ, ໄທ, ຫວຽດນາມ, ຈີນ ພວກເຮົາຍ່ອມໄດ້ຮັບອິດທິພົນທາງວັດທະນະທຳເຊິ່ງກັນ ແລະກັນຂອງບັນດາປະເທດເຫລົ່ານີ້ໃນເງື່ອນໄຂຕ່າງໆທີ່ບໍ່ອາດປະຕິເສດໄດ້ເຊັ່ນ ພາສາ, ການເມືອງ, ເສດຖະກິດ, ການສຶກສາ, ຂໍ້ມູນຂ່າວສານ, ເທັກໂນໂລຍີ, ການຄ້າ, ການແລກປ່ຽນວັດທະນະທຳ, ການໄປມາຫາສູ່ ແລະຢ່າງອື່ນໆ ເຊິ່ງບາງເງື່ອນໄຂກໍແມ່ນຄວາມຈຳເປັນໃນດ້ານການພົວພັນກັບນານາປະເທດ ເພື່ອຄວາມມິດຕະພາບ ແລະຄວາມສາມັກຄີ; ແຕ່ບາງເງື່ອນໄຂກໍໄດ້ຮັບອິດທິພົນ ຍ້ອນຄວາມຈະເລີນຮຸ່ງເຮືອງຂອງປະເທດໃກ້ຄຽງ ທີ່ເຮັດໃຫ້ປະເທດອ້ອມຂ້າງໄດ້ຮັບຂໍ້ມູນຂ່າວສານຍ້ອນສື່ຕ່າງໆ.

ມາຮອດປີ 1997 ລາວໄດ້ເຂົ້າເປັນສະມາຊິກກຸ່ມອາຊຽນ, ຍິ່ງເຮັດໃຫ້ການພົວພັນກັບບັນດາປະເທດກວ້າງໄກຂຶ້ນຕື່ມອີກລະດັບໜຶ່ງ. ໃນບັນດາປະເທດອາຊຽນດ້ວຍກັນກໍມີການແລກປ່ຽນ, ຖອດຖອນບົດຮຽນຕ່າງໆໃນພາກພື້ນເຊັ່ນ ກອງປະຊຸມໃຫຍ່ອົງການລັດຖະສະພາ ບັນດາປະເທດອາຊຽນ (AIPO) ຄັ້ງທີ 26 ໂດຍສະພາແຫ່ງຊາດລາວໄດ້ຮັບກຽດເປັນເຈົ້າພາບ ແຕ່ວັນທີ 19-22 ກັນຍາ 2005. ກອງປະຊຸມໄດ້ບັນລຸການປຶກສາຫາລື ແລະກຳນົດມາດຕະການຕ່າງໆ ເພື່ອຊຸກຍູ້ພາລະກິດອາຊຽນໃຫ້ມີສັນຕິພາບ ແລະແຂງແກ່ນພາຍໃຕ້ 3 ເສົາຄໍ້ຄື " ຄວາມໝັ້ນຄົງຂອງອາຊຽນ, ເສດຖະກິດອາຊຽນ ແລະສັງຄົມ-ວັດທະນະທຳອາຊຽນ " ( ຄັດຈາກໜັງສືພິມວຽງຈັນໃໝ່, ສະບັບ 26 ກັນຍາ, 2005: 10 ) ເປັນສິ່ງແນ່ນອນແລ້ວວ່າ ອິດທິພົນຂອງປະເທດເຫລົ່ານີ້ ກໍມີຜົນສະທ້ອນຕໍ່ວັດທະນະທຳລາວ ຍ້ອນມີການຮ່ວມມື, ການຊ່ວຍເຫລືອ ແລະແລກປ່ຽນການສຶກສາ, ວັດທະນະທຳລະຫວ່າງປະເທດ.

### 3.4. ວັດທະນະທຳຕາເວັນຕົກ ແລະປະເທດອື່ນໆໃນໂລກ.

ວັດທະນະທຳລາວ ໄດ້ຮັບຜົນສະທ້ອນຈາກວັດທະນະທຳຕາເວັນຕົກ ໃນບາງປະເທດ. ເປັນຕົ້ນແມ່ນວັດທະນະທຳຝຣັ່ງ, ອາເມຣິກາ ຍ້ອນວ່າລາວເຄີຍຕົກເປັນຫົວເມືອງຂຶ້ນແກ່ສອງປະເທດນີ້ມາກ່ອນເກືອບໜຶ່ງສະຕະວັດ. ພວກມັນເອົາວັດທະນະທຳຕາເວັນຕົກມາເຜີຍແຜ່ຢູ່ລາວເຊັ່ນ ການນຸ່ງຖື, ພາສາ, ອາຫານການກິນ, ຮີດຄອງປະເພນີບາງຢ່າງ.

ມາຮອດທຸກວັນນີ້ ວັດທະນະທຳຕາເວັນຕົກ ບໍ່ຈຳກັດແຕ່ສອງຊາດເທົ່ານັ້ນ, ແຕ່ມັນຍັງມີຊາດອື່ນໆໃນທະວີບເອີຣົບອີກດ້ວຍ. ຍ້ອນການພົວພັນທາງດ້ານການເມືອງ, ເສດຖະກິດ ແລະການສຶກສາທາງວິທະຍາສາດ, ເທັກໂນໂລຍີ. ອີກປະການໜຶ່ງ ປະເທດລາວໄດ້ມີການພັດທະນາຊັບພະຍາກອນມະນຸດ, ສ້າງບຸກຄະລາກອນ, ຈຳເປັນຕ້ອງຮຽນຮູ້ພາສາຕ່າງປະເທດຫລາຍຂຶ້ນເຊັ່ນ ພາສາອັງກິດ, ຝຣັ່ງ

ແລະພາສາໃນແຖບອາຊີ... ສະນັ້ນ, ການຮຽນຮູ້ພາສາຕ່າງປະເທດຈຶ່ງປຽບເໝືອນການຮຽນຮູ້ວັດທະນະທຳນານາປະເທດ ແລະ ໃນໂລກອີກດ້ວຍ.

ເຖິງວ່າຊາດລາວຈະໄດ້ຮັບອິດທິພົນຈາກປະເທດອື່ນໆດັ່ງທີ່ກ່າວມາຂ້າງເທິງກໍຕາມ. ຊາດລາວກໍຍັງເປັນເຈົ້າຂອງປະເທດຊາດ, ເປັນເຈົ້າຂອງວັດທະນະທຳ ແລະເດັດຂາດບໍ່ຍອມໃຫ້ວັດທະນະທຳຂອງຊາດຖືກຢຽບຢ່ຳ ຫລືສູນຫາຍໄປຈາກສັງຄົມລາວ. ເຖິງວ່າເຮົາໄດ້ຮັບເອົາວັດທະນະທຳຕ່າງຊາດກໍຕາມ, ແຕ່ກໍມີການເລືອກເຟັ້ນໃຫ້ສອດຄ່ອງກັບສັງຄົມລາວ ເພື່ອຮັກສາເອກະລັກວັດທະນະທຳລາວໄວ້ໃຫ້ໝັ້ນຄົງ.

# ບົດທີ 3

# ລັກສະນະຂອງວັດທະນະທຳ, ພິທີກຳຊີວິດ ແລະຮີດຄອງປະເພນີລາວ

## 1. ສະເໜີລວມລັກສະນະວັດທະນະທຳລາວ

ລັກສະນະລວມຂອງວັດທະນະທຳລາວ ເປັນເຄື່ອງໝາຍບົ່ງບອກ, ເປັນສັນຍະລັກທີ່ໝັ້ນຄົງ ເຊິ່ງສະແດງໃຫ້ເຫັນວ່າ ບັນດາສິ່ງວັດຖຸຕ່າງໆຕະຫລອດເຖິງແນວຄິດຈິດໃຈທັງໝົດເຫລົ່ານັ້ນ ເປັນຂອງຄົນພາຍໃນຊາດ ໂດຍແມ່ນກຸ່ມຄົນຕ່າງໆ ຫລືແມ່ນສະມາຊິກສັງຄົມນັ້ນ ພ້ອມກັນຄົ້ນຄິດປະດິດສ້າງ, ດັດສ້າງ, ອະນຸລັກໄວ້ ແລະເສີມຂະຫຍາຍ. ພ້ອມນັ້ນ, ທຸກຄົນໃນຊາດກາຍເປັນເຈົ້າຂອງກຳມະສິດຕໍ່ຜະລິດຕະພັນທາງດ້ານວັດຖຸ ແລະຈິດໃຈນັ້ນ.

ວັດທະນະທຳຂອງຊາດໃດໜຶ່ງ, ເຖິງວ່າຊາດນັ້ນໆ ຈະມີຄວາມຫລາກຫລາຍທາງດ້ານເຜົ່າພັນກໍຕາມ ແຕ່ມັນກໍຍ່ອມມີການສະແດງອອກເຖິງຄວາມເຂົ້າໃຈ, ມີພຶດຕິກຳຕໍ່ກັນຢ່າງຖືກຕ້ອງ, ມີວິທີຮຽນຮູ້ ແລະປະຕິບັດທີ່ມີລັກສະນະລວມສູນເອກະພາບ ແລະສາມາດດຳລົງຄົງຕົວຢູ່ຮ່ວມກັນກັບທຸກກຸ່ມຄົນໃນຊາດໄດ້ພາຍໃຕ້ຮີດຄອງປະເພນີ, ລະບຽບກົດໝາຍ ເປັນຕົ້ນ . ເຖິງວ່າຊາດລາວມີຫລາຍຊົນເຜົ່າ ແລະ ມີຫລາຍພາສາກໍຕາມ, ແຕ່ໄດ້ກຳນົດພາສາລາວເປັນພາສາແຫ່ງຊາດ (ພາສາກາງ) ໃຊ້ທາງລັດຖະການ. ທຸກຊົນເຜົ່າໄດ້ສຶກສາຮຽນຮູ້ ແລະຄົບຄ້າສະມາຄົມໃນສັງຄົມ.

ຄົນລາວມີແບບແຜນການດຳລົງຊີວິດ ແລະ ຮີດຄອງປະເພນີອັນດີງາມທີ່ເປັນເອກະລັກປະຈຳຊາດຂອງຕົນເອງມາແຕ່ດົນນານເຊັ່ນ ທີ່ຢູ່ອາໄສເຄຫາສະຖານ, ອາຫານການກິນ, ການນຸ່ງຖື, ກິລິຍາມາລະຍາດ, ສິລະປະດົນຕີ, ພາສາວັນນະຄະດີ... ເຊິ່ງຈະໄດ້ນຳສະເໜີບາງລັກສະນະດັ່ງຕໍ່ໄປນີ້.

### 1.1. ລັກສະນະຊາດ

ທ່ານ ສະຕາລິນ ໄດ້ໃຫ້ທັດສະນະວ່າ " ຊາດແມ່ນຊຸມນຸມຄົນ ທີ່ໝັ້ນຄົງ ກຳເນີດໃນປະຫວັດສາດ ໂດຍອີງໃສ່ຊຸມນຸມດ້ານພາສາ, ດ້ານດິນດອນຕອນຫຍ້າ, ດ້ານຊີວິດ ເສດຖະກິດ ແລະຮູບຖານຈິດຕະສາດ ສະແດງອອກໃນຊຸມນຸມຊົນດ້ານວັດທະນະທຳ. " ( ຄຳສອນ ທອງມີໄຊ ແລະ ກົງຈັນ ພະເມືອງ, 2002: 26 )

ລັກສະນະຊາດຍັງແມ່ນການສັງຮວມທຸກຈຸດພິເສດສະເພາະ, ສີສັນ, ວິຖີຊີວິດ, ການທຳມາຫາ

ກິນ, ນ້ຳໃຈເສຍສະລະຮ່ວມກັນຂອງຄົນພາຍໃນຊາດ. ແຕ່ລະຊາດລ້ວນແຕ່ມີວັດທະນະທຳເປັນຂອງຕົນເອງມາໂດຍກຳເນີດ. ການມີວັດທະນະທຳເປັນຂອງຕົນເອງນັ້ນ, ມັນເປັນສິ່ງບົ່ງບອກເຖິງຄວາມເປັນເອກະລັກ. ໂດຍສະເພາະດ້ານວັດທະນະທຳຂອງຊາດ.

ລັກສະນະຊາດທີ່ສະແດງອອກໃນວັດທະນະທຳ ແມ່ນບັນດາຜະລິດຕະພັນທາງດ້ານວັດຖຸ ແລະ ຈິດໃຈທັງໝົດທີ່ປະຊາຊົນທຸກເຜົ່າພັນພາຍໃນຊາດພ້ອມກັນຜະລິດຂຶ້ນມາ.

**ກ. ລັກສະນະທີ່ຢູ່ອາໄສ ( ເຮືອນຢູ່ ).**

ເຮືອນຂອງຄົນລາວເປັນເຮືອນຮ້ານ, ມີເສົາ, ມີຂີ່ ແລະເຮືອນມີແປສູງ ມຸງດ້ວຍຫຍ້າຄາ, ປູ ແລະ ແອ້ມດ້ວຍຝາໄມ້ປ່ອງ, ເສົາໄມ້ແກ່ນລ້ອນ, ມີເຊຍ ແລະຊານ ຫລືເຮືອນມຸງ ແລະ ແອ້ມດ້ວຍແປ້ນ. ລັກສະນະເຮືອນຂອງຄົນລາວ ເຊິ່ງສະແດງອອກໃນການແບ່ງເຂດແດນຂອງເຈົ້າຟ້າງຸ່ມໃນປີ 1351 ວ່າ: " ພົນລະເມືອງທີ່ຢູ່ເຮືອນມີຮ້ານກວ້ານ ມີເສົາ ( ຄືເຮືອນຍົກພື້ນ ) ໃຫ້ເປັນພົນລະເມືອງລາວ " ( ສີລາ ວີລະວົງ, 1957: 53 ). ຢູ່ເຮືອນຄົນ, ກິນເຂົ້າຈ້ຳແມ່ນຄົນລາວ

ຂ. ລັກສະນະອາຫານການກິນ

ແຕ່ສະໄໝບູຮານ, ຄົນລາວກິນເຂົ້າໜຽວ ໂດຍໃຊ້ມືປັ້ນເຂົ້າໜຽວຈ້ຳອາຫານ ຈົນມີຄຳກ່າວຂານກັນສືບມາເຖິງທຸກວັນນີ້ວ່າ: " ນອນເຮືອນຮ້ານ ເປົ່າແຄນ ກິນເຂົ້າໜຽວຈ້ຳປາແດກ ແກງໜໍ່ໄມ້ໃສ່ຜັກຂະແຍງ ຍາມມື້ແລງກິນປີ້ນປາດຸກນາ ແລະສົ້ມປານ້ອຍ ລົມພັດເຢັນຈ້ອຍໆໃນຖຽງນານ້ອຍທົ່ວນາ " . ຄົນລາວທຸກຄົນໄດ້ຍິນຄຳເວົ້ານີ້ ກໍ່ບໍ່ຈຳເປັນບອກວ່າ ນີ້ແມ່ນອາຫານການກິນຂອງຊາດໃດ. ມາຮອດຊູ່ມື້ນີ້ ເຖິງວ່າ ສັງຄົມຈະມີການພັດທະນາປ່ຽນແປງໄປຫລາຍກໍຕາມ, ແຕ່ອາຫານການກິນ ແລະເຄື່ອງປຸງອາຫານ ຍັງເປັນທີ່ນິຍົມບໍລິໂພກ ທີ່ຄົງຄວາມໜຽວແໜ້ນ ໂດຍສະເພາະຄືການກິນເຂົ້າໜຽວຈ້ຳປາແດກ ແລະແກງໜໍ່ໄມ້ເປັນຕົ້ນ.

24 / VII
ຫ້າມຈຳໜ່າຍ

ຄ. ລັກສະນະການນຸ່ງຖື

ຄົນລາວຮູ້ຈັກປະດິດສ້າງເສື້ອຜ້າອາພອນແຕ່ສະໄໝບູຮານເຊັ່ນ ແຜ່ນແພ ແລະເຄື່ອງນຸ່ງທີ່ເຮັດຈາກຝ້າຍ ແລະໄໝມ້ອນ ທີ່ລ້ຽງເອົາເອງ. ປັດຈຸບັນນີ້ ເຖິງແມ່ນວ່າ ປະເທດຈະມີການພັດທະນາປ່ຽນແປງໄປຫລາຍກໍຕາມ, ແຕ່ຄວາມເປັນເອກະລັກຂອງຊາດໃນການນຸ່ງຖືຄົນລາວຍັງຮັກສາໄວ້ຢູ່ຕະຫລອດມາ ໂດຍສະເພາະ ແມ່ຍິງລາວຍັງເປັນຜູ້ຜະລິດເຄື່ອງນຸ່ງຫົ່ມ, ແຜນແພ, ເປັນຜູ້ຮັກສາມູນເຊື້ອຂອງຊາດໄວ້ ເຊິ່ງເຫັນແຈ້ງທີ່ສຸດໃນບຸນປະເພນີຕ່າງໆຂອງຊາດ. ພ້ອມນັ້ນ, ໃນແຕ່ລະປີຍັງໄດ້ຈັດໃຫ້ມີການປະກວດນາງສາວອາພອນລາວ, ວາງສະແດງອາພອນລາວຢູ່ພາຍໃນ ແລະຕ່າງປະເທດ ເພື່ອເປັນການສົ່ງເສີມວັດທະນະທຳ-ສີໄມ້ລາຍມືຂອງຄົນລາວ.

## ໒. ລັກສະນະການປາກເວົ້າກິລິຍາມາລະຍາດ.

ຄົນລາວເປັນຄົນທີ່ມີນິດໄສໃຈຄໍຊຽບງ່າຍ, ນອບນ້ອມຖ່ອມໂຕ, ບໍ່ມັກຄວາມຮຸນແຮງຕໍ່ກັນ, ມີຄວາມເຄົາລົບເຊິ່ງກັນແລະກັນ ດັ່ງທີ່ສະແດງອອກໃນບົດ ວັນນະຄະດີເລື່ອງ: ກາບປູ່ສອນຫລານ- ຫລານສອນປູ່, ຍ່າສອນຫລານ-ຫລານສອນຍ່າ, ອິນທິຍາຍສອນລູກ, ຄຳສອນເລືອກເມຍ, ວາຈາສອນໃຈ ແລະເລື່ອງອື່ນໆ, ບັນດາບົດວັນນະຄະດີດັ່ງກ່າວ ໄດ້ຮວບຮວມມາລະຍາດການປະພຶດຕົນຂອງຄົນລາວໃນສັງຄົມ ຕົວຢ່າງບາງຕອນຂຽນວ່າ:

" ...ຫລົວ ແລະພົນ — ຢ່າເອົາຮອງນັ່ງ
ເຊື້ອນັ່ງຕ່ຳ — ຢ່າໄດ້ນັ່ງສູງ
ເຊື້ອລຸງຕາ — ໃຫ້ຍຳປານແກ້ວ
ປູ່ສັ່ງແລ້ວ — ຫລານຫລ້າຈື່ຈຳ "

( ສະຖາບັນຄົ້ນຄວ້າວັດທະນະທຳ, ປູ່ສອນຫລານ-ຫລານສອນປູ່, 1999:1 )

" ຢ່າໄດ້ທຳຕົນພັງງ — ທົວພຽງອ້າງອຶ່ງ — ນັ້ນເນີ
ມັນຫາກເຫລືອແຕ່ຮ້ອງ — ຕາຍຍ້ອນປາກໂຕ — ນັ້ນແລ້ວ
ໃຫ້ຄ່ອຍພິຈານແຈ້ງ — ທຳນຽມນັກປາດ
ຫາກຊ່າງຢູ່ຫາກຊ່າງເອົ້າ — ອໍລະອ້ວນອຸ່ນເຮືອນ
ເປັນຍິງຊາຍເພິ່ນຫາກຍ້ອງ — ສະຫຸມຍົນນຳປາກ
ຝຸງໝູ່ນັກປາດເຈົ້າ — ສະທ້ານສູ້ຊື່ນດອມ
ອັນໜຶ່ງ ຢ່າໄດ້ຊີ້ວງຮອງ — ສະເໜີກາກິນໄຂ່
ຢ່າໄດ້ເປັນດັ່ງນົກໄສ່ຮ້ອງ — ລາງເຂັ້ມຂົ້ມແຂງ..."

( ກະຊວງຖະແຫລ່ງຂ່າວ ແລະວັດທະນະທຳ, ອິນທິຍາສອນລູກ, 1985: 16 )

ຍ້ອນຄົນລາວເຮົາມີວັດທະນະທຳ, ຮີດຄອງປະເພນີອັນດີງາມມາແຕ່ໃດໆມາ, ມັນຈຶ່ງເປັນພື້ນຖານໃນການສິດສອນ, ສຶກສາອົບຮົມບົ່ມເພາະໃຫ້ຄົນເຮົາ ຮູ້ຈັກຮັກແພງສາມັກຄີກັນ ແລະຢູ່ຮ່ວມກັນຢ່າງສັນຕິ. ສະນັ້ນ, ສັງຄົມລາວຈຶ່ງບໍ່ຄ່ອຍມັກໃຊ້ຄວາມຮຸນແຮງຕໍ່ກັນ. ດ້ວຍເຫດນີ້ສັງຄົມຈຶ່ງງຽບສະຫງົບດີ.

## ໓. ລັກສະນະສິລະປະດົນຕີ.

ຊາດລາວເປັນຊາດໜຶ່ງທີ່ເກົ່າແກ່, ມີສິລະປະດົນຕີພື້ນເມືອງເປັນເອກະລັກປະຈຳຊາດຂອງຕົນມາແຕ່ດົນນານແລ້ວເຊັ່ນ ແຄນ, ລະໜາດ, ກອງ, ຄ້ອງ, ແສ່ງ, ປີດຊໍ້, ປີດລຳ, ປີດຟ້ອນ... ບັນດາ

ສິລະປະດົນຕີອັນດີງາມນີ້ ລ້ວນແຕ່ໄດ້ອະນຸລັກຮັກສາ, ສືບທອດ ແລະສົ່ງເສີມໃຫ້ມີລັກສະນະຮູບປະທຳ ໃນສັງຄົມລາວຢ່າງກວ້າງຂວາງເຊັ່ນ ເວທີກວດສອບສິລະປະພື້ນເມືອງ ແລະດົນຕີພື້ນເມືອງ ເປັນຕົ້ນ. ໂດຍສະເພາະແມ່ນການອະນຸລັກ ແລະສົ່ງເສີມສຽງແຄນລາວ ເຊິ່ງທາງກະຊວງຖະແຫລ່ງຂ່າວ ແລະ ວັດທະນະທຳໄດ້ຈັດຕັ້ງການສອນເປົ່າແຄນ ແລະປະກວດເປົ່າແຄນເປັນປະຈຳທຸກປີ.

**ສ. ລັກສະນະພາສາວັນນະຄະດີ.**

ຄົນລາວມີພາສາວັນນະຄະດີລາວຄຽງຄູ່ກັບຊາດຕົນມາແຕ່ສະໄໝບູຮານນະການແລ້ວ. ຄົນລາວໃຊ້ພາສາລາວເປັນພາຫະນະສື່ສານ, ບັນທຶກຈົດກ່າຍບົດວັນນະຄະດີປາກເປົ່າ ແລະວັນນະຄະດີຂຽນຮັບໃຊ້ສັງຄົມຕະຫລອດມາ. ພາສາວັນນະຄະດີເປັນມໍລະດົກວັດທະນະທຳຂອງຊາດ. ສະນັ້ນ, ບັນພະບຸລຸດລາວ, ພັກແລະລັດຖະບານ ໄດ້ພະຍາຍາມຕໍ່ສູ້ເອົາພາສາລາວເປັນພາສາທາງລັດຖະການ, ເຮັດໃຫ້ທຸກຊົນເຜົ່າໃນ ວົງຄະນາຍາດແຫ່ງຊາດລາວໄດ້ຮຽນຮູ້ພາສາລາວ, ວັນນະຄະດີລາວ ແລະພ້ອມກັນປົກປັກຮັກສາໃຫ້ໝັ້ນຄົງ. ພາສາລາວເປັນມໍລະດົກ, ເປັນຊັບສິນທາງປັນຍາ ແລະເປັນຜະລິດຕະພັນຕ່ອນໃຫຍ່ຂອງຊາດ. ສະນັ້ນ, ຄົນລາວທຸກຄົນຕ້ອງພູມໃຈໃນການຮຽນຮູ້, ເຂົ້າໃຈສຶກສາຄົ້ນຄວ້າ ແລະປະຕິບັດຕໍ່ພາສາຂອງຕົນຢ່າງຖືກຕ້ອງ.

**ຊ. ລັກສະນະທາງຮີດຄອງປະເພນີ.**

ຄົນລາວມີຮີດຄອງປະເພນີອັນເກົ່າແກ່ດີງາມມາເປັນເວລາເຫີງນານ, ເປັນວັດທະນະທຳອັນລ້ຳຄ່າທີ່ຄົນລາວພາກັນປະຕິບັດສືບຕໍ່ກັນມາເຊັ່ນ ປະເພນີບູຊາສິ່ງສັກສິດ, ບູຊາຜີ, ຂຶ້ນເຮືອນໃໝ່, ເສຍເຂາະກຳ, ບາສີສູ່ຂວັນ, ມີຮີດ 12 ຄອງ 14... ຕາມປະເພນີທີ່ດີງາມ ແລະຕາມຄວາມເຊື່ອຖືຂອງຄົນລາວບູຮານ. ບັນດາຮີດຄອງປະເພນີດັ່ງກ່າວນີ້ ມີບາງສ່ວນຍັງສືບຕໍ່ປະຕິບັດຈົນມາເຖິງປັດຈຸບັນ. ສິ່ງທີ່ພາໃຫ້ເກີດມີຮີດຄອງປະເພນີດັ່ງກ່າວນີ້ ຍ້ອນພື້ນຖານຄວາມເຊື່ອຂອງຄົນລາວ ຈາກສາມສິ່ງມູດຖານຄື ສາສະໜາຜີ (Animism ) ສາສະໜາພາມ ( Brahmnism ) ແລະສາສະໜາພຸດ ( Buddhism ). ( ສຳລິດ ບົວສີສະຫວັດ, ອ້າງໃນອາລຸນ ສີລັດຕະນະກຸນ ພ້ອມຄະນະ, 2001:15 )

## 1.2. ລັກສະນະຊົນເຜົ່າ

ຊົນເຜົ່າແມ່ນກຸ່ມຄົນໜຶ່ງ ທີ່ມີຄວາມຄ້າຍຄືກັນທາງດ້ານພາສາປາກເວົ້າ, ຮີດຄອງປະເພນີ, ວິຖີຊີວິດຢູ່ຮ່ວມກັນໃນສັງຄົມ ພາຍໃຕ້ກົດໝາຍຂອງປະເທດໃດໜຶ່ງມາໃນປະຫວັດສາດ. ຊາດລາວກໍແມ່ນຊາດໜຶ່ງປະກອບດ້ວຍຫລາຍຊົນເຜົ່າທີ່ດຳລົງຊີວິດຢູ່ຮ່ວມກັນ, ແຕ່ລະເຜົ່າກໍມີວັດທະນະທຳສະເພາະຂອງເຜົ່າຕົນເຊັ່ນ ພາສາ, ວັນນະຄະດີ ( ບົດເລື່ອງ, ນິທານປະຈຳເຜົ່າ ), ຮີດຄອງປະເພນີ, ເຄື່ອງໃຊ້ສອຍ, ອຸປະກອນການຜະລິດ, ເຄື່ອງນຸ່ງຫົ່ມ, ອາຫານການກິນ, ທີ່ຢູ່ອາໄສ, ສັນຍະລັກປະຈຳເຜົ່າ ແລະ

ສິ່ງອື່ນໆ. ຕົວຢ່າງ: ແມ່ຍິງເຜົ່າມົ້ງນຸ່ງກະໂປ່ງປະດັບປະດາມີລວດລາຍ ຫລືນຸ່ງໂສ້ງຄືກັນກັບຜູ້ຊາຍ, ມັກກິນເຂົ້າຈ້າວ; ດ້ານດົນຕີ ມີແຄນມົ້ງ, ເປົ່າໃບໄມ້ ເປັນຕົ້ນ; ມີພາສາມົ້ງເປັນພາສາປະຈຳເຜົ່າ, ມີບຸນກິນຈຽງ ເປັນປະເພນີໃຫຍ່ປະຈຳເຜົ່າ ແລະສິ່ງອື່ນໆ. ເຜົ່າກຶມມຸ ມີພາສາກຶມມຸເປັນພາສາປະຈຳເຜົ່າ, ສ່ວນສິລະປະປະຕິມາກຳມີຄ້ອງບັ້ງ ຫລືຄ້ອງຕະຄອງ, ມີຮີດຄອງປະເພນີທີ່ຫລາກຫລາຍຕິດພັນກັບຄວາມເຊື່ອຖືຜີເຊັ່ນ ຮີດກິນເຫລົ້າໄຫ, ຮີດກິນເຂົ້າໃໝ່, ຮີດກິນຜັກກິນໜໍ່...ຕົວຢ່າງ: ຮີດກິນຜັກກິນໜໍ່:

" ອັນນີ້ແມ່ນຮີດກິນຜັກກິນໜໍ່ ຢ່າວ່າບໍ່ຮູ້ບໍ່ຍິນ
ຕັ້ງແຕ່ນີ້ເມືອໜ້າ ພໍ່ແມ່ດຳເຮືອນ
ລູກຫລານຈະເລີ່ມກິນຜັກກິນໜໍ່ ພໍ່ແມ່ຈະໄດ້ກິນຜັກກິນໜໍ່
ຢ່າເວົ້າຢ່າວ່າ ທັກທ້ອງແນວບໍ່ດີບໍ່ງາມ
ຫຍ້າຢູ່ໄຮ່ຢ່າໃຫ້ຮົກ ກົກເຂົ້າຢູ່ໄຮ່ໃຫ້ຂຽວງາມ..."

( ສຸກສະຫວ່າງ ສີມະນາ, 1997: 33 )

ມາຮອດຂູ່ນີ້, ບຸນປະເພນີຂອງຊົນເຜົ່າໃນວົງຄານະຍາດແຫ່ງຊາດລາວ ໂດຍສະເພາະແມ່ນບຸນກິນຈຽງຂອງເຜົ່າມົ້ງ ແລະບຸນປີໃໝ່ຂອງເຜົ່າກຶມມຸ, ພັກ ແລະລັດໄດ້ສົ່ງເສີມໄປໃນທາງສ້າງສັນທີ່ດີ ແລະເປັນບຸນປະຈຳຊາດຂອງລາວອີກບຸນໜຶ່ງ.

## 1.3. ລັກສະນະທ້ອງຖິ່ນ

ລັກສະນະທ້ອງຖິ່ນ ໝາຍເຖິງສະພາບແວດລ້ອມ ທາງດິນຟ້າອາກາດຂອງວັດທະນະທຳ, ເສດຖະກິດ, ການຜະລິດ ແລະສິ່ງອື່ນໆຂອງແຕ່ລະເຂດແຂວງ. ບັນດາແຂວງໃນປະເທດ ລາວເຮົາມີທີ່ຕັ້ງພູມລຳເນົາຕ່າງກັນເຊັ່ນ ຢູ່ທາງພາກເໜືອເປັນເຂດພູຜາປ່າດົງ, ອາກາດໜາວ. ທາງພາກກາງ ແລະພາກໃຕ້ ເປັນເຂດພູພຽງ ແລະທົ່ງພຽງ, ເປັນອູ່ເຂົ້າອູ່ປາອຸດົມສົມບູນຫລາຍ. ສະນັ້ນ, ແນ່ນອນແລ້ວວ່າຮີດຄອງປະເພນີ, ນິດໄສໃຈຄໍ, ອາຫານການກິນ, ສິລະປະວັນນະຄະດີ, ວາດການດຳລົງຊີວິດຢູ່ແຕ່ລະທ້ອງຖິ່ນ ມີຄວາມແຕກຕ່າງກັນ ແລະຫລາກຫລາຍໄປຕາມແຕ່ລະທ້ອງຖິ່ນຂອງໃຜມັນ.

ບາງຕົວຢ່າງຂອງອາຫານການກິນຢູ່ທາງພາກເໜືອມັກກິນເອາະ, ແກງ, ຊຸບຜັກ, ລາບ, ແຈ່ວປາບຶກ, ແຈ່ວບອງ... ສ່ວນສິລະປະທ້ອງຖິ່ນແມ່ນຂັບເປັນຕົ້ນຕໍເຊັ່ນ ຂັບທຸ້ມຫລວງພະບາງ, ຂັບຊຳເໜືອ, ຂັບພວນ, ຂັບລື້, ຂັບງື້ມ... ສ່ວນອາຫານການກິນທາງພາກກາງ ແລະພາກໃຕ້ມັກກິນປົ່ນ, ຕົ້ມ, ກ້ອຍ, ແກງສົ້ມ... ການປຸງແຕ່ງນິຍົມໃສ່ປາແດກ; ສິລະປະທ້ອງຖິ່ນແມ່ນລຳເປັນຕົ້ນຕໍເຊັ່ນ ລຳເຕີ້ຍ, ລຳຄອນສະຫວັນ, ລຳຜູ້ໄທ, ລຳມະຫາໄຊ, ລຳສາລະວັນ, ລຳສີພັນດອນ, ລຳໂສມ...ດັ່ງນັ້ນ ຈຶ່ງມີຄຳກ່າວຂານກັນວ່າ ອາຫານໄທເໜືອ, ຂັບໄທເໜືອ. ອາຫານໄທໃຕ້, ລຳໃຕ້ ຫລືຄຳເວົ້າທີ່ວ່າ " ໝາກພ້າວນາໄຊ, ປີ້ງໄກ່ນາປົ່ງ ເຫລົ້າຂາວເມືອງຄົງ ລຳວົງສາລະວັນ ".

ການຈຳແນກວັດທະນະທຳທ້ອງທີ່ກ່າວມານັ້ນ, ບໍ່ແມ່ນການແບ່ງແຍກທ້ອງຖິ່ນໃຫ້ເສຍຄວາມສາມັກຄີ, ແຕ່ຍົກຂຶ້ນມາໃຫ້ເຫັນວັດທະນະທຳຂອງທ້ອງຖິ່ນ. ພ້ອມນັ້ນ ເພື່ອເຮັດໃຫ້ຄົນຮຸ່ນໃໝ່ໄດ້ຮັບຮູ້, ຮຽນຮູ້ ແລະເຂົ້າໃຈເຊິ່ງກັນແລະກັນ; ຈາກນັ້ນ ກໍພ້ອມກັນຮັກສາ ແລະພັດທະນາໃຫ້ຍາວນານ ຄຽງຄູ່ທ້ອງຖິ່ນຂອງຕົນເອງ ແລະຄຽງຄູ່ຊາດຕະຫລອດໄປ.

### 1.4. ລັກສະນະສືບທອດ

ສືບທອດແມ່ນການປົກປັກຮັກສາ ບັນດາຜະລິດຕະພັນທາງດ້ານວັດຖຸ ແລະ ຈິດໃຈທີ່ເປັນມູນເຊື້ອວັດທະນະທຳອັນເກົ່າແກ່ ດີງາມຂອງບັນພະບຸລຸດ, ປູ່ຍ່າຕາຍາຍໄດ້ສ້າງມາແຕ່ສະໄໝກ່ອນຈົນເຖິງປັດຈຸບັນ ແລະຕໍ່ໄປໃນອະນາຄົດຢ່າງມີລັກສະນະຕັ້ງໜ້າ ແລະຜັນຂະຫຍາຍໃຫ້ສອດຄ່ອງກັບສະພາບສັງຄົມແຕ່ລະຍຸກສະໄໝທີ່ແຕກຕ່າງກັນ.

ວັດທະນະທຳທີ່ກຳເນີດມາແຕ່ສະໄໝບູຮານ ໄດ້ຖືກຮັກສາໄວ້ໃນສັງຄົມລາວຈົນເຖິງປັດຈຸບັນ ເຊັ່ນວ່າ ຄົນລາວໜຶ້ງເຂົ້າໃສ່ໄວ້ໃນແອບ ຫລື ຕິບ, ລັກສະນະຮູບຊົງຂອງເຮືອນຢູ່ອາໄສເປັນເຮືອນຮ້ານ. ອາຫານການກິນມີເອາະ, ກ້ອຍ, ລາບ. ຜູ້ຊາຍໄວ້ຊົງຜົມສັ້ນ, ແມ່ຍິງໄວ້ຊົງຜົມຍາວ. ການຕຳຫູກທໍ່ໄໝ, ເສື້ອຜ້າອາພອນ, ເຄື່ອງນຸ່ງຫົ່ມ; ການເຄົາລົບນັບຖືໃນທາງສາສະໜາ ຕະຫລອດເຖິງການປະຕິບັດຮີດຄອງປະເພນີອັນດີງາມ, ຮີດ 12 ຄອງ 14 ແລະມາລະຍາດທາງສັງຄົມອື່ນໆ ແມ່ນພວກເຮົາໄດ້ສືບທອດມາແຕ່ບູຮານທັງໝົດ.

ມາຮອດປັດຈຸບັນ ເຖິງວ່າສັງຄົມຈະມີການພັດທະນາໃນດ້ານວິທະຍາສາດ ແລະເທັກໂນໂລຢີໄປຫລາຍແລ້ວກໍຕາມ. ແຕ່ພວກເຮົາຍັງຮັກສາໄວ້ ເຊິ່ງຮີດຄອງປະເພນີອັນດີງາມ. ປະຊາຊົນລາວຍັງປະຕິບັດຮີດຄອງປະເພນີຂອງຊາດຕະຫລອດມາ, ພຽງແຕ່ວ່າຢູ່ບາງທ້ອງຖິ່ນບັນດາປະເພນີທີ່ມີລັກສະນະຫຍໍ້ທໍ້ ຫລື ກີດໜ່ວງຕໍ່ການພັດທະນາເສດຖະກິດສັງຄົມ ກໍອາດຖືກປ່ຽນແປງ ຫລືປັບປຸງໃຫ້ສອດຄ່ອງກັບສັງຄົມໃໝ່ທີ່ມີການພັດທະນາ.

ຄຳວ່າ " ສືບທອດ " ບໍ່ແມ່ນທຸກປາກົດການທີ່ກຳເນີດມາແຕ່ສະໄໝບູຮານແນວໃດ, ສະໄໝປັດຈຸບັນຕ້ອງມີແນວນັ້ນ. ສືບທອດມັນກໍມີທັງຮັກສາສິ່ງເກົ່າໄວ້ ແລະກໍມີທັງປະດິດສ້າງປະຍຸກໃຊ້ຕາມລະບອບສັງຄົມ. ຖ້າເຮົາບໍ່ສືບທອດ, ເຮົາກໍຈະບໍ່ມີອັນຢັ້ງຢືນ, ບໍ່ມີເອກະລັກຂອງຊາດ; ໃນທີ່ສຸດກໍເສຍວັດທະນະທຳ. ຖ້າພວກເຮົາບໍ່ປັບປຸງພັດທະນາໃຫ້ມັນທັນສະໄໝຂຶ້ນ ຊາດເຮົາກໍຈະຫລ້າຫລັງ, ບໍ່ທັນກັບຍຸກສະໄໝ. ສະນັ້ນ ລັກສະນະສືບທອດຈຶ່ງມີທັງຮັກສາໄວ້ໃຫ້ໝັ້ນຄົງ ແລະບໍ່ໃຫ້ສູນເສຍໄປ. ພ້ອມນັ້ນ

ກໍມີການປັບປຸງ-ດັດແປງ ແລະສິ່ງເສີມ ທັງຜັນຂະຫຍາຍໃຫ້ຖືກຕ້ອງສອດຄ່ອງໄປຕາມຍຸກສະໄໝສັງຄົມ; ທັງນີ້ກໍຍ້ອນວ່າ ການພັດທະນາເສດຖະກິດສັງຄົມ ກໍແມ່ນການພັດທະນາວັດທະນະທໍາ, ພັດທະນາແນວຄິດ ແລະພັດທະນາຄຸນນະພາບຊີວິດ.

## 2. ບາງບັນຫາກ່ຽວກັບວັດທະນະທໍາລາວ

### 2.1. ສາສະໜາກັບວັດທະນະທໍາລາວ

ເມື່ອເວົ້າເຖິງສາສະໜາ, ກ່ອນເຈົ້າຟ້າງຸ່ມມະຫາລາດທ້ອນໂຮມເປັນອານາຈັກລາວລ້ານຊ້າງເອກະພາບໃນກາງສະຕະວັດທີ 14. ປະຊາຊົນລາວບູຮານພາກັນນັບຖືຜີເຊັ່ນ ຜີຟ້າ, ຜີແຖນ, ພະອິນ, ເທວະດາ, ຜີພໍ່, ຜີແມ່, ຜີດໍາ... ມີການນັບຖືບູຊາດວງວິນຍານບັນພະບຸລຸດຜູ້ຕາຍໄປແລ້ວ. ຄວາມເຊື່ອຖືຜີມີຜົນສະທ້ອນຕໍ່ພື້ນຖານວັດທະນະທໍາລາວ ໃນບັນດາຮີດຄອງປະເພນີບູຮານທ້ອງຖິ່ນບໍ່ໜ້ອຍ ເຊັ່ນ ການບະຜີ, ການບວງສວງດວງວິນຍານ, ການໄລ່ຜີອອກຈາກຄົນ, ການກໍາເນີດໝໍຜີ, ໝໍເຢົາ, ໝໍເສັ່ນ, ໝໍດູ... ມາຮອດປັດຈຸບັນນີ້ ປະຊາຊົນລາວຫລາຍທ້ອງຖິ່ນຍັງມີຄວາມເຊື່ອຖືຮີດຄອງປະເພນີເຫລົ່ານີ້ຢູ່ພໍສົມຄວນ ໂດຍສະເພາະແມ່ນທ້ອງຖິ່ນຊົນນະບົດທີ່ຫ່າງໄກສອກຫລີກເປັນຕົ້ນ.

ຕໍ່ມາເມື່ອປະມານ ພ.ສ. 600 ( ຄ.ສ. 57 ) ສາສະໜາພາມອັນເປັນລັດທິສາສະໜາເກົ່າຂອງພວກອິນດູ ຫລືອິນເດຍໄດ້ແຜ່ຂະຫຍາຍເຂົ້າມາໃນປະເທດອິນດູຈີນ ໂດຍມີພາມຜູ້ໜຶ່ງຊື່ວ່າ ໂກນທັນຍະ - ເປັນຜູ້ນໍາມາ( ສີລາ ວີລະວົງ, 1957: 6 ) ຕໍ່ມາຄົນລາວກໍໄດ້ຮັບອິດທິພົນຈາກສາສະໜາດັ່ງກ່າວ. ສາສະໜາພາມມີຜົນສະທ້ອນຕໍ່ວັດທະນະທໍາ, ຮີດຄອງປະເພນີໃນສັງຄົມລາວບໍ່ໜ້ອຍເຊັ່ນ ການບາສີສູ່ຂວັນ, ການບູຊາສິ່ງສັກສິດ, ການປາບຜີ, ໄລ່ຜີ... ດ້ວຍເວດມົນຄາຖາທີ່ເປັນພາສາບາລີ.

ມາຮອດປີ 1359 ກະສັດລາວ ພະເຈົ້າຟ້າງຸ່ມມະຫາລາດ ຈຶ່ງໄດ້ແຕ່ງລາຊະທູດລົງໄປຂໍເອົາພະພຸດທະສາສະໜາ ລັດທິລັງກາວົງ ຫລື ຫີນະຍານມາຈາກປະເທດຂະເໝນມາເຜີຍແຜ່ໃນລ້ານຊ້າງ ( ສີລາ ວີລະວົງ, 1957: 72 ). ເມື່ອສາສະໜາພຸດໄດ້ມີບົດບາດສໍາຄັນໃນການສ້າງແນວຄິດສັງຄົມ ເພື່ອຄວາມເປັນເອກະພາບ. ສາສະໜາພຸດກໍໄດ້ກາຍເປັນສາສະໜາປະຈໍາຊາດໃນສະໄໝນັ້ນ ແລະກໍຖືເອົາແນວຄິດສາສະໜາພຸດເປັນສ່ວນສໍາຄັນ ໃນການສຶກສາອົບຮົມແນວຄິດຈິດໃຈ ເປັນຕົ້ນແມ່ນ ສິນ 5 ຄື 1 ປານາ ( ບໍ່ຂ້າສັດຕັດຊີວິດ) 2 ອະທິນາ ( ບໍ່ໃຫ້ລັກ ) 3 ກາເມ ( ບໍ່ໃຫ້ເສບສົມເມຍ ຫລືຜົວຄົນອື່ນ ) 4 ມຸສາ ( ບໍ່ໃຫ້ຕົວະຍົວະຫລອກລວງ ) 5 ສຸລາເມ ( ບໍ່ໃຫ້ເສບສົມດື່ມຂອງມຶນເມົາ ). ສາສະໜາພຸດສັ່ງສອນໃຫ້ຄົນເຮົາສ້າງແຕ່ຄວາມດີ, ຫລີກເວັ້ນການທໍາຄວາມຊົ່ວທັງປວງ, ທໍາຈິດໃຈໃຫ້ຜ່ອງໃສ, ຮູ້ຈັກບາບ, ບຸນ, ຄຸນ ແລະໂທດ ຫລືທໍາດີທໍາໄດ້ ທໍາຊົ່ວໄດ້ຊົ່ວ ເປັນຕົ້ນ. ພ້ອມນັ້ນ ສາສະໜາພຸດຍັງເປັນພາກສ່ວນໜຶ່ງທີ່ຊຸກຍູ້ໃນການພັດທະນາວັດທະນະທໍາ, ຮີດຄອງປະເພນີລາວໃນແຕ່ລະໄລຍະອີກດ້ວຍ.

ປັດຈຸບັນນີ້ ເຖິງແມ່ນວ່າ ສາສະໜາພຸດບໍ່ໄດ້ຖືກກຳນົດໄວ້ຢູ່ໃນລັດຖະທຳມະນູນຂອງລາວ ( Constitution ) ໃຫ້ເປັນສາສະໜາປະຈຳຊາດເໝືອນອະດີດກໍ່ຕາມ. ແຕ່ໃນສະພາບສັງຄົມລາວແລ້ວເຫັນວ່າ ສາສະໜາພຸດຍັງເປັນສ່ວນສຳຄັນໃນວັດທະນະທຳສັງຄົມ ແລະຮີດຄອງປະເພນີລາວຄືວັດເປັນບ່ອນເຜີຍແຜ່ວັດທະນະທຳ, ເປັນບ່ອນທຳພິທີທາງຮີດຄອງປະເພນີ, ບ່ອນສຶກສາທຳມະຈາລິຍາ, ເປັນສູນຮວມດ້ານຈິດໃຈ. ນອກນັ້ນ ພະສົງ ແລະວັດວາສະຖານຍັງທຳໜ້າທີ່ສຶກສາແນວຄິດໃຫ້ອະນຸຊົນ, ເຍົາວະຊົນ, ຊາວໜຸ່ມ ແລະທຸກຊັ້ນຄົນໃຫ້ມີຄວາມສິນທຳ, ຮັກສາຄວາມສະຫງົບສັນຕິເຊັ່ນ ໂຄງການເຜີຍແຜ່ເມດຕາທຳ ( ຄວາມຮັບຮູ້ຕໍ່ໂລກເອດ-AIDS ) ອອກລາຍການໂທລະພາບ, ໂຄງການບວດເພື່ອເຍົາວະຊົນເປັນຕົ້ນ ເຊິ່ງເປັນໂຄງການໂດຍສະຖາບັນສົງພາຍໃນປະເທດ ຮ່ວມກັບກະຊວງຖະແຫລ່ງຂ່າວ ແລະວັດທະນະທຳ.

ນອກຈາກສາສະໜາທີ່ກ່າວມາຂ້າງເທິງແລ້ວ, ຍັງມີສາສະໜາອື່ນໆອີກ ໂດຍອີງຕາມເຊື້ອຊາດທີ່ອາໄສຢູ່ໃນປະເທດລາວ. ບັນດາສາສະໜາຕ່າງໆເຫລົ່ານີ້ ເປັນຕົ້ນແມ່ນສາສະໜາເຍຊູຄຣິດ ແລະສາສະໜາອື່ນໆ ກໍ່ສະແດງໃຫ້ເຫັນເຖິງຄວາມຫລາກຫລາຍທາງດ້ານວັດທະນະທຳ, ຮີດຄອງປະເພນີ, ຄວາມເຊື່ອຖື. ຈາກບັນດາຄວາມເຊື່ອຖືຕ່າງໆ ແລະກິດຈະກຳທາງປະເພນີຂອງແຕ່ລະສາສະໜານັ້ນ, ມັນຈຶ່ງກາຍມາເປັນຮີດຄອງ ທີ່ສະມາຊິກສັງຄົມໄດ້ເຄົາລົບນັບຖື ແລະປະຕິບັດສືບທອດກັນໃນທຸກວັນນີ້.

## 2.2. ພາສາແລະອັກສອນລາວ

ພາສາ ແລະອັກສອນລາວແມ່ນພາກສ່ວນໜຶ່ງທີ່ສຳຄັນໃນວັດທະນະທຳລາວ. ວັດທະນະທຳລາວມີສີສັນ, ມີເອກະລັກສະເພາະທີ່ດີງາມ ຍ້ອນຄົນລາວມີພາສາລາວ ແລະຕົວອັກສອນລາວເປັນຂອງຕົນເອງມາແຕ່ດົນນານແລ້ວ. ຄົນລາວໃຊ້ພາສາລາວເພື່ອຄົ້ນຄິດ, ສື່ສານແລກປ່ຽນຄວາມຮູ້, ປະສົບການ, ບັນທຶກ ແລະສິ່ງທອດມູນເຊື້ອສິລະປະວັນນະຄະດີ, ວັດທະນະທຳ, ຮີດຄອງປະເພນີ. ທຸກວັນນີ້ພວກເຮົາມີໂອກາດຮຽນຮູ້ວັດທະນະທຳອັນດີງາມຂອງຊາດ ຍ້ອນມີພາສາລາວ ແລະອັກສອນລາວໄດ້ບັນທຶກຂໍ້ມູນສະໄໝບູຮານໄວ້. ໃນໄລຍະປະຫວັດສາດທີ່ຜ່ານມາບັນພະບຸລຸດລາວ ແລະປະຊາຊົນລາວໄດ້ພ້ອມກັນຕໍ່ສູ້ ເພື່ອປົກປັກຮັກສາພາສາລາວໃຫ້ຄຽງຄູ່ກັບຄົນລາວ, ແຕ່ໃນຕົວຈິງແລ້ວ ມັນກໍ່ແມ່ນການຕໍ່ສູ້ເພື່ອຮັກສາວັດທະນະທຳຂອງຊາດໄວ້. ສະນັ້ນ, ພາສາ-ອັກສອນລາວ ມັນແມ່ນຜະລິດຕະພັນທາງດ້ານວັດທະນະທຳທາງຈິດໃຈທີ່ສຳຄັນຂອງຊາດ ດັ່ງຄຳວ່າ " ໄຮ້ພາສາ ໄຮ້ອັກສອນ ຄືຄົນໄຮ້ຊາດຕະກຸນເຊື້ອເກີດບໍ່ມີ ".

ພາສາ ແລະອັກສອນລາວ ແມ່ນວັດທະນະທຳສ່ວນໜຶ່ງທີ່ຊ່ວຍປົກປັກຮັກສາ, ຊ່ວຍພັດທະນາ

ວັດທະນະທຳລາວໃຫ້ໝັ້ນຄົງ ແລະຂະຫຍາຍຕົວໄປພ້ອມກັບສັງຄົມລາວ. ວັດທະນະທຳ, ຮີດຄອງປະເພນີຕ່າງໆຂອງລາວໄດ້ຄົງຕົວ ແລະຂະຫຍາຍຕົວ ໂດຍຜ່ານສື່ທາງພາສາເປັນພາຫະນະສົ່ງທອດຈາກຄົນຮຸ່ນນີ້ ໄປສູ່ຄົນຮຸ່ນໃໝ່ຕໍ່ໆໄປຈົນມາເຖິງປັດຈຸບັນ ຕົວຢ່າງ ມາລະຍາດໃນການພົບກັນ ກໍມີຄຳວ່າ " ສະບາຍດີ, ມາລະຍາດໃນການນັ່ງກໍມີຄຳວ່າ ຖົ່ມນ້ຳລາຍໃຫ້ເບິ່ງປ່ອງ ນັ່ງຍ່ອງຍໍ້ໃຫ້ເບິ່ງວ່າງຂາ, ລຸກໃຫ້ເບິ່ງທີ່ ໜີໃຫ້ເບິ່ງບ່ອນ . ມາລະຍາດຂອງການເອີ້ນ ແລະຂານຕອບກໍມີຄຳວ່າ ລຸງ, ອ້າຍ, ນ້ອງ ... ໂດຍ, ເຈົ້າ, ເອີ " ເປັນຕົ້ນ.

## 3. ວັດທະນະທຳທາງພິທີກຳຕ່າງໆໃນຊີວິດຂອງຄົນລາວ

ຄຳວ່າ " ພິທີກຳ " ແມ່ນແບບຢ່າງ ຫລືວິທີປະຕິບັດທີ່ເປັນກິດຈະກຳໃນຊີວິດຂອງຄົນເຮົາ ຕາມຮູບແບບຂອງຄວາມເຊື່ອຖືຕ່າງໆຂອງບັນພະບຸລຸດ ຫລືປູ່ຍ່າຕາຍາຍ ເຊິ່ງເຮົານຳມາປະຕິບັດສືບຕໍ່ກັນມາເພື່ອເປັນການສະໜອງຕໍ່ຄວາມມຸ່ງມາດປາຖະໜາອັນດີງາມ, ເປັນຂວັນກຳລັງໃຈຕໍ່ຄົນເຮົາ ເພື່ອໃຫ້ເກີດຄວາມເຊື່ອໝັ້ນໃນຊີວິດ.

ຄົນລາວມີວັດທະນະທຳ, ຮີດຄອງປະເພນີ ແລະພິທີກຳຊີວິດຫລາຍຢ່າງທີ່ແຕກຕ່າງກັນໄປຕາມແຕ່ລະທ້ອງຖິ່ນ ແລະຊົນເຜົ່າ. ດັ່ງນັ້ນ, ຈຶ່ງບໍ່ສາມາດນຳສະເໜີໃຫ້ຄົບຖ້ວນໄດ້. ໃນເອກະສານສະບັບນີ້ ຈະນຳສະເໜີ ບາງຮີດຄອງປະເພນີຂອງຊົນເຜົ່າລາວ-ໄຕ ເຊິ່ງເປັນວັດທະນະທຳທີ່ເຄີຍປະຕິບັດເປັນເອກະພາບກັນມາເຖິງຊູ່ມື້ນີ້ ເພາະວ່າເຜົ່າລາວ-ໄຕເປັນຊົນເຜົ່າສ່ວນໃຫຍ່ເຊິ່ງມີວັດທະນະທຳ, ຮີດຄອງປະເພນີເປັນລັກສະນະລວມຂອງຊາດ ຕົ້ນຕໍແມ່ນ ຮີດ 12 ຄອງ 14 ແລະພິທີກຳການເກີດ, ການບວດ, ການແຕ່ງດອງ ແລະການເສຍຊີວິດເປັນຕົ້ນ.

### 3.1. ພິທີການເກີດ

ການປະຕິສົນທິ ຫລືຖືກຳເນີດ ໂດຍທົ່ວໄປ ຄົນລາວນິຍົມເອີ້ນວ່າ "ເກີດ " ເຊັ່ນເດັກເກີດໃໝ່, ຄົນເກີດລູກເປັນຕົ້ນ. ທຳອິດແມ່ນພໍ່ແມ່ ( ບິດາ, ມານດາ ) ເປັນຜູ້ໃຫ້ກຳເນີດ ແລະລ້ຽງດູ. ການເກີດເປັນພິທີກຳທີ່ສຳຄັນ ແລະມີຫລາຍຂັ້ນຕອນດີດັ່ງນີ້.

#### 3.1.1. ການຕັດສາຍບື

ການເກີດ ແລະການຕັດສາຍບື ສະໄໝບູຮານມີໝໍຕຳແຍມາຊ່ວຍໃນເວລາເກີດ ແລະຕັດສາຍແຫ່ໃຫ້ເດັກແດງ. ການຕັດສາຍແຫ່, ຄົນລາວສະໄໝບູຮານໃສ່ໃຈເປັນພິເສດ ເພາະເຊື່ອວ່າການຕັດສາຍບື; ຖ້າຕັດບໍ່ຖືກປ້ອງ, ມັດບໍ່ແໜ້ນ, ມີດຕັດບໍ່ດີ ແລະຕັດບໍ່ຖືກວິທີ ສາຍບືຈະບໍ່ງາມ, ເປັນບາດແຜບໍ່ເຊົາ. ຍິ່ງກວ່ານັ້ນ ຍັງເຊື່ອວ່າມີຜີໂພງ, ຜີປອບມາເລຍສາຍບືເດັກ, ເຮັດໃຫ້ເຈັບໄຂ້ໄດ້ປ່ວຍໃນທີ່ສຸດ

ກໍຈະເສຍຊີວິດໄປ. ດັ່ງນັ້ນໃກ້ມື້ອອດ, ຜູ້ເປັນມື້ຈຶ່ງໄປຫາໝໍຕຳແຍ ແລະກຽມຂອງຕັດສາຍບືໄວ້. ສະໄໝບູຮານ ເພິ່ນນິຍົມເອົາມີດທີ່ເຮັດດ້ວຍຕິວໄມ້ປ່ອງແກ່ເຮັດໃຫ້ຄົມດີ ແລະມີວິທີຕັດສະບືໃຫ້ຂາດບາດດຽວ ແລ້ວເອົາສາຍຝ້າຍ ຫລືສາຍໄໝມ້ອນທີ່ສະອາດມາມັດໄວ້ໃຫ້ແໜ້ນ.

### 3.1.2. ການເຜາະເດັກ

ການເຜາະເດັກ ແມ່ນການເອົາເດັກໄປທຳພິທີຕາມຄວາມເຊື່ອຂອງຄົນບູຮານ. ຄົນບູຮານມີຄວາມເຊື່ອວ່າ ທາລົກທີ່ເກີດມານັ້ນ ບາງເທື່ອກໍແມ່ນລູກແທ້, ແຕ່ບາງເທື່ອກໍແມ່ນລູກຜີ, ລູກແຖນມາເກີດນຳ. ສະນັ້ນ ເມື່ອຕັດສາຍແຫ່ແລ້ວ ເຂົາເຈົ້າຈຶ່ງເອົາສົ້ນມາຕູ້ມເອົາ ເພາະເຊື່ອວ່າ ສົ້ນເປັນຂອງສັກສິດ ແລະກັນຜີຮ້າຍໄດ້. ຈາກນັ້ນຈຶ່ງອຸ້ມເອົາເດັກໄປປາກປະຕູດ້ານຕາເວັນຕົກ ແລ້ວກໍເອີ້ນຜີສາງນາງໄມ້, ຜີຟ້າຜີແຖນໃຫ້ມາເອົາດັ່ງຄຳທີ່ວ່າ " ຕູຂ້ານີ້ຍັງມີລູກນ້ອຍຕີນແດງ ແພງຄຳຕີນປ້ອມມາເຜາະມາກ່າວເຖິງຜີ, ຖ້າແມ່ນລູກຟ້າລູກແຖນກໍດີ, ລູກຜີລູກເຜດຢູ່ພູເຂົາກ້າ ຟາກຟ້າເມືອງສະຫວັນກໍດີ ໃຫ້ມາເອົາສາມື້ນີ້ວັນນີ້ ຄັນບໍ່ມາເອົາມື້ນີ້ດຽວນີ້ຊິເປັນລູກຕູຂ້າ. ຜີທາງອື່ນບໍ່ໃຫ້ວ່າ ຮ່າທາງອື່ນບໍ່ໃຫ້ມາຖາມ..." ຈາກນັ້ນກໍຮຽກຂວັນເດັກໃຫ້ມາໂຮມໃນເນື້ອໃນກາຍ ແລ້ວຈຶ່ງເອົາເດັກໄປວາງໄວ້ບ່ອນນອນທີ່ກຽມໄວ້.

### 3.1.3. ການຈ່ອມເດັກ

ການຈ່ອມເດັກ ແມ່ນພິທີກຳອັນໜຶ່ງຕາມຄວາມຄິດຂອງຄົນບູຮານ ເພື່ອເຝິກຝົນຄວາມຄິດໃຫ້ເດັກກາຍເປັນຄົນຮູ້ຜູ້ດີ, ມີນິດໄສດຸໝັ່ນຕໍ່ການງານ. ຖ້າແມ່ນເດັກຊາຍຈະມີແຫ, ພ້າ, ຂວານ, ໜັງສືຜູກເປັນຕົ້ນ. ຖ້າແມ່ນເດັກຍິງຈະມີຫູກ, ຟືມ, ເຂັມທຍິບ, ກະຕ່າເປັນຕົ້ນ ມາວາງໄວ້ຢູ່ຂ້າງ ຫລືທາງຫົວບ່ອນນອນເດັກ. ແລ້ວຈະມີຜູ້ເຖົ້າຜູ້ແກ່ ຫລືໝໍຕຳແຍຜູ້ໜຶ່ງມາທຳພິທີວ່າ " ຕື່ນໆ ຕື່ນມາເຮັດໄຮ່ໄຖນາ, ຕຳຫູກທໍໄໝ, ທຍິບປັກທັກແສ່ວ ແລ້ວອ່ານໜັງສື..." ທັງເຄາະຕີອຸປະກອນເຫລົ່ານັ້ນ ເຮັດໃຫ້ເດັກຕື່ນມີສຽງໄຫ້ອອກມາ ສຸດທ້າຍຈຶ່ງຫຍຳເຂົ້າແປະໃສ່ສົບເດັກພໍເປັນພິທີ. ຜູ້ຍິງທີ່ຈະມາຫຍຳເຂົ້າຈ່ອມເດັກ ເພິ່ນກໍມີການເລືອກເຟັ້ນຄັກແນ່. ເຮັດແນວນີ້ ເດັກຈຶ່ງມີຄວາມຮູ້, ຄວາມສາມາດໃນໜ້າທີ່ການງານ, ທັງດຸໝັ່ນຂະຫຍັນພຽນ ແລະເປັນຢ້າວເປັນເຮືອນ.

### 3.1.4. ການຢູ່ກຳ ແລະອອກກຳ

ການຢູ່ກຳ ຫລື ເອີ້ນວ່າຢູ່ໄຟ ແມ່ນການບຳລຸງຮັກສາສຸຂະພາບຂອງແມ່ຜູ້ໃຫ້ກຳເນີດເດັກໃໝ່. ໃນເວລາຢູ່ກຳ ແມ່ກໍຈະດື່ມແຕ່ນ້ຳຮ້ອນ, ອາບນ້ຳອຸ່ນ, ນັ່ງຂາງເຕົາໄຟຖ່ານ, ບໍ່ກິນອາຫານຊະຊາຍ, ເຮັດແນວນີ້ ເພື່ອໃຫ້ແມ່ມີສຸຂະພາບແຂງແຮງປົກກະຕິ, ມີນ້ຳນົມລ້ຽງລູກພຽງພໍ. ການຢູ່ກຳຈະໄວ ຫລືຊ້າກໍແລ້ວແຕ່ເງື່ອນໄຂຂອງໃຜມັນ ແຕ່ສະໄໝບູຮານຢ່າງໜ້ອຍ 15 ວັນ.

ການອອກກຳ ຫລັງຈາກຢູ່ກຳຕາມສົມຄວນແລ້ວ, ຈະມີພິທີອອກກຳຕາມປະເພນີ. ມ້ຽນສະຖານທີ່ ແລະສິ່ງຂອງຢູ່ກຳຕ່າງໆອອກຈາກບ່ອນ. ຜູ້ເປັນແມ່ກໍຈະໄປອາບນ້ຳຊະຜົມຢູ່ນອກເຮືອນ ຫລືຢູ່ທ່ານ້ຳ, ໄປອາບນ້ຳຖືມີດນ້ອຍດວງໜຶ່ງໄປນຳ, ກ່ອນຈະອາບນ້ຳຊະຜົມ ເອົາມີດນ້ອຍແກວ່ງ ຕັດນ້ຳໄປມາສອງສາມຄັ້ງ ທັງຈົ່ມຄາຖາອາຄົມໃນໃຈວ່າ " ຂ້ອຍເກີດລູກນ້ອຍໄດ້ລົງມາສ່ວຍຕີນ, ອາບນ້ຳຊະຜົມ ລ້າງເຫື່ອໄຄເໝັນທາງຫລັງເພິ່ນເບື່ອ ລ້າງເຫື່ອທາງໜ້າເພິ່ນຊັງ ແລ້ວຂຶ້ນໄປບ້ານໃຫ້ຮຸ່ງທົ່ວເມືອງ, ຂຶ້ນເມືອເຮືອນໃຫ້ຮຸ່ງເຮືອງທົ່ວຫ້ອງ ຝູງພີ່ນ້ອງຮັກທໍ່ຕຸ້ມຕອມ ໂອມສະໂໜມເຄັດ " ແລ້ວກໍອາບນ້ຳຊະຜົມ ປົກກະຕິ.

### 3.1.5. ການຜູກແຂນໃຫ້ເດັກ ແລະແມ່

ການຜູກແຂນໃຫ້ເດັກແລະແມ່ ແມ່ນພິທີກຳສຸດທ້າຍສຳລັບການເກີດ. ເພິ່ນຫາລືກຽາມຍາມດີຈັດພິທີບາສີສູ່ຂວັນ ຮຽກເອົາຂວັນຂອງແມ່ ແລະລູກມາຢູ່ໃນຮ່າງກາຍ, ໃນເຮືອນໃນຢ້າວ. ມີການຕັ້ງຊື່ໃຫ້ເດັກ ແລະຢາດນ້ຳສັກສິດໃສ່ປາກ; ນ້ຳສັກສິດເອົາມາຈາກນ້ຳສ້າງເຈັດສ້າງ ຫລືນ້ຳເຈັດສາຍ. ໃນສະໄໝບູຮານເພິ່ນນິຍົມຈັດພິທີການຜູກແຂນໃນມື້ອອກກຳໂລດ. ໃນພິທີອອກກຳຜູ້ເປັນແມ່ເດັກຈະໄດ້ຂັນສົມມາຄາລະວະຕໍ່ພໍ່ແມ່ ແລະຜູ້ທີ່ຈັບບາຍຂອງຕ່ຳຕ້ອຍ, ຖືກເລືອດຖືກຢາງ. ເມື່ອໄດ້ປະຕິບັດຄົບຖ້ວນຕາມຮີດຄອງແລ້ວ ແມ່ແລະເດັກຈຶ່ງຢູ່ດີມີແຮງ ແລະຍັງຖືວ່າປະຕິບັດຖືກຕ້ອງຕາມຮີດຄອງປະເພນີ.

## 3.2. ພິທີການບວດ

ຄຳວ່າ " ບວດ " ໃນພາສາບາລີເອີ້ນວ່າ " ບັນພະຊາ " ເຊິ່ງມີຄວາມໝາຍວ່າ ການສະລະໃນການຄອງເຮືອນ, ບໍ່ມີຄວາມກ່ຽວຂ້ອງກັບຄອບຄົວ. ການບວດຈົວ ຫລືສະມາເນນຕ້ອງມີອາຍຸແຕ່ 8 ປີ ຫາ 19 ປີ. ສ່ວນບວດເປັນພະເອີ້ນວ່າ " ອຸປະສົມບົດ " ຜູ້ຈະບວດຕ້ອງມີອາຍຸແຕ່ 20 ປີຂຶ້ນໄປ.

ການບວດມີຫລາຍປະເພດ ຫລືຍັງຂຶ້ນກັບແຕ່ລະສາສະໜາ. ຢູ່ໃນນີ້ແມ່ນໃນການບວດຢູ່ໃນສາສະໜາພຸດ ເຊິ່ງເປັນສາສະໜາທີ່ຄົນລາວສ່ວນຫລາຍນັບຖື. ການບວດກາຍເປັນຮີດຄອງປະເພນີທີ່ສຳຄັນຢ່າງໜຶ່ງຂອງຄົນລາວ ໂດຍສະເພາະແມ່ນເຜົ່າລາວ. ຜູ້ຊາຍຄົນລາວໃນສະໄໝບູຮານມີຄວາມນິຍົມໃນການບວດ. ເມື່ອລູກຫລານຜູ້ຊາຍມີອາຍຸພໍບວດ ເພິ່ນກໍຈັດພິທີບວດໃຫ້ ເພື່ອເປັນອະນິສົງຄຸນງາມຄວາມດີສະໜອງຄຶນແກ່ບິດາມານດາ ແລະຍາດພີ່ນ້ອງ. ອີງຕາມຄວາມເຊື່ອຖືຂອງຄົນລາວ ເພິ່ນວ່າ ເຮັດບຸນສິບຄັ້ງ, ຮ້ອຍຄັ້ງ ບໍ່ທໍ່ບວດໜຶ່ງຄັ້ງ. ພ້ອມນັ້ນ ຍັງເຊື່ອຖືກັນວ່າ ການບວດເປັນການຊ່ວຍຄັດເກົາ, ຂູດລ້າງໃຫ້ເປັນຄົນຜູ້ໃຫຍ່ທີ່ສົມບູນແບບ, ເປັນຄົນຮູ້ຜູ້ດີ, ມີລະບຽບວິໄນ, ມີວິຊາຄວາມຮູ້ທາງໂລກທາງທຳ ແລະຮູ້ຈັກທຳມະຈະລິຍາເປັນຕົ້ນ.

ສະໄໝບູຮານ ຜູ້ຊາຍຄົນໃດຫາກໄດ້ຜ່ານການບວດຢູ່ໃນວັດ, ເຂົາເຈົ້າເຊື່ອວ່າເປັນຄົນຜ່ານ

ການສຶກສາອົບຮົມ. ເມື່ອສິກອອກມາກໍ່ຮູ້ຈັກເຮັດວຽກບ້ານການເຮືອນດີ, ມີຄວາມຮູ້ທາງທຳ ແລະທາງໂລກ. ກົງກັນຂ້າມຜູ້ໃດບໍ່ເຂົ້າບວດ, ຄົນບູຮານເພິ່ນເວົ້າວ່າ " ຄົນດິບ " ເຊິ່ງມີຄວາມໝາຍວ່າ ຄົນທີ່ບໍ່ໄດ້ບວດຮຽນ ຊຽນ ອ່ານ ບໍ່ມີບົດຮຽນໃນການຄອງເຮືອນ.

ມາຮອດສະໄໝປັດຈຸບັນ, ຄົນລາວທົ່ວໄປບໍ່ຄ່ອຍນິຍົມໃນການບວດຖືສິນຢູ່ວັດຫລາຍຄືອະດີດແລ້ວ. ທັງນີ້ກໍຍ້ອນວ່າ ສັງຄົມມີການພັດທະນາບໍ່ຄືແຕ່ກ່ອນ. ເຍົາວະຊົນຊາວໜຸ່ມມີພາລະໃນການສຶກສາຮ່ຳຮຽນຢູ່ໂຮງຮຽນ ເພື່ອຈະໄດ້ປະກອບວິຊາອາຊີບ, ແຕ່ການບວດຍັງເປັນທີ່ນິຍົມສຳລັບຊາວພຸດເປັນຕົ້ນແມ່ນການບວດຈູງ. ເຖິງແມ່ນວ່າປະເພນີການບວດ ບໍ່ຄືສະໄໝບູຮານທຸກຢ່າງກໍຕາມ, ແຕ່ອີງການຈັດຕັ້ງ ກໍເຫັນຄວາມສຳຄັນໃນການບວດເພື່ອເຝິກຝົນຈິດໃຈໃຫ້ແກ່ອະນຸຊົນ, ເຍົາວະຊົນມີຈິດໃຈຜ່ອງໃສ, ມີຄະຕິທຳມະໂນທຳປະຈຳໃຈ, ສ້າງຕົນໃຫ້ເປັນເຍົາວະຊົນດີຂອງຊາດ. ຫ່າງໄກຢາເສບຕິດແລະອະບາຍຍະມຸກຕ່າງໆ ດັ່ງນັ້ນ ທາງອົງການພຸດທະສາສະໜາສຳພັນລາວ ( ພສລ ) ຈຶ່ງມີໂຄງການເມດຕາທຳ ເປັນໂຄງການບວດເພື່ອອະນຸຊົນ, ເຍົາວະຊົນ.

### 3.3. ພິທີກຳແຕ່ງດອງ

ຄຳວ່າ " ແຕ່ງດອງ " ແມ່ນການຈັດແຈງແຕ່ງພິທີບາສີສູ່ຂວັນໃຫ້ແກ່ຜູ້ບ່າວ ແລະຜູ້ສາວທີ່ມີຄວາມຮັກມັກກັນມາດົນແລ້ວ ໃຫ້ເປັນຜົວເປັນເມຍກັນ ແລະຢູ່ຮ່ວມກັນຕາມຮີດຄອງປະເພນີ. ການແຕ່ງດອງແມ່ນກິດເກນຂອງມະນຸດທຸກຄົນ. ເມື່ອເຖິງກະສຽນແລ້ວ ກໍຈະໄດ້ແຕ່ງດອງ, ແຕ່ການແຕ່ງດອງຈະຈັດໃນລະດັບໃດ ແມ່ນອີງຕາມຖານະຄອບຄົວ ຫລືການຕົກລົງກັນຂອງເຈົ້າໂຄດລຸງຕາ ແລະຍາດພີ່ນ້ອງທັງສອງກຳສອງຝ່າຍ. ການແຕ່ງດອງທີ່ຖືກຕ້ອງຕາມຮີດຄອງປະເພນີດັ້ງເດີມຂອງລາວມີຂັ້ນຕອນດັ່ງນີ້.

#### 3.3.1. ຂັ້ນຕອນຊອກຫາຄູ່ຄອງ

ການຊອກຄູ່ຄອງ ແມ່ນການຊອກຫາຜູ້ບ່າວ ຫລືຜູ້ສາວທີ່ຈະມາເປັນຜົວ ຫລືເປັນເມຍ. ອີງຕາມປະເພນີລາວ ຜູ້ຊາຍຈະເປັນຝ່າຍໄປຊອກຫາຜູ້ຍິງ. ສະໄໝບູຮານການເລືອກຄູ່ຄອງ ສ່ວນຫລາຍແມ່ນພໍ່ແມ່ເປັນຜູ້ຕັດສິນ. ເຖິງວ່າ ຜູ້ບ່າວຈະເລືອກໄດ້ຜູ້ສາວທີ່ຕົນຮັກມັກກໍຕາມ, ແຕ່ພໍ່ແມ່ບໍ່ເຫັນດີ ຍ້ອນເຫດຜົນບາງຢ່າງໃດໜຶ່ງ ພໍ່ແມ່ຈະບໍ່ໃຫ້ເອົາ ແລະລູກກໍຕ້ອງຟັງຄວາມພໍ່ແມ່.

ໃນສະໄໝບູຮານ ນິຍົມເລືອກເອົາຄູ່ຄອງ ຕ້ອງເປັນຜູ້ດຸໝັ່ນຂະຫຍັນພຽນ, ມີຄວາມບໍລິສຸດ, ມີຄວາມຮູ້ຄວາມສາມາດ, ນິດໄສໃຈຄໍກວ້າງຂວາງ, ຮູ້ຈັກທຳມາຫາກິນ, ຮັກພີ່ນ້ອງລຸງຕາເຊັ່ນ ຜູ້ຊາຍຮູ້ເຮັດໄຮ່ໄຖນາ, ຮູ້ສານກະບຸງກະຕ່າ, ສາມາດເປັນພໍ່ເຮືອນໄດ້. ສ່ວນແມ່ຍິງຕ້ອງຮູ້ຈັກເຮັດຫູກເຮັດຝ້າຍ,

ຕຳຫູກທໍໄໝ, ຕຳເຂົ້າເອົາຟືນ ຈຶ່ງສາມາດເປັນແມ່ເຮືອນໄດ້. ເມື່ອເລືອກຄູ່ຄອງໄດ້ແລ້ວ ໝາຍຄວາມວ່າ ຜູ້ຊາຍເລືອກຜູ້ຍິງ ແລະຜູ້ຍິງກໍພໍໃຈທີ່ຕົນຖືກເລືອກ. ຈາກນັ້ນ ຊາຍຈຶ່ງມາເວົ້ານຳພໍ່ແມ່ໃຫ້ຮັບຮູ້ນຳ, ຖ້າພໍ່ແມ່ເຫັນດີຈຶ່ງຈັດການສູ່ຂໍ. ກໍລະນີພໍ່ແມ່ເປັນຜູ້ເລືອກສະໃພ້ເອົາເອງ ພໍ່ແມ່ຈະເປັນຜູ້ຈັດການ. ຕົວຢ່າງໃນເລື່ອງ ມະໂຫສົດເລືອກເມຍ, ນິຍາຍຮັກອະມະຕະບາຈຽງ, ຂຸນລູນາງອົ້ວ ແລະເລື່ອງອື່ນໆ.

### 3.3.2. ຂັ້ນຕອນສູ່ຂໍ

ການສູ່ຂໍ ແມ່ນໜ້າທີ່ຂອງຝ່າຍຊາຍໄປຕົກລົງກັບຝ່າຍຍິງ ເຊິ່ງເອີ້ນວ່າ " ໄປຂໍສາວ " ຕອນໄປຂໍ, ຝ່າຍຊາຍຈະມີຂັນຫ້າ, ຄຳໝາກກອກຢາ, ເຫລົ້າຂາວ, ທັງໝົດນີ້ຮ່ວມເຂົ້າກັນເອີ້ນວ່າ " ຂັນໝາກ " . ການສູ່ຂໍ ເຖົ້າແກ່ທັງສອງຝ່າຍຈະໄດ້ຕົກລົງກັນ ຫລືອາດຈະຕໍ່ລອງກັນໃນເລື່ອງສິນສອດ ( ຄ່າດອງ ) ທັງໝົດຕາມຮີດຄອງປະເພນີທີ່ທັງສອງຝ່າຍພໍໃຈ ຫລືສາມາດຮັບໄດ້. ຕໍ່ມາຈຶ່ງຫາມື້ແຕ່ງດອງ. ພິເສດການຕໍ່ລອງຄ່າສິນສອດດ ຖ້າຄ່າສິນສອດແພງຫລາຍ ຝ່າຍຊາຍຂໍຫລຸດລົງ, ເພິ່ນວ່າຂໍຕໍ່ຂັ້ນ ຈະບໍ່ວ່າ " ຫລຸດໃຫ້ແດ່ " ຄືການຕໍ່ລອງລາຄາວັດຖຸສິ່ງຂອງອື່ນໆທົ່ວໄປ.

ຕາມປະເພນີລາວ ໂດຍພື້ນຖານແລ້ວ ຜູ້ຊາຍແຕ່ງເອົາແມ່ຍິງ. ເພິ່ນວ່າ ເອົາໃພ້ໄປລ້ຽງປູ່ຍ່າ. ຖ້າເປັນແນວນັ້ນ ຝ່າຍຊາຍຕ້ອງຈ່າຍຄ່າສິນສອດແພງ; ຜູ້ໄປເປັນໃພ້ຈະຕ້ອງກຽມເຄື່ອງສົມມາເຊັ່ນ ເສື່ອ, ໝອນ, ຜ້ານັ່ງ, ແພອີໂປ້ ເປັນຕົ້ນ. ເຊິ່ງເພິ່ນເອີ້ນວ່າ-" ເຄື່ອງຂ່າ " ໄປສົມມາລຸງຕາຝ່າຍຊາຍ. ກົງກັນຂ້າມຝ່າຍຍິງຈຳເປັນຕ້ອງການຜູ້ຊາຍມາລ້ຽງພໍ່ແມ່ ຜູ້ເປັນເຂີຍຈະບໍ່ໄດ້ເສຍຄ່າດອງແພງ. ໝາຍຄວາມວ່າ ຝ່າຍຜູ້ຍິງຈະຈັດແຕ່ງແປງເອົາຝ່າຍຊາຍ.

### 3.3.3. ຂັ້ນຕອນແຕ່ງ

ພາຍຫລັງມີການສູ່ຂໍເປັນທີ່ຮຽບຮ້ອຍແລ້ວ ຮອດມື້ງາມຍາມດີ ກໍຈັດພິທີແຕ່ງດອງ. ໃນມື້ແຕ່ງດອງມີພິທີສູ່ຂວັນໃຫ້ບ່າວສາວ, ປ້ອນໄຂ່, ຜູກແຂນ, ອວຍພອນ ແລະສົມມາຄາລະວະເຈົ້າໂຄດລຸງຕາ. ເຈົ້າໂຄດລຸງຕາສອນໃພ້ສອນເຂີຍ, ສຸດທ້າຍແມ່ນການຮັບປະທານອາຫານ ເພື່ອເປັນສິລິມຸງຄຸນແກ່ຄູ່ຜົວເມຍໃໝ່. ສະໄໝບູຮານ ການກິນເຂົ້າໃນມື້ແຕ່ງດອງ ເພິ່ນຫາມາກິນແບບເປັນພາ, ໃຜມາກ່ອນກິນກ່ອນ, ໃຜມາຫລັງກິນຫລັງ. ບໍ່ໄດ້ນັ່ງລໍຖ້າກິນພ້ອມກັນຄືດຽວນີ້. ການກິນດອງຈະໃຫຍ່ ຫລືນ້ອຍແມ່ນຂຶ້ນກັບຖານະຄອບຄົວ. ປະເພນີການແຕ່ງດອງນີ້ ເຖິງວ່າທຸກຈົນປານໃດກໍຕາມ ທຸກຄົນຕ້ອງໄດ້ປະຕິບັດຄືກັນໝົດ.

## 3.4 ພິທີກຳການເສຍຊີວິດ

ການເກີດ, ແກ່, ເຈັບ ແລະຕາຍ ເປັນກົດເກນທຳມະຊາດທີ່ມະນຸດທຸກຄົນບໍ່ສາມາດຈະຫລີກ

ລຽງໄດ້. ການຕາຍຂອງຄົນເຮົາ ເກີດຂຶ້ນຫລາຍກໍລະນີ ແລະບໍ່ຮູ້ວ່າຈະເກີດຂຶ້ນເມື່ອໃດ. ດັ່ງນັ້ນ, ພວກເຮົາ ຈຶ່ງແຍກການຕາຍອອກເປັນສອງກໍລະນີດັ່ງນີ້.

ກ. ຕາຍຍ້ອນຄວາມເຈັບໄຂ້ໄດ້ປ່ວຍເຊັ່ນ ຕາຍຍ້ອນພະຍາດ, ຕາຍຍ້ອນເຖົ້າແກ່ຊະລາ, ໝົດອາຍຸສັງຂານ... ກໍລະນີຂ້າງເທິງນີ້ ເອີ້ນວ່າ " ຕາຍດີ ".

ຂ. ຕາຍຍ້ອນອຸບັດເຫດເຊັ່ນ ຕົກກົກໄມ້, ຄວາຍຊົນ, ລົດຕຳ, ຕົກນ້ຳ... ຕາຍແບບນີ້ ເອີ້ນວ່າ " ຕາຍຫູງ ".

ການຕາຍຢູ່ນອກເຮືອນ ຫລື ຢູ່ນອກບ້ານ. ເພິ່ນບໍ່ເອົາມາໄວ້ຢູ່ເຮືອນ ( ຂະລຳ ) ເພາະເຊື່ອວ່າຈະນຳຄວາມບໍ່ດີມາໃສ່ບ້ານໃສ່ເຮືອນ ເພິ່ນຈຶ່ງເອົາໄວ້ຢູ່ນອກບ້ານ ຫລືຢູ່ວັດ. ການຕາຍ, ຄົນລາວມີພິທີກຳຈັດການສົບຫລາຍຢ່າງຄື ການອາບນ້ຳແຕ່ງໂຕໃຫ້ສົບ, ການມັດມືມັດຕີນ, ການເອົາສົບເຂົ້າໃນໂລງແລະເມມ, ການໄຫວ້ທູບທຽນ, ການເຮັດພາເຂົ້າອາຫານຫວານຄາວໃຫ້ດວງວິນຍານໃນເວລາຄົບງັນສົບແລະການຊາປະນາກິດສົບ. ແຕ່ລະຂັ້ນຕອນໃນການຈັດການສົບຄົນຕາຍນັ້ນ ລ້ວນແຕ່ມີຄວາມໝາຍໃນທາງໂລກ ແລະທາງທຳ, ມີຄວາມເຊື່ອທາງປະເພນີ ທີ່ຄົນເຮົາພາກັນປະຕິບັດສືບກັນມາເຖິງດຽວນີ້.

ປະເພນີການສົ່ງສະການສົບ ມີຫລາຍລັກສະນະ ອີງຕາມແຕ່ລະທ້ອງຖິ່ນ. ແຕ່ສະໄໝກ່ອນຄົນຕາຍ ເພິ່ນບໍ່ເຜົາສົບ. ປັດຈຸບັນບໍ່ຄ່ອຍປະຕິບັດຄືແນວນັ້ນແລ້ວ, ເພິ່ນນິຍົມເຜົາສົບຢູ່ວັດ, ຢູ່ປ່າຊ້າຂອງບ້ານ ເຊື່ອວ່າຈະໄດ້ໄປເກີດໄປຂານຢູ່ບ່ອນໃໝ່, ເປັນຄົນຮູ້ຜູ້ດີ ເວັ້ນເສຍແຕ່ເດັກນ້ອຍ ເຖິງຈະຕາຍຢູ່ເຮືອນ ຫລືນອກເຮືອນ ເພິ່ນຈະຝັງສົບເລີຍ. ແຕ່ສະໄໝນີ້, ການຈັດການສົບ ນອກຈາກອີງໃສ່ສະພາບແລະຈຸດພິເສດຂອງທ້ອງຖິ່ນແລ້ວ ຍັງຕ້ອງອີງໃສ່ຄວາມເຊື່ອຖືທາງສາສະໜາຂອງຜູ້ຕາຍອີກດ້ວຍ.

## 4. ຮີດຄອງປະເພນີລາວບູຮານ.

ຄຳວ່າ " ປະເພນີ " ແມ່ນບັນດາຂະນົບທຳນຽມ, ແບບແຜນທີ່ເປັນເອກະລັກສະເພາະປະຈຳຊາດມາແຕ່ບູຮານ. ຊາດໃດໆ ກໍຍ່ອມມີປະເພນີເປັນຂອງຊາດຕົນ. ຄົນລາວເຮົາກໍມີປະເພນີ, ມີວັດທະນະທຳ ອັນເປັນມໍລະດົກທີ່ປະເສີດ ເຊິ່ງໄດ້ສະໜິດຕິດພັນກັບຄົນລາວຈົນເຖິງປັດຈຸບັນ.

### 4.1. ການກຳເນີດຮີດຄອງປະເພນີລາວ

ຮີດຄອງປະເພນີລາວ ໄດ້ກຳເນີດມາແຕ່ສະໄໝບູຮານນະການ ແລະໄດ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ໂດຍສະເພາະແມ່ນສະໄໝເຈົ້າຟ້າງຸ່ມມະຫາລາດເປັນຕົ້ນມາ. ປະຊາຊົນລາວທຸກເຜົ່າສາມັກຄີກັນ, ຮ່ວມແຮງຮ່ວມໃຈກັນສ້າງປະເທດ, ສ້າງພື້ນຖານວັດທະນະທຳ, ສົ່ງເສີມພູມປັນຍາຂອງປະຊາຊົນ. ເມື່ອສາສະໜາຈະເລີນຮຸ່ງເຮືອງຂຶ້ນມາ ສາສະໜາສະຖານໄດ້ກາຍເປັນສູນກາງທາງດ້ານວັດທະນະທຳ,

ເປັນໂຮງຮຽນ, ເປັນສູນບຳລຸງຈິດໃຈ, ເປັນຫໍພິພິດຕະພັນ ທັງເປັນບ່ອນທຳບຸນສິນກິນທານ. ພະສົງສຳມະເນນ ແລະປະຊາຊົນໄດ້ປະຕິບັດພາລະບົດບາດ ແລະໜ້າທີ່ສຳຄັນໃນການອະນຸລັກ ແລະເຜີຍແຜ່ມູນເຊື້ອວັດທະນະທຳ, ຮີດຄອງປະເພນີອັນດີງາມໃນທ່າຕັ້ງໜ້າ ຈົນກາຍເປັນຊັບສິນບັດອັນລ້ຳຄ່າຂອງຊາດລາວເຮົາສືບມາເຖິງປັດຈຸບັນ.

## 4.2. ຮີດ 12-ຄອງ 14

### 4.2.1. ຮີດ 12

ຄຳວ່າ " ຮີດ " ແມ່ນຄຳທີ່ໄດ້ມາຈາກພາສາບາລີໃນຄຳວ່າ " ຈະຣິຕະ " ເຊິ່ງມີຄວາມໝາຍວ່າ ຂະນົບທຳນຽມປະເພນີ ທີ່ເຄີຍປະຕິບັດສືບຕໍ່ກັນມາ ຂອງແຕ່ລະເດືອນໃນຮອບປີໜຶ່ງໆ (12 ເດືອນ ). ຄົນລາວນັບວ່າ ມີຮີດຄອງຢ່າງຫລວງຫລາຍດັ່ງຄຳທີ່ວ່າ ຮີດ 12 ຄອງ 14, ຮີດຍີ່ຄອງຈຽງ, ຮີດພະຄອງຈົວ, ຮີດຜົວຮີດເມຍ, ຮີດບ້ານຄອງເມືອງ, ຮີດເຖົ້າຄອງເຂີຍ, ຮີດລູກຄອງຫລານ ເປັນຕົ້ນ.

**1) ເດືອນຈຽງ-ບຸນເຂົ້າກຳ**

ຄຳວ່າ " ກຳ " ແມ່ນຄຳນາມໃນພາສາບາລີ ເຊິ່ງມີຄວາມໝາຍວ່າ ການງານ, ຜົນຂອງຄວາມດີ ຫລືຄວາມຊົ່ວ. ໃນສະໄໝບູຮານ ພວກເຮົາເຮັດບຸນຂຶ້ນປີໃໝ່ ເພື່ອລ້ຽງຟ້າລ້ຽງແຖນ ຄືດັ່ງທີ່ໄດ້ສະແດງອອກໃນພະລາຊະໂອວາດຂອງພະເຈົ້າຟ້າງຸ່ມມະຫາລາດ. ເມື່ອພຸດທະສາສະໜາເຂົ້າມາຈຶ່ງໄດ້ນຳເອົາບຸນເຂົ້າກຳມາແທນບຸນຂຶ້ນປີໃໝ່ຂອງລາວ. ບຸນເຂົ້າກຳເປັນປະເພນີໂດຍກົງຂອງພະສົງ, ສະໄໝບູຮານພະສົງຈະເຂົ້າກຳຢູ່ຖໍ້າ, ຢູ່ປ່າ ຫລືຢູ່ວັດປ່າທີ່ມີຄວາມສະຫງົບທີ່ສຸດ. ທຸກໆປີພະສົງຕ້ອງໄດ້ເຂົ້າກຳ ເພື່ອບຳເພັນກຸສົນໃຫ້ພົ້ນຈາກຄວາມບາບ. ໄລຍະພະສົງເຂົ້າກຳ ຊາວບ້ານກໍມີສ່ວນຮ່ວມໃນການອຸປະຖຳຄ້ຳຊູ, ທຳບຸນດ້ວຍການໃຫ້ຜັກສະຫານການກິນແກ່ພະສົງສະມາເນນ.

ເມື່ອກ່ອນ ສະໄໝເຈົ້າຟ້າງຸ່ມຂຶ້ນຄອງລາດ ເດືອນອ້າຍ ແລະເດືອນຍີ່ຢູ່ໃນສອງເດືອນນີ້, ເປັນເດືອນວ່າງ ບໍ່ມີປະເພນີ ຫລືກິດຈະກຳຂອງພະສົງໃດໆ. ສະນັ້ນ, ອາຈານບູຮານຈຶ່ງກຳນົດເອົາການເຂົ້າກຳຂອງພະສົງມາໃສ່ເດືອນນີ້.

**2) ເດືອນຍີ່-ບຸນຄູນລານເຂົ້າ**

ບຸນຄູນລານເຂົ້າ ຫລືຄູນຂວັນເຂົ້າ, ຄຳວ່າ " ລານ " ແປວ່າ ເດີ່ນ ຫລື ບ່ອນທີ່ຮາບພຽງດີ ເຊິ່ງເພິ່ນເອົາເຂົ້າມາກອງໄວ້. ບຸນນີ້ ແມ່ນບຸນໜຶ່ງທີ່ສຳຄັນໃນສະໄໝບູຮານ. ກ່ອນຈະເອົາເຂົ້າຂຶ້ນເລົ້າຂຶ້ນເຍຍ ໄດ້ເພິ່ນຕ້ອງເຮັດບຸນໃຫ້ເຂົ້າກ່ອນ. ການເຮັດແບບນີ້ກໍເພື່ອເປັນສິລິມຸງຄຸນ ມັ່ງມູນພູນສຸກຕໍ່ໄປ. ປະຊາຊົນລາວສະໄໝບູຮານ ເພິ່ນພາກັນນິຍົມເຮັດບຸນນີ້. ຍ້ອນວ່າ ເຂົ້າມີປະໂຫຍດເໜືອກວ່າສິ່ງໃດ; ຖ້າໄດ້ເຮັດ

ບຸນຂວັນເຂົ້າແລ້ວ, ຕາມຄວາມເຊື່ອຂອງຄົນລາວບູຮານວ່າ ກິນບໍ່ໝົດ ຈີກບໍ່ລົງ ດັ່ງນີ້ເປັນຕົ້ນ ຈົນມີຄຳວ່າ " ເຂົ້າມີສາລີພ້ອມ ຈອມດອຍກໍພໍ່ຢູ່ ເຂົ້າບໍ່ມີ ສາລີບໍ່ພ້ອມຈອມແກ້ວຢູ່ບໍ່ເປັນ ".

ການເຮັດບຸນຄູນລານເຂົ້າ ຫລືບຸນຂວັນເຂົ້ານີ້, ໄດ້ມີເລື່ອງເລົ່າກ່ຽວກັບສາສະໜາສືບຕໍ່ກັນມາເຖິງທຸກວັນນີ້ຄື ເລື່ອງ ສອງອ້າຍນ້ອງເຮັດນານຳກັນ. ຄວາມຈິງແລ້ວໃນເດືອນຍີ່ກໍເປັນເດືອນວ່າງ ທາງກິດຈະກຳຂອງພະສົງຄືໄດ້ກ່າວມາແລ້ວຂ້າງເທິງ. ສະນັ້ນ ປະຊາຊົນລາວບູຮານຖືເດືອນນີ້ເປັນເດືອນຫາ ຫລືວຫາຟືນມາໄວ້ເຕັມຖູນເຕັມລ່າງ ເພື່ອກຽມເຮັດບຸນເຂົ້າຈີ່ໃນເດືອນ 3 ຈົນມີຄຳວ່າ " ເດືອນອ້າຍເຮັດບຸນເຂົ້າກຳ ເດືອນຍີ່ຫາຟືນມາໄວ້ ".

### 3) ເດືອນສາມ-ບຸນເຂົ້າຈີ່ ແລະບຸນມາຄະບູຊາ

ບຸນເຂົ້າຈີ່ ແມ່ນບຸນປະເພນີດັ້ງເດີມ. ສະໄໝກ່ອນ ຊາວບ້ານພາກັນເຮັດເຂົ້າຈີ່ເພື່ອຖວາຍພະຍາຟ້າພະຍາແຖນ. ມາຮອດສະໄໝລາວມີສາສະໜາພຸດຈະເລີນຮຸ່ງເຮືອງ ຈຶ່ງນິຍົມພາກັນເຮັດເຂົ້າຈີ່ໄປຖວາຍພະສົງ. ການເຮັດເຂົ້າຈີ່ ຕາມປະເພນີຕ້ອງທາໄຂ່, ທານ້ຳອ້ອຍ ດັ່ງຄຳໂຕງໂຕຍ ພາສິດວ່າ " ເດືອນສາມຄ້ອຍລົມວອຍໆ ເຈົ້າຫົວຄອຍປັ້ນເຂົ້າຈີ່ ເຂົ້າຈີ່ບໍ່ໃສ່ນ້ຳຕານ ບໍ່ລາດນ້ຳອ້ອຍ ຈົວນ້ອຍບໍ່ອຸ່ນໃຈ " ບຸນເຂົ້າຈີ່ມີນິທານທ້ອງຖິ່ນ ແລະນິທານສາສະໜາກ່າວໄວ້ດັ່ງນີ້:

ຕົວຢ່າງນິທານສາສະໜາ ປາງກ່ອນມີແມ່ຍິງຄົນໜຶ່ງຊື່ ປຸນນະທາສີ ເປັນຄົນທຸກຍາກໄຮ້ເຂັນໃຈ ແລະເປັນຄົນຮັບໃຊ້ເສດຖີຄົນໜຶ່ງ ຢູ່ໃນເມືອງລາຊະຄື. ວັນໜຶ່ງເສດຖີແຕ່ງໃຫ້ນາງໄປຕຳເຂົ້າແຕ່ເຊົ້າເຖິງຄ່ຳ. ນາງມີຄວາມອິດເມື່ອຍຫລາຍ, ນາງຈຶ່ງເອົາຮຳເຂົ້າປັ້ນເປັນກ້ອນຈີ່ໃຫ້ສຸກ ແລ້ວເອົາໃສ່ໃນພົກຜ້າຍ່າງໄປຕັກນ້ຳ ເພື່ອຈະບໍລິໂພກເຂົ້າຈີ່ນັ້ນ. ເມື່ອໄປຕາມທາງ ນາງພົບພະພຸດທະເຈົ້າ ເລີຍເກີດຄວາມເຫລື້ອມໃສຂຶ້ນທັນທີ ແລະຄິດວ່າ ຕົນເປັນຄົນທຸກໄຮ້ໃນຊາດນີ້ ເພາະບໍ່ໄດ້ທຳບຸນໃຫ້ທານໄວ້ໃນຊາດກ່ອນ ແລະຊາດນີ້ ກໍບໍ່ເຄີຍໄດ້ທຳບຸນເລີຍ. ຈາກນັ້ນ ນາງກໍເອົາເຂົ້າຈີ່ທີ່ເຮັດດ້ວຍຮຳເຂົ້າໄປຖວາຍໃຫ້ແກ່ພະພຸດທະເຈົ້າ, ເມື່ອພະອົງຊົງຮັບແລ້ວ ກໍນັ່ງສະເຫວີຍຢູ່ຕໍ່ໜ້ານາງ ເມື່ອສະເຫວີຍແລ້ວກໍໄດ້ຕັດອະໂມທະນາກະຖາໂຜດນາງ ຈົນສຳເລັດໂສດາປະຕິຜົນເປັນອະລິຍະບຸກຄົນໃນພຸດທະສາສະໜາ. ເມື່ອນາງຕາຍໄປ ກໍໄປເກີດໃນສະຫວັນ, ສະເຫວີຍສົມບັດຢູ່ໃນວິມານຄຳ.

ນອກຈາກບຸນເຂົ້າຈີ່ແລ້ວ ໃນເດືອນສາມເພັງ ຍັງເປັນວັນສຳຄັນທາງສາສະໜາພຸດອີກວັນໜຶ່ງຄື ວັນມາຄະບູຊາ ( ການບູຊາໃນວັນມາຄະ ຫລືເອີ້ນວ່າ ການບູຊາໃນເດືອນສາມເພັງ ) ເຊິ່ງພະອົງໄດ້ສະແດງທຳມະເທດສະໜາຄືຫົວໃຈສຳຄັນຂອງສາສະໜາພຸດ ອັນເປັນຫລັກສາມ ປະການດັ່ງນີ້

1. ບໍ່ທຳຄວາມຊົ່ວ

2. ຈົ່ງທຳແຕ່ຄວາມດີ

3. ທຳຈິດໃຈໃຫ້ບໍລິສຸດຜ່ອງໃສ

ໃນທົດສະວັດຕົ້ນຂອງສະຕະວັດທີ 21, ບຸນມາຄະບູຊາໄດ້ກາຍເປັນບຸນໜຶ່ງ ທີ່ອົງການ ສປຊ ຮັບຮອງເອົາເປັນບຸນທາງສາກົນ. ດັ່ງນັ້ນ ບັນດາປະເທດທີ່ນັບຖືສາສະໜາພຸດ ເມື່ອເຖິງເດືອນສາມເພັງ ກໍມີກິດຈະກຳຕ່າງໆຂຶ້ນຕາມປະເພນີ.

### 4) ເດືອນສີ່-ບຸນພະເຫວດ ( ບຸນມະຫາຊາດ )

ບຸນພະເຫວດ ແມ່ນບຸນເພື່ອລະນຶກເຖິງຊາດໜຶ່ງ ຂອງພະພຸດທະອົງເກີດມາເປັນພະເຫວດສັນດອນ ອັນເປັນການໃຊ້ຊາດເທື່ອສຸດທ້າຍຂອງພະອົງ ( ເຫວດສັນດອນ ) ບຸນນີ້ຄວາມຈິງແລ້ວ ເປັນບຸນປາງໃຫຍ່ປະຈຳປີ, ມີການຄົບງັນໃຫຍ່ໂຕ ຄຶກຄື້ນຫລາຍ.

ການເຮັດບຸນພະເຫວດ ມີເລື່ອງກ່າວໄວ້ໃນໜັງສືມະໄລໝື່ນ ມະໄລແສນວ່າ ພະມະໄລຂຶ້ນໄປໄຫວ້ທາດເກດແກ້ວຈຸລະມະນີໃນຊັ້ນດາວະດຶງ ໄດ້ພົບກັບພະອະລິຍະເມດໄຕ ເພິ່ນໄດ້ຖາມຄວາມເປັນຢູ່ ຂອງມະນຸດນຳພະມະໄລວ່າ " ຖ້າຢາກພົບພະອົງ ຈົ່ງຢ່າໄດ້ຂ້າຕີພໍ່ແມ່, ຢ່າທຳຮ້າຍພະພຸດທະເຈົ້າ, ຢ່າຍຸຍົງໃຫ້ພະຕີກັນ ແລະ ໃຫ້ອອກສາທະຟັງເທດເລື່ອງສັນດອນຊາດົກໃຫ້ຈົບໃນມື້ດຽວ " ຍ້ອນແນວນີ້ ຊາວບ້ານ ຈຶ່ງພ້ອມກັນເຮັດບຸນພະເຫວດ.

ກ່ອນຈະເຮັດບຸນພະເຫວດ ອອກຕົບຍາດໂຍມພາກັນປຸກຜາມ ຫລືຕູບ, ຕົບແຕ່ງທໍ່ແຈກ. ທາງເຂົ້າວັດດ້ວຍດອກໄມ້, ຊໍ່ທຸງ ແລະເນັ່ງຝ້າຍມຸງຄຸນອ້ອມຜາມ ແລະທໍ່ແຈກຕາມພິທີທາງສາສະໜາພາມ. ຮອດມື້ເຮັດບຸນແທ້ ພໍຕາເວັນຄ້າຍ ຊາວບ້ານກໍມີການແຫ່ພະເຫວດ ແລະນາງມະທີ ຈາກນອກບ້ານມາສູ່ວັດ ເຊິ່ງເພິ່ນເອີ້ນວ່າ ພິທີແຫ່ພະເຫວດເຂົ້າເມືອງ. ຜູ້ທີ່ເປັນພະເຫວດ ແລະນາງມະທີນັ້ນ ຊາວບ້ານໄດ້ເລືອດເອົາຜູ້ທີ່ຄົນເຄົາລົບນັບຖືໄວ້ກ່ອນແລ້ວ, ເປັນຜູ້ມີຄວາມສຳຄັນໃນບ້ານ ຕາມທີ່ເລືອກໄວ້ກ່ອນແລ້ວ.

### 5) ເດືອນຫ້າ-ບຸນປີໃໝ່

ບຸນປີໃໝ່ ແມ່ນບຸນປະເພນີປະຈຳຊາດຂອງລາວ ເຊິ່ງມີຫລາຍຊື່ເອີ້ນຕ່າງກັນ. ບຸນນີ້ເປັນບຸນທີ່ມ່ວນທີ່ສຸດ. ປະຊາຊົນລາວພາກັນສະຫລອງປີໃໝ່ດ້ວຍການເອົານ້ຳທີ່ສະອາດ, ນ້ຳຫອມ, ນ້ຳອົບນ້ຳຫອມ ສົງພະ, ສົງຜູ້ເຖົ້າຜູ້ແກ່, ສົງພໍ່ແມ່, ອວຍພອນເຊິ່ງກັນແລະກັນ. ມີພິທີບາສີສູ່ຂວັນປີໃໝ່, ເສຍເຄາະກຳເພື່ອຮັບໂຊກ, ເຮັດບຸນທານຕ່າງໆ. ຕົບພະທາດຊາຍຢູ່ຕາມວັດວາອາຣາມ, ຢູ່ຕາມຫາດຊາຍແຄມນ້ຳ,

ປ່ອຍສັດ. ກິດຈະກຳຕ່າງໆ ລ້ວນແຕ່ເປັນການບຳເພັນກຸສົນໄປໃຫ້ດວງວິນຍານພໍ່ແມ່, ຄູບາອາຈານ ຫລື ຜູ້ມີບຸນຄຸນອື່ນໆ.

ປີໃໝ່ລາວໄດ້ມີນິທານກ່າວໄວ້ດັ່ງນີ້: ແຕ່ກ່ອນມີລູກເສດຖີຜູ້ໜຶ່ງ ຊື່ ທ້າວທຳມະປາລະກຸມມານ, ຮຽນຈົບວິຊາໄຕເພດ ແມ່ນແຕ່ພາສາສັດກໍຍັງຮູ້ຈັກ ແລະ ຍັງມີພະຍາກະບິນລະພົມ ເປັນອາຈານສອນ ມຸງຄຸນ. ມື້ໜຶ່ງກາບິນລະພົມໄດ້ລົງມາຖາມບັນຫານຳທຳມະປາລະກຸມມານ ຖ້າແກ້ບໍ່ໄດ້ຈະຕັດຄໍ, ຖ້າແກ້ ໄດ້ຈະຕັດຄໍຕົນເອງບູຊາທຳມະປາລະກຸມມານ. ບັນຫາກໍມີຢູ່ວ່າ " ຍາມເຊົ້າລາສີຢູ່ໃສ? ຍາມກາງເວັນ ລາສີຢູ່ໃສ? ຍາມກາງຄືນລາວສີຢູ່ໃສ ? " ກະບິນລະພົມພັດໃຫ້ເຈັດວັນ. ເມື່ອຄົບເຈັດວັນທຳມະປາລະ ກຸມມານກໍມາແກ້ບັນຫາໃຫ້ຟັງຢ່າງຖືກຕ້ອງໝົດທຸກຂໍ້. ກະບິນລະພົມ ຈຶ່ງຍອມຕັດຄໍຕົນເອງ ຕາມສັນຍາ ໄວ້ ແຕ່ຍ້ອນວ່າຫົວຂອງກະບິນລະພົມ ມີຄວາມສັກສິດຫລາຍ. ສະນັ້ນ, ກ່ອນຈະຕັດຄໍ, ກະບິນລະພົມ ຈຶ່ງເອີ້ນ ທິດາທັງເຈັດມາເຂົ້າເຝົ້າ. ທິດາທັງ 7 ມີພະນາມຄືດັ່ງນີ້:

1. ( ນ. ປະຈຳວັນອາທິດ ) ຊື່ທຸງສະເທວີ ມີພະຍາຄຸດເປັນພາຫະນະ.
2. ( ນ. ປະຈຳວັນຈັນ ) ຊື່ໂຄລາຄະເທວີ ມີເສືອເປັນພາຫະນະ.
3. ( ນ. ປະຈຳວັນອັງຄານ ) ຊື່ຮາກສະເທວີ ( ລາກສະ ) ມີໝູເປັນພາຫະນະ.
4. ( ນ. ປະຈຳວັນພຸດ ) ຊື່ ມຸນທາເທວີ ມີລວາ ເປັນພາຫະນະ
5. (ນ. ປະຈຳວັນພະຫັດ ) ຊື່ ກິລິນີເທວີ ມີຊ້າງເປັນພາຫະນະ
6. ( ນ. ປະຈຳວັນສຸກ ) ຊື່ ກິມິທາເທວີ ມີຄວາຍເປັນພາຫະນະ
7. ( ນ. ປະຈຳວັນເສົາ ) ຊື່ ມະໂຫທອນເທວີ ມີນົກຍຸງເປັນພາຫະນະ

ເມື່ອທິດາທັງເຈັດມາໂຈມເອົາຫົວຂອງພໍ່ ແລ້ວເອົາໄປປະດິດສະຖານໄວ້ຢູ່ຄັນທຸມາລີ ທີ່ເທິງພູ ເຂົາໄກລາດ; ຄັນເຖິງວັນສັງປີໃໝ່; ທິດາແຕ່ລະຄົນກໍຜັດປ່ຽນກັນເຊີນເອົາຫົວຂອງພໍ່ອອກມາແຫ່ອ້ອມ ເຂົາສຸເມຣຸ ຫລືເຂົາສະເໝນ ປີລະຄົນຕາມລຳດັບ ເພື່ອໃຫ້ເກີດຄວາມຢູ່ເຢັນເປັນສຸກ. ດັ່ງນັ້ນ, ຈຶ່ງເປັນທີ່ ມາຂອງການເຮັດບຸນປີໃໝ່ລາວມາຮອດປັດຈຸບັນນີ້.

ປີໃໝ່ລາວດັ້ງເດີມແທ້ຈະແມ່ນມື້ຂຶ້ນ 1 ຄ່ຳ ເດືອນຈຽງ ຫລືເດືອນອ້າຍ, ແຕ່ຍ້ອນມີການປ່ຽນແປງ ຈຶ່ງມາເປັນເດືອນ 5 ຕາມປະຕິທິນປະເພນີລາວ. ປີໃໝ່ຈະຖືກມື້ໃດແທ້ ຫລືວັນເດືອນປີໃດ ກໍສຸດແລ້ວ ແຕ່ການຄຳນວນຂອງນັກໂຫລາສາດ, ແຕ່ແນ່ນອນວ່າ ຈະຕ້ອງຕົກຢູ່ໃນເດືອນຂຶ້ນ ຫລືປະມານກາງ ເດືອນເມສາ.



6) ເດືອນຫົກ-ບຸນບັ້ງໄຟ

ເດືອນຫົກແມ່ນບຸນບັ້ງໄຟ ແລະບຸນວິສາຂະບູຊາ, ບຸນບັ້ງໄຟເປັນບຸນປະເພນີດັ້ງເດີມຂອງລາວ, ແມ່ນພິທີບູຊາແຖນ ເພື່ອຂໍຄວາມຢູ່ສຸກຂຸມເຢັນ, ຂໍນ້ຳຟ້ານ້ຳຝົນຈາກແຖນ ເພື່ອຈະມາທຳການເພີ່ມພູນຜະລິດຜົນ. ບຸນນີ້ກໍເປັນບຸນປາງໃຫຍ່, ມີການເຊີ້ງ, ແຫ່ບັ້ງໄຟ, ຈູດບັ້ງໄຟເສັງກັນ, ຕີກອງຫາງ, ມັກເວົ້າ ແລະເຊີ້ງຄຳເພີ ພ້ອມທັງຫລິ້ນເປື້ອນເຊັ່ນ ເອົາຂີ້ຕົມທາໜ້າ ແລະຕົນໂຕ, ນຸ່ງເຄື່ອງຜິດເພດ... ໂດຍສະເພາະແມ່ນຊາຍໜຸ່ມ.

ການເຮັດບຸນບັ້ງໄຟ ໄດ້ມີນິທານ ຫລືເລື່ອງເລົ່າຕ່າງໆນານາສະຫລັບສັບຊ້ອນ ແລະກ່ຽວຂ້ອງກັນຫລາຍຢ່າງ, ຕົວຢ່າງໜຶ່ງຈາກມູນເຫດຂອງການເຮັດບຸນບັ້ງໄຟ ມີເລື່ອງເລົ່າໄວ້ວ່າ: ຢູ່ເທິງສະຫວັນຊັ້ນຟ້າມີເທວະບຸດອົງໜຶ່ງຊື່ວັດສາກາລະ ເຊິ່ງເປັນຜູ້ແຕ່ງນ້ຳຝົນໃຫ້ຕົກລົງມາເມືອງມະນຸດ. ເທບອົງນີ້, ມີຄວາມມັກກ່ຽວກັບການບູຊາໄຟຫລາຍທີ່ສຸດ. ສະນັ້ນ, ມະນຸດຜູ້ໃດບູຊາໄຟ ແມ່ນຖືວ່າເປັນການບູຊາ ເພິ່ນແລ້ວເພິ່ນກໍຈະແຕ່ງນ້ຳຟ້ານ້ຳຝົນສົ່ງລົງມາໃຫ້ຖືກຕ້ອງຕາມລະດູການ. ດ້ວຍເຫດນີ້ ຄົນບູຮານຈຶ່ງບູຊາໄຟດ້ວຍການຈູດ ຫລືເຮັດບຸນບັ້ງໄຟ.

ນອກຈາກບຸນບັ້ງໄຟແລ້ວ, ໃນເດືອນຫົກ ຍັງມີບຸນສຳຄັນ ທາງພຸດທະສາສະໜາຄືວັນວິສາຂະບູຊາ. ຄຳວ່າ " ວິສາຂະ " ແປວ່າ ເດືອນຫົກເພັງ. ດັ່ງນັ້ນ, ການເຮັດບຸນວິສາຂະບູຊາເປັນການທຳບຸນສະຫລອງວັນປະສູດ, ວັນຕັດສະຣູ້ ແລະວັນປະລິນິບພານຂອງພະພຸດທະເຈົ້າໂຄຕະມະນັ້ນເອງ. ພະອົງໄດ້ປະສູດມື້ເພັງໃນເດືອນຫົກ ປີຈໍ ກ່ອນ ພສ 80 ປີ, ຕັດສະຣູ້ເປັນພະພຸດທະເຈົ້າປີວອກ, ກ່ອນ ພສ 45 ປີ ແລະປະລິນິບພານປີມະເສັງ ພສ ພຸດທະສັກກະລາດກໍ່ຕັ້ງ ປີທີ 1. ເຊິ່ງເປັນມື້ເພັງເດືອນຫົກນັ້ນເອງ. ສະນັ້ນ, ເດືອນຫົກເພັງແຕ່ລະປີ ປະຊາຊົນລາວ ຜູ້ນັບຖືສາສະໜາພຸດ ຈຶ່ງເຮັດບຸນຕັກບາດຖວາຍທານ ແລະຟັງເທສະໜາ ເພື່ອລະນຶກບຸນຄຸນຂອງພະພຸດທະເຈົ້າຕາມຮີດຄອງປະເພນີອັນດີງາມ.

7) ເດືອນເຈັດ-ບຸນບູຊາມະເຫສັກຫລັກເມືອງ ( ບຸນເບີກຊຳລະ )

ເດືອນເຈັດເພິ່ນເຮັດບຸນບູຊາເທພະອາຮັກຫລັກເມືອງ, ເທວະດາຟ້າແຖນ. ຊາວບ້ານພ້ອມກັນເຮັດພິທີລ້ຽງຜີເສື້ອເມືອງ, ເຊີນເອົາເທວະດາອາຮັກຫລັກເມືອງເຂົ້າມາຊຳຣະຄວາມບໍ່ດີບໍ່ງາມ, ຂັບໄລ່ສິ່ງຂຶດໆດຈັງໄຮທັງຫລາຍອອກຈາກບ້ານເມືອງ, ປ້ອງກັນອັນຕະລາຍບໍ່ໃຫ້ເຂົ້າມາ ແລະເຮັດໃຫ້ຊາວບ້ານມີແຕ່ຄວາມສຸກຂຸ່ມເຢັນຕະຫລອດປີ.

ເດືອນເຈັດ ປະຊາຊົນລາວບູຮານ ທຳພິທີລ້ຽງຜີເມືອງ ຕາມແບບຂອງຜູ້ຖືຜີ ຫລືລັດທິສາສະໜາ



ພາມ ອັນເປັນຮີດຄອງປະເພນີທີ່ເກົ່າແກ່ ທີ່ເຄີຍປະຕິບັດກັນມາກ່ອນມີການນັບຖືພຸດທະສາສະໜາ. ຕົ້ນເຫດທີ່ຈະມາມີການປະຕິບັດປະເພນີລ້ຽງຜີເມືອງນີ້ ເຊິ່ງບາງບ່ອນເອີ້ນວ່າ ຜີປູ່ຕາ ໄດ້ມີນິທານກ່າວໄວ້ ໃນຄຳພີ ( ປິສາຈະປະກະລະ ) ເລື່ອງພະຍາພະລາລາດ .

## 8) ເດືອນແປດ-ບຸນເຂົ້າວັດສາ ( ພັນສາ )

ເດືອນແປດ ເພັງເປັນມື້ພະສົງເຂົ້າຈຳວັດສາ. ຄຳວ່າ " ວັດສາ ຫລື ພັນສາ " ແປວ່າ ຝົນ ຫລື ລະດູຝົນ. ພະສົງທັງໝົດຈະຕ້ອງຈຳວັດສາຕະຫລອດ 3 ເດືອນເຕັມຄື ເດືອນ 8 ເພັງ ເຖິງເດືອນ 11 ເພັງ. ພະສົງຈຳພັນສາຢູ່ວັດ, ບໍ່ໄດ້ທ່ຽວໄປນອນຄ້າງຄືນແບບບໍ່ຈຳເປັນ ເຊິ່ງມີວິໄນສົງໂດຍສະເພາະ. ມື້ເຂົ້າພັນສາຊາວພຸດພາກັນທໍ່ເຂົ້າຕົ້ມ, ເຮັດເຂົ້າໜົມ, ເຄື່ອງພັນສາໄປຕັກບາດຖວາຍພະຢູ່ວັດເປັນຂະບວນຄຶກຄື້ນ.

ມູນເຫດຂອງການເຮັດບຸນເຂົ້າພັນສາ: ໃນສະໄໝພະພຸດທະເຈົ້າຍັງມີຊີວິດຢູ່, ຄາວໜຶ່ງເປັນລະດູຝົນ ບັນດາພະສົງທີ່ເປັນລູກສິດຂອງພະອົງ ໄດ້ພາກັນທ່ຽວໄປຕາມບ້ານເມືອງຕ່າງໆ. ການທ່ຽວໄປນັ້ນກໍໄດ້ຢຽບຢໍ່າຄັນນາຕາກ້າຮົ້ວສວນ ແລະຜົນລະປູກລູກໄມ້ຂອງຊາວບ້ານ ຈົນເປ່ເພເສຍຫາຍ. ພວກຊາວບ້ານຈຶ່ງຕິຕຽນນານາວ່າ ພະສົງນັ້ນ ມີແຕ່ທ່ຽວໄປມາ ແມ່ນແຕ່ສັດຈຳພວກຕ່າງໆກໍຍັງຮູ້ຈັກຢຸດຢັ້ງໃນລະດູຝົນເປັນຕົ້ນ.

ເມື່ອພະພຸດທະເຈົ້າຊົງຊາບປະການດັ່ງກ່າວຈາກຊາວບ້ານ, ພະອົງຈຶ່ງມີລະບຽບວິໄນເຄັ່ງຄັດເມື່ອເຖິງລະດູເດືອນ 8 ( ຍາມຝົນຕົກໜັກ ) ພະສົງຕ້ອງເຂົ້າຈຳພັນສາຕະຫລອດສາມເດືອນ ໂດຍກຳນົດເອົາມື້ເດືອນ 8 ເພັງຫາເດືອນ 11 ເພັງ. ໄລຍະຈຳພັນສາ 3 ເດືອນພະສົງຈະມີວິໄນເຄັ່ງຄັດຄື.

1. ພໍ່ແມ່ ຫລື ເພື່ອນັກບວດດ້ວຍກັນ ເຈັບໄຂ້ ສາມາດໄປພະຍາບານ ຫລືປິ່ນປົວໄດ້.
2. ເພື່ອນນັກບວດນຳກັນມີຄວາມກະສັນຍາກສິກ ສາມາດໄປເລົ່າໂລມໃຫ້ເຊົາຍາກສິກໄດ້.
3. ເມື່ອມີເຫດການເກີດຂຶ້ນເຊັ່ນ ກຸຕິເພ ໄປຫາເຄື່ອງສຳພາລະມາສ້ອມແປງໄດ້.
4. ຊາວບ້ານຊາວເມືອງອື່ນ ມານິມົນໄປທຳບຸນ ສາມາດໄປສະໜອງສັດທາໄດ້.
5. ນອກຈາກນີ້ ຖ້າມີເລື່ອງສຳຄັນ ແລະຈຳເປັນກໍອະນຸໂລມໄປໄດ້ຄື:
   5.1. ຖືກໂຈນ ຫລືສັດຮ້າຍມາບຽດບຽນ.
   5.2. ບ່ອນຢູ່ຖືກນ້ຳຖ້ວມ, ໄຟໄໝ້ ຫລືເພພັງຈົນຢູ່ບໍ່ໄດ້

5.3. ໄພຮ້າຍໃນຂໍ້ ( 5.1 ແລະ 5.2 ) ເກີດຂຶ້ນໃນບ້ານທີ່ພະສົງອາໄສບິນທະບາດ, ຖ້າ ຊາວບ້ານເກີດອົບພະຍົບໄປ ກໍສາມາດຍ້າຍໄປນຳຊາວບ້ານໄດ້.

5.4. ມີຄວາມອຶດຢາກອາຫານການກິນເຫລືອປະມານ ບໍ່ສາມາດທົນຢູ່ຕໍ່ໄປໄດ້ກໍໄປໄດ້.

5.5. ມີຜູ້ຍິງມາກວນໃຈ ຫລືພີ່ນ້ອງມາກວນ ຫລືຍົວະເຍົ້າໃຫ້ລາສິກ ກໍສາມາດໜີໄດ້.

5.6. ພະສົງວັດອື່ນ ພວມຈະແຕກແຍກກັນ ຫລືແຕກກັນແລ້ວ ໄປລະງັບເຫດກໍໄດ້.

ເມື່ອອອກພັນສາແລ້ວພະສົງກຈະໄດ້ຮັບອະນິສົງ 5 ຢ່າງຄື: .

1. ໄປນອນຄ້າງຄືນ ໂດຍບໍ່ຕ້ອງຄອບລາກໍໄດ້.
2. ນັ່ງສັນເຂົ້າຮ່ວມຫລາຍອົງກໍໄດ້.
3. ຕາມທຳມະດາພະສົງມີຜ້າ 3 ຜືນຄື ຜ້າສະບົງ ( ຜ້ານຸ່ງ ), ຜ້າຈີວອນ ( ຜ້າຄຸມ ), ຜ້າສັງຄາ ( ຜ້າຫົ່ມນອກ). ເມື່ອອອກພັນສາແລ້ວ ເອົາໄປນຳພຽງສອງຜືນກໍໄດ້.
4. ພະສົງໄດ້ຈຳພັນສາແລ້ວ ຈະເກັບຜ້າຮັກສາໄວ້ຫລາຍຜືນກໍໄດ້ ( ນອກຈາກສາມຜືນ )
5. ເມື່ອມີລາບເກີດຂຶ້ນຄື ມີຜູ້ເອົາຈີວອນມາຖວາຍ ຕ້ອງແຈກໃຫ້ພະສົງຕາມລຳດັບຂອງພັນສາ.

9) ເດືອນເກົ້າ-ບຸນຫໍ່ເຂົ້າປະດັບດິນ

- ບຸນເຂົ້າປະດັບດິນ ແມ່ນເດືອນ 9 ດັບ. ເພິ່ນເຮັດບຸນອຸທິດສ່ວນກຸສົນໄປໃຫ້ດວງວິນຍານຜູ້ລ່ວງລັບໄປແລ້ວ. ຕາມຄວາມເຊື່ອຂອງຄົນບູຮານວ່າ ຕອນເຊົ້າມືດຂອງວັນນີ້ ພະຍາຍົມພິບານໄດ້ປ່ອຍສັດນາຮົກອອກມາຮັບຂອງທານທີ່ຍາດພີ່ນ້ອງສົ່ງໄປ. ສະນັ້ນ, ເຮົາຈຶ່ງນິຍົມເອົາຫໍ່ເຂົ້າປາອາຫານ, ໝາກໄມ້ໄປຢາຍໄວ້ຢູ່ແຄມວັດ, ແຄມທາງ, ແຄມເຮືອນ, ແຄມປ່າ, ຫົວໄຮ່ປາຍນາ, ໄວ້ຕາມດິນແຕ່ເຊົ້າ ດັ່ງນັ້ນ, ຈຶ່ງເອີ້ນວ່າ " ເຂົ້າປະດັບດິນ " .

ຕົ້ນເຫດຂອງການເຮັດບຸນນີ້ ປາງກ່ອນມີຍາດພີ່ນ້ອງພະຍາພິມພິສານ ພະເຈົ້າແຜ່ນດິນເມືອງລາຊະຄຶ ປະເທດອິນເດຍສະໄໝພຸດທະການ ພາກັນເຮັດສັງຄະທານໄປເຄນພະສົງ, ໃນຂະນະແຕ່ງອາຫານນັ້ນ ພວກເດັກນ້ອຍລູກຫລານພາກັນໄຫ້ແອ່ວກິນ, ພໍ່ແມ່ອຶດບໍ່ໄດ້ກໍຢິບບາຍໃຫ້ເດັກພວກນັ້ນເຊິ່ງນັບວ່າ ກິນກ່ອນສົງ ຫລືກິນຂອງສົງ

ເມື່ອຕາຍໄປແລ້ວກໍໄປຕົກນາຮົກອະເວຈີ, ຄັນພົ້ນຈາກນາຮົກກໍມາເກີດເປັນເຜດ. ມາວັນໜຶ່ງພະຍາພິມພິສານຖວາຍທານແກ່ພະສົງ ອັນມີພະພຸດທະເຈົ້າເປັນປະມຸກ, ແຕ່ບໍ່ໄດ້ອຸທິດສ່ວນກຸສົນໄປຫາພວກເຜດເຫລົ່ານັ້ນ. ພໍຕົກກາງຄືນມາພະຍາພິມພິສານນອນຝັນ ຍິນສຽງພວກເຜດມາຮ້ອງ, ມາເຄາະຝາເຮືອນໝົດຄືນຈົນນອນບໍ່ຫລັບ.

ເມື່ອຕື່ອນເຊົ້າມາ, ພະຍາພິມພິສານຈຶ່ງໄດ້ສະເດັດເຂົ້າເຝົ້າພະພຸດທະເຈົ້າ ຢູ່ວັດເວລຸວັນ. ຈາກນັ້ນ, ພະພຸດທະເຈົ້າຈຶ່ງແຈ້ງສາເຫດ ແລະເທດສະໜາສັ່ງສອນໃຫ້ພະຍາພິມພິສານ ຈຶ່ງໃຫ້ທານເຂົ້າໂພຊະນາອາຫານໄປເຖິງຍາຕິກາວິງສາ-ພວກເຜດເຫລົ່ານັ້ນ ກໍຈະໄດ້ຮັບຜົນ ແລະພົ້ນຈາກຄວາມທຸກທໍລະມານ. ການເຮັດບຸນນີ້ ນອກຈາກເລື່ອງເລົ່ານີ້ ຍັງມີເລື່ອງອື່ນໆ ເຊັ່ນ ຕາມໜັງສືເທດສະໜາ ບຸນທີ່ເຂົ້າປະດັບດິນ ເປັນປະເພນີສືບເນື່ອງມາຈາກສາສະໜາພາມ ຕາມປາກົດຢູ່ໃນຊາດົກເລື່ອງ ( ມັດຖະກຸນທະລີ ) ກ່ອນຄັ້ງພຸດທະການ .

10) ເດືອນສິບ-ບຸນເຂົ້າສະຫລາກ ( ເຂົ້າສາກ )

ບຸນເຂົ້າສະຫລາກແມ່ນເຮັດໃນເດືອນ 10 ເພັງ. ຊາວບ້ານທໍາເຂົ້າຕົ້ມ, ເຂົ້າໜົມ, ຂອງຫວານ, ຂອງຄາວ,. ຄໍາໝາກກອກຢາໃສ່ສະຫລາກແລ້ວໃສ່ກວຍ ຫລືກະທໍທີ່ສານດ້ວຍໄມ້, ຂຽນຊື່ຜູ້ອຸທິດໃສ່ ແລະຊື່ຜູ້ອຸທິດໄປເຖິງ ແລ້ວນໍາໄປຖວາຍແກ່ພະສົງຢູ່ວັດ ເພື່ອທໍາພິທີຕາມສາສະໜາ. ຈາກນັ້ນ ພະສົງຈະຈົກເອົາສະຫລາກຢູ່ກວຍ ຖືກຊື່ໃຜ ກໍຖວາຍແກ່ພະສົງອົງນັ້ນ, ແລ້ວກໍອຸທິດບຸນໃຫ້ດວງວິນຍານໃຫ້ຜູ້ລ່ວງລັບໄປນັ້ນ ຈຶ່ງເອີ້ນວ່າ ເຂົ້າສະຫລາກ. ການເຮັດບຸນເຂົ້າສາກ, ກິດຈະກໍາ ແລະຮູບການຕ່າງໆຄ້າຍຄືບຸນເຂົ້າປະດັບດິນ.

ການເຮັດບຸນເຂົ້າສາກ ມີເລື່ອງເລົ່າໄວ້ວ່າ ມີລູກຊາຍເສດຖີຜູ້ໜຶ່ງ ເມື່ອພໍ່ຕາຍໄປແລ້ວ ຜູ້ເປັນແມ່ຊອກຫາຍິງສາວມາໃຫ້ເປັນເມຍ, ແຕ່ນາງບໍ່ມີລູກ ແມ່ຈຶ່ງເອົາຍິງສາວໃຫ້ອີກຜູ້ໜຶ່ງມາເປັນເມຍນ້ອຍ. ເມື່ອເມຍນ້ອຍມີລູກ, ເມຍຫລວງຄິດອິດສາຈຶ່ງຄິດຂ້າເມຍນ້ອຍ ໂດຍເອົາຢາໃຫ້ເມຍນ້ອຍກິນໃຫ້ຫລຸລູກເສຍ ເຮັດແນວນັ້ນ 2-3 ຄັ້ງ; ໃນທີ່ສຸດເມຍນ້ອຍກໍຕາຍ. ກ່ອນຈະຕາຍເມຍນ້ອຍໄດ້ຜູກເວນນໍາເມຍຫລວງວ່າ ຂໍໃຫ້ເກີດເປັນນາງຍັກຂີນີ ໃຫ້ມາກິນໂຕມັນ. ເມື່ອເມຍນ້ອຍ ແລະເມຍຫລວງ ຈອງເວນກໍາກັນຕ່າງຄົນຕ່າງຕາຍໄປ ແລະເກີດເປັນສັດ. ເມຍນ້ອຍທີ່ເກີດເປັນແມວ, ເກີດເປັນເນື້ອ ແລະເກີດເປັນຍັກ; ສ່ວນເມຍຫລວງຕາຍໄປເກີດເປັນແມ່ໄກ່, ເກີດເປັນເສືອ ແລະເກີດເປັນຄົນ ທັງສອງຈອງເວນກໍາ. ມື້ນຶ່ງ ນາງຍັກໄລ່ຈັບລູກຜູ້ເປັນເມຍຫລວງມາກິນ, ແຕ່ນາງຜູ້ເປັນເມຍຫລວງອູ້ມລູກແລ່ນໄປວັດເຊຕາວັນ; ໃນຂະນະນັ້ນ ພະພຸດທະເຈົ້າໄດ້ພວມເທສະໜາສັ່ງສອນນອຸປະສົກອຸປະສິກາຢູ່, ພະອົງຈຶ່ງໃຫ້ພະອານົນໄປບອກນາງຍັກຂີນີມາສັ່ງສອນ ບໍ່ໃຫ້ຈອງເວນຈອງກໍາກັນອີກຕໍ່ໄປ; ຈາກນັ້ນ ພະພຸດທະເຈົ້າຈຶ່ງໃຫ້ນາງຍັກຂີນີໄປຢູ່ຫົວໄຮປາຍນາແລ້ວລ້ຽງເກືອໃຫ້ດີ.

11) ເດືອນສິບເອັດ-ບຸນອອກພັນສາປະວໍລະນາ ( ປະວາລະນາ )

ຄໍາວ່າ " ປະວໍລະນາ " ແປວ່າ ບອກກັນໄວ້ລ່ວງໜ້າ. ບຸນອອກພັນສາແມ່ນເດືອນ 11 ເພັງ. ພາຍ

ຫລັງພະສົງຢູ່ຈຳພັນສາໄດ້ສາມເດືອນ. ໃນການອອກພັນສານີ້, ຊາວພຸດທະສະນິກະຊົນທັງຫລາຍພາກັນເຮັດບຸນຕັກບາດ. ສ່ວນພະສົງຈະໄດ້ຮັບອະນິສົງໃນການຈຳພັນສາຕາມພະພຸດທະອົງຊົງບັນຍັດໄວ້ໃນຄຳພີ.

ບຸນອອກພັນສາປະວໍລະນາ ມີກິດຈະກຳທີ່ມ່ວນຊື່ນຄຶກຄື້ນຄື ມີການໄຫລເຮືອໄຟໂຄກ ແລະ ໄຫລເຮືອໄຟນ້ຳ ຕາມປະເພນີສາສະໜາພາມ ເຊິ່ງມີມາແຕ່ດົນນານ ໂດຍສະເພາະແມ່ນສະໄໝເຈົ້າສຸລິຍະວົງສາ. ການເຮັດພິທີໄຫລເຮືອໄຟນີ້, ມີຈຸດປະສົງບູຊາພະຜູ້ເປັນເຈົ້າ. ນອກຈາກການໄຫລເຮືອໄຟແລ້ວ ຍັງມີການຊ່ວງເຮືອ, ການຊ່ວງເຮືອຖືເປັນກິລາທາງນ້ຳ. ມາຮອດສະໄໝປັດຈຸບັນ ການຊ່ວງເຮືອບໍ່ສະເພາະແຕ່ຈັດໃສ່ມື້ອອກພັນສາເທົ່ານັ້ນ, ເພິ່ນຍັງນິຍົມຈັດໃສ່ກ່ອນ ຫລືຫລັງອີກ. ພິເສດໃນບຸນອອກພັນສາ ຈະມີປາກົດການທຳມະຊາດຕາມລຳແມ່ນ້ຳຂອງ ເຊິ່ງເວົ້າກັນວ່າ " ບັ້ງໄຟພະຍານາກ " ບັ້ງໄຟພະຍານາກໄດ້ກາຍເປັນວັດທະນະທຳສອງຝັ່ງຂອງໄປແລ້ວ.

ສາເຫດຂອງການເຮັດບຸນອອກພັນສາ ສິ່ງທີ່ຫລີກລ່ຽງບໍ່ໄດ້ກໍຄື ເມື່ອໄດ້ເຂົ້າພັນສາແລ້ວ ຕ້ອງໄດ້ອອກພັນສາ; ພ້ອມກັນນັ້ນ ກໍເປັນການເປີດໂອກາດໃຫ້ພະສົງສະມາເນນໄດ້ມີການຕັກເຕືອນ, ໄປທ່ຽວເຜີຍແຜ່ສຶກສາອົບຮົມຫລັກສິນທຳທຳມະຈະລິຍາ, ໄດ້ມີໂອກາດຢ້ຽມຢາມຖາມຂ່າວພໍ່ອອກແມ່ອອກເປັນຕົ້ນ.

12) ເດືອນສິບສອງ-ບຸນກະຖິນ ແລະບຸນໄຫວ້ທາດ

ລະດູການເຮັດບຸນກະຖິນ ນັບແຕ່ມື້ແຮມ 1 ຄ່ຳເດືອນ 11 ຈົນຮອດວັນເພັງເດືອນ 12 ເປັນ ເວລາໜຶ່ງເດືອນພໍດີ. ໄລຍະນີ້ທາງວິໄນສົງຮຽກວ່າ " ຈີວະຣະກາລະສະໄໝ " ແປວ່າ ໄລຍະເວລາເຮັດຜ້າຈີວອນ ຫລືຮຽກວ່າ " ຈີວະຣະທານະສະໄໝ " ແປວ່າ ເວລາໃຫ້ຈີວອນ .

ສ່ວນຄຳວ່າ " ກະຖິນ " ມີສອງຄວາມໝາຍຄື 1 ຄວາມໝາຍໃນທາງພາສາລາວແທ້ແປວ່າ ໄມ້ກັງ ຫລື ໄມ້ຄຶງ, ໄທເອີ້ນວ່າ ໄມ້ສະດຶງ ຄືໄມ້ເຮັດໃຫ້ເຄັ່ງ. ໃນສະໄໝກ່ອນໆພຸ້ນ ບໍ່ມີຜ້າຈີວອນຂາຍຢ່າງຫລວງຫລາຍຢູ່ຕະຫລາດຄືສະໄໝນີ້. ສະນັ້ນ, ພະພຸດທະເຈົ້າຊົງອະນຸຍາດໃຫ້ພະສົງ ຊອກຫາໃຫ້ໄດ້ມາຖືກຕ້ອງຕາມວິໄນສົງ ແລ້ວມາຫຍິບຕໍ່ເຂົ້າກັນ, ເວລາຫຍິບຈຳເປັນຕ້ອງໃຊ້ໄມ້ແບບ ຫລືໄມ້ຄຶງ. ການຫຍິບຜ້າຕາມໄມ້ຄຶງຈຶ່ງຮຽກວ່າ ຜ້າກະຖິນ. 2 ຄວາມໝາຍໃນຄຳນາມ ພາສາບາລີແປວ່າ ຜ້າທີ່ເຄີນໃຫ້ພະສົງທີ່ຈຳວັດສາ. ໝາຍຄວາມວ່າ ການເຮັດບຸນດ້ວຍການເອົາ ຜ້າໄປເຄີນໃຫ້ຄູບາ ຫລືພະສົງຢູ່ໃນວັດ. ບຸນນີ້ ຖືເປັນອະນິສົງຜົນແຫ່ງບຸນຂອງພະສົງທີ່ຈຳພັນສາ ຕະຫລອດ 3 ເດືອນເຕັມ ສົມຄວນຈະຕ້ອງໄດ້ຮັບກອງກະຖິນ ( ຈຸລະກະຖິນ ຫລືມະຫາກະຖິນ ).

ບຸກຄົນໃດມີສັດທາເຮັດກອງກະຖິນສ່ວນຕົວກໍໄດ້, ສ່ວນລວມກໍໄດ້. ຖ້າຈະເຮັດກອງກະຖິນໄປວັດ ເພິ່ນໄປປັກສະຫລາກໄວ້ ຫລືບອກລ່ວງໜ້າກ່ອນກາງພັນສາ. ຈາກນັ້ນ ທາງຄະນະຝ່າຍສົງປະຈໍາວັດກໍ ຈະໄດ້ຮັບກອງກະຖິນ. ກ່ອນຈະຮັບກອງກະຖິນພະສົງຈະຫາລືກັນວ່າ ພະສົງອົງໃດຄວນຈະໄດ້ຮັບກອງກະຖິນ.

ນອກຈາກບຸນກະຖິນແລ້ວ, ເພິ່ນຍັງເຮັບບຸນໄຫວ້ທາດ. ການເຮັດບຸນໄຫວ້ທາດ ນັບວ່າເປັນບຸນປາງໃຫຍ່ຄຶກຄື້ນມ່ວນຊື່ນ ແລະສໍາຄັນຕໍ່ປະເທດຊາດບ້ານເມືອງຫລາຍທີ່ສຸດ. ແຕ່ກ່ອນປະຊາຊົນລາວເຮັດບຸນໄຫວ້ພະທາດຫລາຍແຫ່ງເຊັ່ນ ພະທາດຫລວງວຽງຈັນ, ພະທາດໝາກໂມ ( ວັດວິຊຸນ ) ຫລວງພະບາງ, ພະທາດອິງຮັງ ແລະພະທາດໂພ່ນ ແຂວງສະຫວັນນະເຂດ, ພະທາດສີໂຄດຕະບອງຢູ່ເມືອງເກົ່າແຂວງຄໍາມ່ວນເປັນຕົ້ນ. ແຕ່ດຽວນີ້ ບຸນໄຫວ້ພະທາດໝາກໂມ ແລະພະທາດໂພ່ນ ເພິ່ນເຊົາແລ້ວ.

ພະທາດຫລວງວຽງຈັນ ສ້າງຂຶ້ນປີ 1566 ຫລັງຈາກພະເຈົ້າໄຊຍະເຊດຖາທິລາດ ພັດທະນາເມືອງວຽງຈັນເປັນລາຊະທານີລ້ານຊ້າງໄດ້ 6 ປີ. ການເຮັດບຸນນະມັດສະການພະທາດຫລວງວຽງຈັນ ນັບວ່າເປັນປະເພນີ ທີ່ສໍາຄັນຢ່າງຍິ່ງທີ່ສືບຕໍ່ກັນມາໄດ້ຫລາຍສະຕະວັດ ໂດຍມີພະມະຫາກະສັດອົງເປັນປະມຸກໃນສະໄໝຕ່າງໆມາເປັນປະທານພິທີປະຈໍາທຸກໆປີບໍ່ຂາດ.

ສິ່ງທີ່ນໍາມາສັກກະລະບູຊາໄຫວ້ພະທາດຫລວງມີດອກໄມ້ ທູບທຽນ, ສິ່ງສໍາຄັນຂາດບໍ່ໄດ້ແມ່ນຜາສາດເຜິ້ງຄືນມື້ຂຶ້ນ 13 ຄໍ່າເດືອນ 12 ເພິ່ນຈະເລີ່ມແຫ່ຜາສາດຢູ່ວັດສີເມືອງ ( ຫລັກເມືອງ ) ປະມານ 7 ໂມງແລງ. ມື້ຂຶ້ນ 14 ຄໍ່າ ມີພິທີຮັບນໍ້າໃຫຍ່ຢູ່ວັດອົງຕື້ ແລະມື້ 15 ຄໍ່າເພັງ ເດືອນ 12 ເປັນມື້ດໍາເນີນພິທີສຸດທ້າຍ ຢູ່ພະທາດຫລວງ ໂດຍການຕັກບາດຖວາຍທານຢ່າງຄຶກຄື້ນ.

ໃນສະໄໝບູຮານ ແລະ ສະໄໝຕ່າງໆຈົນສືບມາເຖິງສູ່ມື້ນີ້ ກ່ອນຈະເຖິງມື້ໄຫວ້ທາດຫລວງ ໄດ້ມີການຄົບງັນມາກ່ອນແລ້ວຢ່າງໜ້ອຍ 5-7 ວັນ, ການຄົບງັນມີກິດຈະກໍາກິລາ ແລະສິລະປະວັນນະຄະດີຕາມປະເພນີ. ມາຮອດສະໄໝນີ້ ພະທາດຫລວງວຽງຈັນໄດ້ກາຍເປັນສັນຍະລັກຂອງຊາດ ( ກາຊາດ ).

ສະຫລຸບ: ຮີດ 12 ທີ່ກ່າວມາຂ້າງເທິງມີບາງບຸນປະເພນີ ບໍ່ໄດ້ຈັດຕັ້ງປະຕິບັດແລ້ວ ຫລື ຍັງພາກັນເຮັດຢູ່ບາງທ້ອງຖິ່ນທີ່ຈໍາກັດເທົ່ານັ້ນ. ສ່ວນບຸນທີ່ຈັດຕັ້ງປະຕິບັດເປັນຂະບວນຂອງຊາວພຸດເຊັ່ນ ບຸນປີໃໝ່, ບຸນເຂົ້າພັນສາ ແລະອອກພັນສາ, ບຸນຫໍ່ເຂົ້າປະດັບດິນ, ບຸນເຂົ້າສາກ ແລະບຸນທາດຫລວງ. ນອກຈາກບຸນທາດຫລວງ, ການເຮັດບຸນຕ່າງໆຂອງປະຊາຊົນລາວຈະຍິ່ງໃຫຍ່ ຫລືຄຶກຄື້ນ ແມ່ນອີງຕາມສະພາບ ແລະຈຸດພິເສດຂອງບ້ານໃນທ້ອງຖິ່ນນັ້ນໆ.

4.2.2. ຄອງ 14

ຄຳວ່າ " ຄອງ " ມີຄວາມໝາຍວ່າ ແບບ, ແບບຢ່າງ, ທາງ, ຄອງບູຮານ, ຄອງໂລກ, ຄອງທຳ. ໂດຍຄົນລາວທົ່ວໄປສະໄໝບູຮານປະພຶດປະຕິບັດຕໍ່ຄອບຄົວ, ຊາວບ້ານ ແລະສາສະໜາ ເຊິ່ງມັນຄຽງຄູ່ກັບຮີດສິບສອງ. ເຮົາຈິ່ງມັກເອີ້ນວ່າ ຮີດ 12 ຄອງ 14. ປະເພນີລາວ ຄອງ 14 ມີດັ່ງນີ້:

1. ເມື່ອພືດໂພດເຂົ້າກ້າ ໝາກໄມ້ເປັນຮວງ ເປັນໝາກ ຕົນຢ່າຟ້າວກິນກ່ອນ, ໃຫ້ເອົາໄປທານແກ່ຜູ້ມີສິນ ແລ້ວຕົນຈິ່ງກິນພາຍລຸນ.

2. ຢ່າໂລບລ່າຍຕາຊັ່ງ, ຢ່າຈ່າຍເງິນແດງ ແປງເງິນຄວ້າງ ແລະກ່າວຄຳຫຍາບຊ້າຕໍ່ກັນ.

3. ໃຫ້ພາກັນເຮັດຮົ້ວເຮັດຕ້າຍອ້ອມວັດ, ອ້ອມເຮືອນ ແລະອ້ອມບ້ານ ແລ້ວປຸກທໍ່ເທວະດາອ້ອມໄວ້ສີ່ແຈອ້ອມເຮືອນ.

4. ກ່ອນຈະຂຶ້ນເຮືອນໃຫ້ເອົານ້ຳລ້າງເທົ້າທັງສອງເບື້ອງສາກ່ອນ.

5. ຮອດວັນສິນເຈັດ, ສິນແປດ, ສິບສິບສີ່, ສິນສິບຫ້າຄ່ຳ ໃຫ້ສົມມາກ້ອນເສົ້າ, ແມ່ຄີໄຟ ແລະຂັ້ນໄດ, ປະຕູເຮືອນທີ່ຕົນອາໄສຢູ່.

6. ເມື່ອຈະເຂົ້າໄປບ່ອນນອນໃຫ້ເອົານ້ຳລ້າງເທົ້າສາມີແຫ່ງຕົນສາກ່ອນ.

7. ຮອດມື້ວັນສິນໃຫ້ເອົາດອກໄມ້ທູບທຽນສົມມາສາມີ, ພໍ່ແມ່ ແລະເຖົ້າແກ່ລຸງຕາຂອງຕົນ. ເຖິງວັນອຸໂປສົດ ໃຫ້ແຕ່ງຂັນດອກໄມ້ໄປເຄນພະສັງຂະເຈົ້າ.

8. ເຖິງວັນສິນດັບ, ສິນເພັງ ໃຫ້ນິມົນພະສັງຂະເຈົ້າມາສູດມຸງຄຸນເຮືອນ ແລະທຳບຸນໃສ່ບາດ ຖວາຍທານ ( ເວົ້າງ່າຍແມ່ນບຸນໃນວັນສິນ )

9. ເມື່ອພິກຂຸສົງມາບິນພະບາດ, ຢ່າໃຫ້ເພິ່ນຄອຍຖ້າ, ໃສ່ບາດບໍ່ໃຫ້ມີຊູນບາດ ແລະແຕະຕ້ອງເນື້ອກາຍເພິ່ນ, ຍາມໃສ່ບາດບໍ່ໄດ້ຖືເກີບ, ໝວກ, ຄັນຮົ່ມ, ບໍ່ເອົາແພປົກຫົວ, ບໍ່ອູ້ມລູກຜູກດາ ແລະຖືຜາລາອາວຸດໃດໆ.

10. ເມື່ອພິກຂຸສົງອອກຈາກເຂົ້າກຳແລ້ວ ໃຫ້ເອົາຂັນດອກໄມ້ທູບທຽນ ແລະເຄື່ອງອັດຖະບໍລິຂານ ( ເຄື່ອງສະເພາະສົງ ) ໄປຖວາຍ.

11. ເມື່ອເຫັນພິກຂຸສັງຂະເຈົ້າກາຍມາໃຫ້ນັ່ງລົງ ແລະຍໍມືໄຫວ້ ແລ້ວຈິ່ງເຈລະຈາ-ກ່າວເວົ້ານຳເພິ່ນຕາມສົມຄວນ.

12. ຢ່າຢ່າງຢຽບເງົາເຈົ້າພິກຂຸ, ສາມະເນນຕົນມີສິນບໍລິສຸດໃນທຳ.

13. ຢ່າເອົາອາຫານເງື່ອນທີ່ຕົນກິນແລ້ວໄປທານແກ່ພະສົງເປັນອັນຂາດ. ພ້ອມກັນນັ້ນ ກໍບໍ່ຄວນເອົາໄວ້ໃຫ້ສາມີແຫ່ງຕົນກິນ ( ສະໄໝໃໝ່ນີ້ ຜູ້ເປັນສາມີກໍຄວນປະຕິບັດຕໍ່ພັນລະຍາ ດັ່ງນີ້, ຈະເປັນການດີ )

14. ຊາຍ-ຍິງຢ່າເສບສົມການມະຄຸນກັນໃນວັນສິນ, ມື້ເຂົ້າພັນສາ-ອອກພັນສາ ແລະວັນຂຶ້ນ

ປີໃໝ່.

ຮອດສະໄໝປັດຈຸບັນນີ້ ຄອງ 14 ມີການປ່ຽນແປງຫລາຍທີ່ສຸດແລ້ວ. ມີບາງຄອງບໍ່ໄດ້ປະຕິບັດແລ້ວ. ສະໄໝບູຮານ ນອກຈາກປະຊາຊົນລາວເຮົາປະພຶດປະຕິບັດຕາມຮີດສິບສອງຄອງສິບສີ່ແລ້ວຍັງໄດ້ ປະຕິບັດຕາມຄຳສັ່ງສອນຂອງຜູ້ເຖົ້າຜູ້ແກ່ທີ່ວ່າ " ເຮືອນສາມ ນ້ຳສີ່ " ຄື:

❖ ເຮືອນສາມ

1. ເຮືອນນອນ: ຕ້ອງມັ່ງມັດຈັດການໃຫ້ເປັນລະບຽບຮຽບຮ້ອຍ, ຈົບງາມ, ເປັນໜ້າຢູ່ໜ້ານອນ.
2. ເຮືອນຄົວ: ຕ້ອງດູໝັ່ນປັດກວາດໃຫ້ສະອາດ, ສັບຊ້ອນເຄື່ອງໃນເຮືອນໃຫ້ດີ.
3. ເຮືອນພົມ: ພົມຕ້ອງໝັ່ນຊະ, ໝັ່ນຫວີໃຫ້ຮຽບຮ້ອຍງາມຕາ.

❖ ນ້ຳສີ່

1. ນ້ຳໃຈ: ຈິດໃຈຕ້ອງບໍລິສຸດສັດຊື່, ກວ້າງຂວາງ, ຮູ້ເອື້ອເຟື້ອເພື່ອແຜ່.
2. ນ້ຳດື່ມ: ນ້ຳກິນນ້ຳດື່ມໃຫ້ພຽງພໍ ເມື່ອແຂກຂຶ້ນເຮືອນມາໃຫ້ມີນ້ຳສູ່ແຂກ.
3. ນ້ຳໃຊ້: ຕ້ອງດູໝັ່ນຕັກນ້ຳມາໄວ້ໃຫ້ເຕັມອຸເຕັມແອ່ງຢູ່ສະເໝີ ບໍ່ໃຫ້ຂາດ.
4. ນ້ຳບອກປູນ: ນ້ຳຢູ່ໃນກະບອກປູນບໍ່ໃຫ້ຂາດແຫ້ງ ເມື່ອຕ້ອງການຄ້ຽວໝາກ ກໍໃຫ້ໄດ້ຄ້ຽວ.

## 5. ການນຸ່ງຖື່ມ ແລະແຕ່ງກາຍ.

### 5.1. ການນຸ່ງຖື່ມ ແລະການແຕ່ງກາຍຕາມປະເພນີບູຮານ

#### 5.1.1. ການນຸ່ງຖື່ມໃນເວລາຢູ່ບ້ານ-ຢູ່ເຮືອນ.

❖ ຜູ້ຊາຍ: ນຸ່ງຜ້າສະໂຫລ່ງໄໝ ຫລືຝ້າຍ, ໂສ້ງຂາສັ້ນ ຫລືຂາຍາວ ສ່ວນເສື້ອແມ່ນເສື້ອຄໍມົນ, ຄໍຕັ້ງ, ຄໍເຊີດທີ່ເຮັດດ້ວຍຝ້າຍ ຫລືໄໝພື້ນເມືອງ ເຊິ່ງເປັນສີນິຍົມຂອງຄົນລາວໂດຍແທ້.

❖ ແມ່ຍິງ: ນຸ່ງສິ້ນມີຫົວມີຕີນ, ສິ້ນຝ້າຍ ຫລືໄໝ. ສ່ວນເສື້ອມີທັງແຂນສັ້ນ ຫລືແຂນຍາວ, ເສື້ອໝາກກະແລ່ງ ຕາມວັດທະນະທຳລາວທີ່ດີງາມ. ມາຮອດຊູ່ມື້ນີ້ ການນຸ່ງຖື່ມດ້ວຍແຜ່ນແພພື້ນເມືອງ ທີ່ເປັນຜະລິດຕະພັນພູມປັນຍາຂອງຄົນລາວໄດ້ຮັກສາ ແລະສົ່ງເສີມເປັນຢ່າງດີໃນຫລາຍຮູບແບບ.

#### 5.1.2. ການນຸ່ງຖື່ມໃນເວລາໄປອອກແຮງງານ-ເພີ່ມພູນຜະລິດຜົນ.

❖ ຜູ້ຊາຍ: ນຸ່ງໂສ້ງ ແລະເສື້ອແຂນ-ຂາຍາວ ( ແຕ່ບໍ່ແມ່ນສີຂາວ ), ຖືໝວກໃບ, ແພຄຽນຫົວຫລືມັດແອວໃຫ້ຮຽບຮ້ອຍ ທັງສາມາດອອກແຮງງານ-ເຮັດວຽກໄດ້ສະດວກສະບາຍ.

❖ ແມ່ຍິງ: ນຸ່ງສິ້ນ ແລະເສື້ອແຂນຍາວຍ້ອມສີ, ຖືກຸບ ຫລືແພຄຽນຫົວ, ຜ້າພັນແຄ່ງປ້ອງກັນຮົ້ນ, ຍຸງ ຫລືຖືກບາດເຈັບ ແລະເພື່ອຮັກສາເນື້ອກາຍ ບໍ່ໃຫ້ກ່ຳດຳເສົ້າໝອງ.

### 5.1.3. ການນຸ່ງຫົ່ມໃນເວລາໄປບຸນທາປະເພນີຕ່າງໆ.

❖ ຜູ້ຊາຍ: ນຸ່ງໂສ້ງຂາຍາວ, ນຸ່ງຜ້າສະໂຫລ່ງ, ເສື້ອແຂນຍາວ ຫລືແຂນສັ້ນ ບໍ່ຈຳກັດສີ, ແຕ່ສຸພາບຮຽບຮ້ອຍ, ບ່ຽງຜ້າ ຫລືມັດແອວ. ຖ້າແມ່ນໄປຊາປະນະກິດສົບ ຜູ້ເປັນຍາດພີ່ນ້ອງຈະນຸ່ງເຄື່ອງຂາວ, ບໍ່ນຸ່ງເຄື່ອງສີເຈີດຈາດ. ສະໄໝນີ້ເພີ່ນນິຍົມນຸ່ງເຄື່ອງດຳອີກ. ທັງນີ້ກໍຍ້ອນວ່າ ມີຫລາກຫລາຍສາສະໜາ ແລະວັດທະນະທຳເຂົ້າມາ.

❖ ແມ່ຍິງ: ນຸ່ງສິ້ນ, ເສື້ອແຂນສັ້ນ ຫລືຍາວສີໃດກໍໄດ້, ເກົ້າຜົມ, ບ່ຽງແພ, ບໍ່ນຸ່ງເຄື່ອງບາງເກີນໄປ, ປະດັບກາຍໃຫ້ພໍດີພໍງາມເຊັ່ນ: ຕ້າງຫູ, ສາຍຄໍ, ສາຍແຂນ ແລະເຄື່ອງປະດັບກາຍອື່ນໆຕາມສົມຄວນ.

### 5.1.4. ລັກສະນະການນຸ່ງຖື-ແຕ່ງກາຍຂອງແມ່ຍິງຕາມປະເພນີທີ່ດີງາມ.

❖ ນຸ່ງສິ້ນມີຫົວມີຕີນ, ບໍ່ນຸ່ງເຂີນ ແລະບໍ່ລ່າມໂພດ. ຫົວສິ້ນຖົວມສາຍບື, ຕີນສິ້ນພຽງບີແຄ່ງ, ( ແຕ່ດຽວນີ້ບໍ່ນິຍົມໃສ່ຫົວ ).

❖ ນຸ່ງເສື້ອປົກປິດກົກແຂນ ແລະສ່ວນເອິກ, ບໍ່ນຸ່ງບາງຈົນແປນກາຍ ຫລືເຫັນເນື້ອໜັງ, ເຄື່ອງນຸ່ງບໍ່ລວດລາຍ, ແຫກໜ້າແຫກຫລັງ, ເກົ້າຜົມ ຫລືມັດຜົມໃຫ້ຮຽບຮ້ອຍຈົບງາມ ໂດຍສະເພາະແມ່ນການນຸ່ງຖືຕາມກາລະ ແລະເທສະທາງລັດຖະການ.

## 5.2. ການນຸ່ງຫົ່ມ ແລະແຕ່ງກາຍຕາມຍຸກສະໄໝໃໝ່.

ການນຸ່ງຫົ່ມ-ແຕ່ງກາຍໃນສະໄໝປັດຈຸບັນ ມີການປ່ຽນແປງໄປ. ໂດຍສະເພາະແມ່ນການຮຽນແບບ ( Style ) ຂອງການນຸ່ງຖື ແລະຄຸນນະພາບຂອງເຄື່ອງນຸ່ງຫົ່ມ ມັນມີຄວາມທັນສະໄໝ ແລະສາກົນໄປກວ່າເດີມ. ຢູ່ໃນເອກະສານນີ້ ຈະຂໍເນັ້ນສະເພາະການນຸ່ງຖື-ແຕ່ງກາຍໃນຊຸດປະຈຳການຂອງພົນລະເຮືອນ, ລັດຖະກອນຄື ການນຸ່ງຖືໃນເວລາເຮັດວຽກຢູ່ຕາມຫ້ອງການ, ໂຮງຮຽນ, ສຳນັກງານ, ອົງການ, ຫ້ອງປະຊຸມເປັນຕົ້ນ.

### 5.2.1. ຜູ້ຊາຍ:

ໂດຍທົ່ວໄປມີການນຸ່ງຖືຫລາຍແບບເຊັ່ນ ນຸ່ງຊຸດຊາຟາລີ, ເສື້ອແຂນສັ້ນ, ແຂນຍາວ, ຄໍຕັ້ງ ຫລືຄໍເຊີດ, ໂສ້ງຂາຍາວ ( ບໍ່ນິຍົມນຸ່ງໂສ້ງແດງ ຫລືໂສ້ງເຫລືອງ ) ໃສ່ກາລະວັດ, ນຸ່ງຊຸດສຸພາບທຳມະດາ. ເອົາເສື້ອເຂົ້າໃນ, ໃສ່ສາຍແອວດຳ, ເກີບຂັດມັນ ຫລືຊະນິດມີສາຍຮັດສົ້ນ, ຕັດຜົມຈອນ, ຜົມເປີດ, ຫວີຜົມເປີ້ຍ ຫລືຫວີໄປທາງຕັ້ງ. ພ້ອມນັ້ນ ການໃຊ້ເຄື່ອງດັບກິ່ນກາຍ, ສະເປ, ນ້ຳຫອມໃຫ້ພໍເໝາະພໍດີ.

5.2.2. ແມ່ຍິງ: ການນຸ່ງຖືມີຫລາຍແບບກວ່າຜູ້ຊາຍ. ແຕ່ໂດຍທົ່ວໄປແລ້ວ ນຸ່ງສິ້ນຝ້າຍ, ສິ້ນໄໝ, ເນື້ອລຽບໆ; ເສື້ອແຂນສັ້ນ, ແຂນຍາວ ແອວປ່ອຍ ຫລືເສື້ອເຂົ້າໃນ, ໃສ່ສາຍແອວ, ເກີບສຸບ ຫລືເກີບຮັດສົ້ນ; ຫວີຜົມຮຽບຮ້ອຍດ້ວຍການມັດ, ປ່ອຍຜົມ, ກິບຜົມໃຫ້ງາມຕາ, ຖ້າຕັດຜົມສັ້ນ ຫລືດັດຜົມກໍໄວ້ຊົງຜົມຕາມສົມຄວນ. ນຸ່ງເຄື່ອງໃຫ້ຖະໜອມເນື້ອກາຍ, ບໍ່ນຸ່ງໂສ້ງ ແລະເສື້ອສາຍດຽວ ຫລືແບບບໍ່ຈົບງາມສຸພາບ ເຂົ້າໄປສະຖານທີ່ທຳງານຂອງລັດຖະການ; ພ້ອມນັ້ນ ການໃຊ້ເຄື່ອງສຳອາງໃຫ້ພໍດີພໍງາມກັບກາລະເທສະນັ້ນໆ.

ນອກຈາກທີ່ກ່າວມາຂ້າງເທິງນີ້, ຢູ່ບາງອົງການ, ສຳນັກງານ, ທະຫານ, ຕຳຫລວດ... ຈະມີຊຸດປະຈຳການ. ການນຸ່ງຖືທັງຍິງ ແລະຊາຍ ແມ່ນນຸ່ງຖືຕາມລະບຽບຫລັກການຂອງອົງການທີ່ຕົນສັງກັດເຊັ່ນນັກຮຽນ, ນັກສຶກສາ ນຸ່ງຊຸດນັກສຶກສາ, ມີກາໝາຍປະຈຳສະຖາບັນ ຫລືຄະນະສັງກັດ ແລະເຄື່ອງນຸ່ງອື່ນໆເພື່ອຄວາມເປັນລະບຽບຮຽບຮ້ອຍຂອງສະຖາບັນ.

ການນຸ່ງຖື ແລະການແຕ່ງກາຍທີ່ສຸພາບຮຽບຮ້ອຍ ແລະຖືກຕ້ອງຕາມຂະນົບທຳນຽມປະເພນີທີ່ດີງາມ ພ້ອມທັງປະຕິບັດຕາມລະບຽບຫລັກການຂອງສະຖາບັນທີ່ຕົນສັງກັດນັ້ນ, ບໍ່ພຽງແຕ່ເປັນລະບຽບ ແລະເບິ່ງງາມຕາພຽງເທົ່ານັ້ນ; ແຕ່ມັນຍັງບົ່ງບອກເຖິງສະພາວະຂອງບຸກຄົນ ແລະຍັງສະແດງເຖິງຄົນຜູ້ມີລະດັບວັດທະນະທຳຕາມຍຸກສະໄໝອີກດ້ວຍ. ດັ່ງນັ້ນ, ພວກເຮົາທຸກຄົນຄວນໄດ້ໃສ່ໃຈປະຕິບັດໃຫ້ເປັນຮູບປະທຳຢ່າງຖືກຕ້ອງ ເພື່ອຄວາມຮຽບຮ້ອຍຂອງສະຖາບັນແມ່ນເປັນການດີ.

# ບົດທີ 4

# ຄຸນສົມບັດ ແລະນິໄສຂອງຄົນດີ

## 1. ຄຸນສົມບັດ

### 1.1. ຄວາມໝາຍ

ຄຳວ່າ " ຄຸນສົມບັດ " ແມ່ນຄຳທີ່ໄດ້ມາຈາກພາສາບາລີ ທີ່ປະສົມສອງຄຳເຂົ້າກັນຄື ຄຸນະ+ສຳປັດຕິ. ຄຳວ່າ ຄຸນະ ແປວ່າ ດີ, ຄວາມເປັນໄປທີ່ດີ. ສ່ວນຄຳວ່າ ສຳປັດຕິ ( ສົມບັດ ) ແປວ່າ ເຂົ້າຂອງເງິນຄຳ, ສິ່ງທີ່ມີຢູ່. ອີງຕາມສອງຄຳນີ້ ຈຶ່ງແປວ່າ ຄວາມດີຍິ່ງ, ບໍລິບູນດ້ວຍຄວາມດີ ເຫລົ່ານີ້ເປັນຕົ້ນ. ຍ້ອນແນວນັ້ນ ຈຶ່ງເວົ້າໄດ້ວ່າ ຄົນດີ ກໍແມ່ນຄົນທີ່ມີຄຸນສົມບັດດີ, ມີຄວາມສຳນຶກດີ, ມີຄວາມປະພຶດແລະປະຕິບັດດີ, ເຮັດແຕ່ສິ່ງທີ່ເປັນປະໂຫຍດແກ່ຕົນເອງ, ຕໍ່ສ່ວນລວມຕໍ່ສັງຄົມ ແລະປະເທດຊາດ.

ດັ່ງນັ້ນ, ຄວາມໝາຍທົ່ວໄປໃນຄຳວ່າ " ຄຸນສົມບັດ " ມັນຈຶ່ງແມ່ນ ແບບແຜນຂອງການດຳລົງຊີວິດ, ແມ່ນບັນດາທັດສະນະຄະຕິ ແລະອຸດົມການທີ່ເປັນມາດຕະຖານຂອງມະນຸດ. ແມ່ນແນວຄິດຈິດສຳນຶກທີ່ດີ, ມີລັກສະນະໃນຕົວ ແລະນອກຕົວຂອງມະນຸດ ທີ່ສະແດງອອກຜ່ານທາງກາຍ ແລະການວາຈາ ອັນເປັນທີ່ຍອມຮັບຈາກຄົນສ່ວນຫລາຍ ໃນສັງຄົມໃດໜຶ່ງຢ່າງແນ່ນອນ.

### 1.2. ລັກສະນະຂອງຄຸນສົມບັດ

ຄຸນສົມບັດ ແມ່ນລັກສະນະສະເພາະຢ່າງໜຶ່ງຂອງມະນຸດໂດຍທົ່ວໄປ. ມັນເກີດຢູ່ໃນສັງຄົມມະນຸດ. ສ່ວນສັດເດຍລະສານ ແລະສິ່ງທີ່ມີຊີວິດທັງຫລາຍທີ່ບໍ່ມີສະຕິປັນຍາ, ບໍ່ມີຈິດສຳນຶກ ແມ່ນບໍ່ມີຄຸນສົມບັດ. ຄຸນສົມບັດເກີດຢູ່ໃນຂະບວນການອອກແຮງງານ, ການສຶກສາ, ການດຳລົງຊີວິດ, ຄວາມເຊື່ອຖື, ຂະນົບທຳນຽມຮີດຄອງປະເພນີ ແລະສິ່ງອື່ນໆ ທີ່ພົວພັນກັບສັງຄົມມະນຸດ.

ຄຸນສົມບັດມີລັກສະນະນາມທຳ ແລະສືບທອດ. ເປັນຄວາມສຳນຶກທີ່ບໍ່ມີຕົວຕົນ, ບໍ່ສາມາດສຳພັດໄດ້, ແຕ່ສາມາດເຫັນໄດ້ໂດຍຜ່ານພຶດຕິກຳ. ອີກຢ່າງໜຶ່ງ ຄຸນສົມບັດຈະເກີດຂຶ້ນກໍຕໍ່ເມື່ອມີການສຶກສາອົບຮົມຈາກພໍ່ແມ່~~, ສັງຄົມ ແລະ~~ໂຮງຮຽນ, ສາສະໜາ, ກົດໝາຍ...ໂດຍຜ່ານການທົດສອບຈາກຂະບວນການແຮງງານຕ່າງໆໃນຕົວຈິງ. ດັ່ງນັ້ນ, ດັ່ງຄຳເວົ້າທີ່ວ່າ " ເລືອກຊ້າງໃຫ້ເບິ່ງຫາງ ເລືອກນາງໃຫ້ເບິ່ງແມ່ " ຫລື " ເຊື້ອໝາກຕ້ອງບໍ່ຫລົ່ນໄກກົກ ເຊື້ອຜົມດົກບໍ່ທ່ອນເປັນຫົວລ້ານ " ເປັນຕົ້ນ. ຄຸນສົມບັດມີລັກສະນະສັງຄົມ ແລະປະຫວັດສາດ. ຄົນຢູ່ໃນແຕ່ລະຍຸກສະໄໝແຕກຕ່າງກັນ ກໍຈະມີທັດສະນະ, ມີມາດຖານຄຸນສົມບັດທີ່ແຕກຕ່າງກັນ ທັງນີ້ກໍຍ້ອນພື້ນຖານເສດຖະກິດ, ສັງຄົມ, ວັດທະນະທຳ ແລະການສຶກສາມີບົດບາດໃນການກຳເນີດ ແລະຕັດສິນມາດຕະຖານຄຸນສົມບັດຂອງຄົນໃນສັງຄົມນັ້ນໆ.

ຄຸນສົມບັດມີລັກສະນະຊົນຊັ້ນ. ຄົນໃນສັງຄົມດຳລົງຊີວິດຕ່າງກັນ ອີງຕາມຖານະ ແລະຄວາມ

ເໝາະສົມຂອງສະພາບແວດລ້ອມ. ຍ້ອນແນວນັ້ນ, ຢູ່ໃນສັງຄົມໃດ ກໍຍ່ອມປັບຕົວເຂົ້າກັບສັງຄົມນັ້ນ ເພື່ອການຄົງຢູ່ໃນສັງຄົມ. ຄົນດຳລົງຊີວິດຢູ່ໃນສັງຄົມ ຫລືຊັ້ນຄົນທີ່ຕ່າງກັນ, ທັດສະນະ ແລະມາດຕະຖານຄຸນສົມບັດກໍຕ່າງກັນເຊັ່ນວ່າ ຄຸນສົມບັດຊົນຊັ້ນສັກດີນາ ຕ່າງກັບຄຸນສົມບັດຂອງຊົນຊັ້ນນາຍທຶນ. ຄຸນສົມບັດຄົນສະໄໝກ່ອນໆ ຕ່າງກັບຄຸນສົມບັດສະໄໝປັດຈຸບັນ. ຄຸນສົມບັດຂອງປະຊາຊົນຜູ້ອອກແຮງງານຕ່າງກັບຄຸນສົມບັດຂອງຊົນຊັ້ນປົກຄອງ, ຄຸນສົມບັດຂອງຜູ້ມີແນວຄິດປະຊາທິປະໄຕຕ່າງກັບແນວຄິດຄຸນສົມບັດຂອງອາດຍາສິດຂຸນເສິກ. ພ້ອມນັ້ນ, ຄຸນສົມບັດຂອງຄົນແຕ່ລະປະເທດກໍອາດຈະແຕກຕ່າງກັນໄປຕາມສະພາບຂອງແຕ່ລະປະເທດ. ມາຮອດປັດຈຸບັນນີ້ ຄົນເຮົາໄດ້ມີການພັດທະນາເຝິກຝົນຕົນເອງໃຫ້ກາຍເປັນຄົນທີ່ມີຄຸນສົມບັດ ສົມທຳປະຕິວັດຄວບຄູ່ກັບຄວາມຮູ້ ແລະຄວາມສາມາດ ( ຄວາມຮູ້ຄູ່ຄຸນນະທຳ ) ຖືວ່າເປັນມາດຕະຖານທີ່ດີຂອງຄົນເຮົາ.

### 1.3. ຄຸນສົມບັດຂອງຄົນຜູ້ດີໃນຍຸກສະໄໝໃໝ່.

ມາດຕະຖານການວັດແທກຄຸນຄ່າທາງດ້ານຄຸນສົມບັດຂອງຄົນ ແຕ່ລະຍຸກສະໄໝມັນແຕກຕ່າງກັນ. ເຖິງຈະຢູ່ໃນຍຸກໃດກໍຕາມ, ຄົນທີ່ຈະຖືກຍອມຮັບຈາກສັງຄົມວ່າ ເປັນຜູ້ດີມີຄຸນສົມບັດນັ້ນ ບໍ່ແມ່ນຕົນເປັນຜູ້ສະເໜີ ຫລືຍົກຍ້ອງ, ຕ້ອງແມ່ນຄົນອື່ນ ຫລືສັງຄົມເປັນຜູ້ຍອມຮັບ. ຍ້ອນແນວນັ້ນ ເມື່ອເວົ້າເຖິງທັດສະນະຄຸນສົມບັດຂອງຄົນໃນຍຸກໃໝ່ນີ້ ກໍມີຫລາຍຢ່າງ ເປັນຕົ້ນວ່າ:

- ເປັນຄົນທີ່ມີນ້ຳໃຈຮັກຊາດ, ຮັກບ້ານເກີດເມືອງນອນ, ສັດຊື່ທ່ຽງທຳ, ບໍ່ເຫັນສິດຜົນປະໂຫຍດສ່ວນຕົວຫລາຍກວ່າສ່ວນລວມ.
- ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ, ຕໍ່ສ່ວນລວມ ແລະສັງຄົມເປັນຢ່າງດີ, ບໍ່ປ່ອຍປະລະເລີຍຕໍ່ໜ້າທີ່, ບໍ່ຟຸມເຟືອຍ, ບໍ່ຫລົງການພະນັນຈົນສິ້ນເນື້ອໝົດຕົວ.
- ມີຄວາມສາມັກຄີ, ຮູ້ບໍລິຈາກຊັບສິນສ່ວນຕົວ ເພື່ອສາທາລະນະໂຫຍດຂອງສັງຄົມ, ຫລີກເວັ້ນຈາກອະບາຍຍະມຸກ, ກຽດຊັງສັດຕູຂອງຊາດ.
- ມີຄວາມກ້າຫານ, ມີຄວາມເມດຕາເອື້ອເຟື້ອເຜື່ອແຜ່, ແລະຍຶດໝັ້ນໃນອຸດົມຄະຕິທີ່ດີສະເໝີໄປ.
- ປະພຶດຕົວເປັນລະບຽບຮຽບຮ້ອຍ, ສະແດງເຖິງຄວາມເປັນຜູ້ມີລະດັບວັດທະນະທຳທີ່ດີງາມ. ມີກິລິຍາສຸພາບ ພ້ອມທັງສ້າງແຕ່ສິ່ງທີ່ມີຄຸນປະໂຫຍດແກ່ສັງຄົມ.
- ເຄົາລົບຕໍ່ລະບຽບກົດໝາຍ, ເຄົາລົບຕໍ່ສິ່ງຫວງຫ້າມ, ເຄົາລົບຕໍ່ສິດທິ ແລະໜ້າທີ່ຂອງພົນລະເມືອງ, ຕໍ່ຂະນົບທຳນຽມ, ຮີດຄອງປະເພນີຂອງສັງຄົມ ແລະຊາດ.
- ເອົາໃຈໃສ່ຕໍ່ການສຶກສາຮ່ຳຮຽນ, ນັບຖືລະບຽບວິໄນ, ເຄົາລົບນັບຖືພະສົງອົງເຈົ້າ, ຜູ້ນຳຂັ້ນຕ່າງໆ, ຜູ້ຊົງຄຸນວຸດທິ ພ້ອມທັງຮັກສາກຽດ ແລະສັກສີຂອງຕົນຢູ່ສະເໝີ.
- ຮູ້ຄິດ ແລະພິຈາລະນາ, ຮູ້ສົມມາຄາລະວະຕໍ່ຜູ້ທີ່ມີພະຄຸນດ້ວຍນ້ຳໃຈໄມຕີ, ຮູ້ປະຕິບັດຕົນໃຫ້

ເໝາະສົມ, ປະຕິບັດໜ້າທີ່ການງານດ້ວຍຈຸດມຸ່ງໝາຍທີ່ແນ່ນອນ, ຕັດສິນໃຈບັນຫາດ້ວຍເຫດ ແລະ ຜົນ.

- ຮູ້ໃຊ້ກິລິຍາມາລະຍາດ ຫລືອິລິຍະບົດຢ່າງເໝາະສົມຢູ່ໃນສະຖານທີ່ສາທາລະນະ, ຊຸມນຸມຊົນ ແລະແວດວົງສັງຄົມ; ພ້ອມທັງຮູ້ຄົບຄ້າສະມາຄົມກັບຄົນດີສະເໝີ.

- ຮູ້ລະອາຍ ແລະຢ້ານກົວຕໍ່ການກະທຳບາບ, ຄວນໃຊ້ຄວາມຮູ້, ຄວາມສາມາດໃນທາງທີ່ຖືກຕ້ອງ ແລະມີປະໂຫຍດ, ສັງຮວມກາຍວາຈາ ແລະຈິດໃຈບໍ່ໃຫ້ຕົກຢູ່ໃນຄວາມຜິດພາດ, ຄວນສ້າງສັນແນວຄິດແບບປະຊາທິປະໄຕ, ຖືເອົາສຽງສ່ວນຫລາຍຕັດສິນສຽງສ່ວນໜ້ອຍ ( ບໍ່ເອົາໃຈຕົນພຽງຝ່າຍດຽວ )

- ບໍ່ຄິດ ແລະບໍ່ເຮັດໃນສິ່ງທີ່ສ້າງຄວາມເດືອດຮ້ອນແກ່ຕົນເອງ, ຄົນອື່ນ ແລະສັງຄົມ. ຄວນໃຊ້ຄວາມອົດທົນເຂົ້າໃນການແກ້ໄຂບັນຫາ ແລະວຽກງານຕ່າງໆ ພ້ອມທັງເຝິກຝົນຕົນເອງໃຫ້໋ໝັ້ນໃນຄຸນນະທຳ, ດຳລົງຊີວິດແບບປອດໃສຂາວສະອາດ, ລະເວັ້ນຄວາມຖືເບົາເອົາງ່າຍ ແລະຄວາມບໍ່ຍຸຕິທຳໃນສັງຄົມ.

- ຮັກແລະສົ່ງເສີມຄວາມສະອາດ ປັດສະຈາກຄວາມສົກກະປົກ-ໝົ່ນໝອງ, ຍຶດຖືປັດໄຈພົມວິຫານ 4 ປະການເປັນຫລັກສຳຄັນໃນການຢູ່ຮ່ວມກັນ.

## 2. ນິດໄສຂອງຄົນດີ

ຄຳວ່າ " ນິດໄສ " ແມ່ນຄຳທີ່ດັດແປງມາຈາກພາສາບາລີທີ່ວ່າ " ນິສະຍະ " ເຊິ່ງໝາຍເຖິງການສະແດງອອກທາງດ້ານແນວຄິດ ແລະການກະທຳ ຂອງຄົນຜູ້ໃດຜູ້ໜຶ່ງທີ່ເປັນທາດແທ້ຕິດໂຕ. ມັນແມ່ນສິ່ງທີ່ຕິດພັນກັບແນວຄິດຈິດສຳນຶກ ໂດຍຜ່ານການຮຽນຮູ້ຈາກສະພາບແວດລ້ອມ, ຂັ້ນຕອນຂະບວນການສຶກສາ ແລະໄວອາຍຸ.

ດ້ວຍເຫດນັ້ນ, ຈຶ່ງເວົ້າໄດ້ວ່າ ສະພາບແວດທີ່ຄົນເຮົາດຳລົງຊີວິດມີຄວາມສຳຄັນໃນການສ້າງນິດໄສຂອງຄົນເຮົາ. ດັ່ງນັ້ນ, ລັກສະນະນິດໄສຂອງຄົນເຮົາຈຶ່ງມີຄວາມແຕກຕ່າງກັນ. ເຖິງຢ່າງໃດກໍຕາມ ເມື່ອເວົ້າເຖິງນິດໄສແລ້ວ ມັນມີລັກສະນະສະເພາະຂອງບຸກຄົນ ແລະເປັນສິ່ງທີ່ປ່ຽນແປງໄດ້ຍາກ, ແຕ່ກໍບໍ່ໝາຍຄວາມວ່າ ປ່ຽນບໍ່ໄດ້; ມັນສາມາດປ່ຽນແປງໄດ້ກໍຕໍ່ເມື່ອມີການເຝິກຝົນ, ມີການສຶກສາອົບຮົມ ແລະຮຽນຮູ້ຈາກສັງຄົມເປັນຕົ້ນ.

ການສ້າງນິດໄສທີ່ດີແມ່ນສິ່ງສຳຄັນ ແລະຈຳເປັນແກ່ທຸກຄົນ. ທຸກຂະແໜງການຮຽກຮ້ອງຕ້ອງການບຸກຄົນທີ່ມີນິດໄສດີ. ສິ່ງທີ່ວັດແທກນິດໄສດີຂອງຄົນເຮົາ ບໍ່ແມ່ນຕົນເປັນຜູ້ວັດແທກເອງ ຕ້ອງແມ່ນຄົນອື່ນເປັນຜູ້ຍົກຍ້ອງ. ນິດໄສຂອງຄົນຜູ້ດີຄວນມີດັ່ງນີ້:

- ມີສາຍຕາເປັນທຳ, ຮູ້ມອງກວ້າງເຫັນໄກ, ບໍ່ມີຄວາມຄິດອັນຕະພານ, ທັງມີຈິດໃຈໜັກແໜ້ນ,

ບໍ່ຖືເບົາເອົາຄວາມງ່າຍ ແລະມີການພິຈາລະນາຖີ່ຖ້ວນ

- ມີຈິດສຳນຶກສະຫງວນຄວາມງາມ, ເປັນລະບຽບຮຽບຮ້ອຍ, ມີຄວາມເກງຂາມ ແລະລະອາຍໃຈຕໍ່ຄວາມຊົ່ວ ແລະການກະທຳຜິດຕໍ່ລະບຽບກົດໝາຍ.
- ເປັນຄົນທີ່ມີຈິດໃຈຮັກໄຄ່ ແລະເປັນທີ່ໄວ້ວາງໃຈຂອງຄົນອ້ອມຂ້າງສະເໝີໄປ ແລະຮູ້ເຕົ້າໂຮມຄວາມສາມັກຄີຢ່າງໜາແໜ້ນ, ບໍລິສຸດຕໍ່ໜ້າທີ່ວຽກງານ ແລະຕໍ່ປະເທດຊາດ.
- ເປັນແບບຢ່າງທາງດ້ານແນວຄິດ, ຂະຫຍັນໝັ່ນພຽນ ແລະມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານ.
- ສ້າງຕົນໃຫ້ເປັນທີ່ຮັກແພງຂອງປວງຊົນ, ຮູ້ເຄົາລົບສິດທິຂອງທຸກຄົນທີ່ຢູ່ຮ່ວມກັນໃນສັງຄົມ ແລະສ້າງຕົນໃຫ້ເປັນຜູ້ທີ່ມີຄວາມຮູ້ ຄວາມສາມາດໃນການແກ້ໄຂບັນຫາ.
- ເຄົາລົບກົດໝາຍບ້ານເມືອງ, ຮູ້ອະໄພໂທດຕໍ່ກັນ, ມີຄວາມກະຕັນຍູຕໍ່ຜູ້ທີ່ມີພະຄຸນ, ບໍ່ເອົາລັດເອົາປຽບຄົນອື່ນ ຫລືຄົນທີ່ດ້ອຍໂອກາດ, ຮູ້ຈັກຮັກສາກຽດຊື່ສຽງຂອງຕົນ ແລະຜູ້ອື່ນອີກດ້ວຍ.
- ບໍ່ຂົ່ມເພັ່ນຍໍໂຕ, ບໍ່ໃສ່ຮ້າຍປ້າຍສີຄົນອື່ນ, ອ່ອນນ້ອມຖ່ອມໂຕ, ວາງໂຕໃຫ້ເໝາະສົມກັບກາລະເທສະ, ສະຫງ່າຜ່າເຜີຍ ແລະມີຄວາມກ້າຫານ.
- ຮູ້ເສຍສະລະ ແລະຮູ້ຮັກສາສິດຜົນປະໂຫຍດສ່ວນຕົວ ແລະສ່ວນລວມ. ຮູ້ຊ່ວຍເຫລືອຄົນອື່ນໃນເວລາພົບຄວາມຫຍຸ້ງຍາກ.

ລວມຄວາມແລ້ວ, ຄຸນສົມບັດ ແລະນິດໄສ ເປັນພື້ນຖານຂອງການສ້າງແນວຄິດຈິດໃຈໃຫ້ຕົນເອງກາຍເປັນຜູ້ທີ່ມີຄຸນນະທຳ ເພື່ອເປັນພົນລະເມືອງດີຂອງສັງຄົມ ແລະປະເທດຊາດ. ຈຶ່ງສ້າງຕົນໃຫ້ເປັນຄົນທີ່ມີຄຸນສົມບັດ ແລະນິດໄສທີ່ດີ; ມີແຕ່ຄົນທີ່ມີຄຸນສົມບັດ ແລະນິດໄສທີ່ດີເທົ່ານັ້ນ ຈຶ່ງເຮັດໃຫ້ສັງຄົມມີຄວາມຍຸຕິທຳ ສະຫງົບສັນຕິ ແລະປາສະຈາກຄວາມວຸ່ນວາຍທັງປວງ. ສັງຄົມຈະມີແຕ່ຄວາມຮຸ່ງເຮືອງສີວິໄລຕະຫລອດໄປ.

24/VII
ຫ້າມຈຳໜ່າຍ

## 3. ວັດທະນະທຳກັບການພົວພັນສັງຄົມ

### 3.1. ມະນຸດກັບການພົວພັນສັງຄົມ

ຄົນ ຫລືມະນຸດ ແມ່ນອົງປະກອບທີ່ສຳຄັນຂອງສັງຄົມ. ເປັນຜູ້ສ້າງສັງຄົມ ແລະວັດທະນະທຳໃຫ້ມີຄວາມຈີບງາມ. ແຕ່ລະຍຸກ ແຕ່ລະສະໄໝ ຄົນມີການພົວພັນເຊິ່ງກັນແລະກັນ, ບໍ່ມີຜູ້ໃດສາມາດຢູ່ໂດດດ່ຽວໄດ້. ສະນັ້ນ, ຈຶ່ງກໍ່ໃຫ້ເກີດໝູ່ຄະນະ, ສະມາຄົມ, ສະຫະພັນ. ການຢູ່ຮ່ວມກັນນັ້ນ ຈຳເປັນຕ້ອງຄຳນຶງເຖິງ ວັດທະນະທຳເປັນສິ່ງເສີມສ້າງໃຫ້ຄົນເຮົາດຳລົງຊີວິດຖືກຕ້ອງ ເພື່ອກ້າວສູ່ຜົນສຳເລັດ.

ການພົວພັນໃນສັງຄົມກໍມີຫລາຍລະດັບແຕກຕ່າງກັນ. ສະນັ້ນ, ການພົວພັນເຮັດແນວໃດຈະເປັນໄປໃນທາງທີ່ດີ ຕ້ອງຮູ້ອີງໃສ່ສະພາບແວດລ້ອມ, ຊັ້ນຄົນ ຫລືແຕ່ລະສາຂາວິຊາຊີບເຊັ່ນ ນັກປາດອາຈານກໍມີການແລກປ່ຽນພົວພັນກັບປັນຍາຊົນ. ນັກຮຽນນັກສຶກສາພົວພັນຄູອາຈານ ແລະໝູ່ເພື່ອນ, ຫົວໜ້າກໍພົວພັນກັບລູກນ້ອງ. ໃນລະດັບສູງກວ່ານີ້ ກໍແມ່ນການພົວພັນລະຫວ່າງຊາດ. ການພົວພັນດັ່ງກ່າວ ກໍມີທັງໂດຍກົງ ແລະທາງອ້ອມ ເຊິ່ງໃຊ້ພາສາເປັນພາຫະນະສື່ສານໃນການປາກເວົ້າ ແລະເປັນລາຍລັກອັກສອນເຊັ່ນ ການພົວພັນແລກປ່ຽນທາງດ້ານຂໍ້ມູນຂ່າວສານຜ່ານໂທລະສັບ, ໂທລະສານ, ຈົດໝາຍ ແລະຜ່ານທາງຮູບການອື່ນໆ.

ການພົວພັນສັງຄົມ ຄວນຫລີກເວັ້ນຄວາມແຂງກະດ້າງ, ໜ້າຕາ-ສາຍຕາເຄັ່ງຂຶມ, ເວົ້າຈາໃຊ້ສຽງດັງເກີນຄວນ... ດັ່ງນັ້ນ ການພົວພັນສັງຄົມຄວນຄຳນຶງເຖິງຄວາມເໝາະສົມຂອງແຕ່ລະລະດັບຂອງການພົວພັນເຊັ່ນ ເວົ້າ, ຖາມ, ປະກອບຄຳຄິດເຫັນ ຫລືຕອບຄຳຖາມຕ້ອງມີຄວາມສຸພາບ, ການແຕ່ງກາຍຕ້ອງເປັນລະບຽບຈົບງາມ ເພື່ອກະຕຸກຊຸກຍູ້, ຈູງໃຈ, ເຮັດໃຫ້ການສ້າງສາຍພົວພັນໃນສັງຄົມມີປະສິດທິຜົນ ແລະປະສິດທິພາບ. ການປະພຶດຕົນ ສະແດງເຖິງລະດັບວັດທະນະທຳຂອງບຸກຄົນ ເຊິ່ງເປັນຜົນກໍ່ໃຫ້ເກີດຄວາມເປັນລະບຽບຮຽບຮ້ອຍຂອງຊາດກໍຄືສັງຄົມ.

### 3.2. ປັດໄຈການສ້າງສາຍພົວພັນສັງຄົມ

ປັດໄຈການສ້າງສາຍພົວພັນນັ້ນ, ບໍ່ອາດກຳນົດໄດ້ຢ່າງແນ່ນອນວ່າ ມີເງື່ອນໄຂປັດໄຈໃດແດ່, ສິ່ງສຳຄັນຄົນເຮົາຄວນວາງຕົວແນວໃດ ໃຫ້ເໝາະສົມກັບສະຖານະພາບຂອງບຸກຄົນທີ່ເຮົາຈະພົວພັນກັບ ໂດຍທົ່ວໄປແລ້ວຄວນວາງຕົວດັ່ງນີ້:

- ຄວນວາງຕົວບຸກຄະລິກະພາບທີ່ເປັນກາງ ໂດຍອີງຕາມສະຖານະພາບທາງສັງຄົມ.
- ຄວນມີຄວາມພູມໃຈ-ພໍໃຈຕໍ່ວຽກງານ ແລະວິຊາຊີບຂອງຕົນ.
- ຄວນໃຫ້ຄວາມເຄົາລົບຕໍ່ຄົນອື່ນ ເໝືອນກັບທີ່ຕົນຕ້ອງການໃຫ້ຄົນອື່ນເຄົາລົບຕົນ.
- ຄວນຖາມ, ຕອບ, ຟັງດ້ວຍຄວາມເປັນມິດ, ແນວຄິດສ້າງສັນ ແລະປະຕິບັດຫລາຍກວ່າເວົ້າ, ມີກິລິຍາທ່າທາງເປັນໜ້າເຊື່ອໝັ້ນ ແລະໄວ້ວາງໃຈໄດ້.
- ຄວນຍິ້ມແຍ້ມແຈ່ມໃສ ເບິ່ງໂລກໃນແງ່ດີ ແລະບໍ່ຄວນເບິ່ງຄົນອື່ນໃນແງ່ລົບສະເໝີ, ຄວນມີວິຈາລະນາຍານ ຮິ່ນຕອງໃນການເບິ່ງບັນຫາ.
- ຄວນເປັນແບບຢ່າງທີ່ດີໃຫ້ແກ່ມະຫາຊົນ ແລະບຸກຄົນອ້ອມຂ້າງ: ສ້າງ, ສຶກສາ ແລະສົ່ງເສີມຄວາມດີໃຫ້ແກ່ຄົນອື່ນ ແລະສັງຄົມ. ຈິງໃຈ ແລະຈິງຈັງໃນການຮັບ-ຕອບ ແລະຊ່ວຍເຫລືອຄົນອື່ນ.

### 3.3. ການສ້າງສາຍພົວພັນໃນວົງການສັງຄົມລະດັບຕ່າງໆ

#### 3.3.1. ການສ້າງສາຍພົວພັນກັບຜູ້ບັງຄັບບັນຊາ

ກ່ອນອື່ນຕ້ອງໄດ້ສຶກສາວ່າ ຜູ້ບັງຄັບບັນຊາມີຈຸດພິເສດແນວໃດ ແລະວຽກທີ່ຮັບຜິດຊອບນັ້ນແມ່ນວຽກຫຍັງ. ໂດຍທົ່ວໄປແລ້ວ ຜູ້ບັງຄັບບັນຊາ ຫລືຫົວໜ້າມັກຄົນທີ່ມີຄວາມຮູ້ຄວາມສາມາດ ແລະກ້າສະແດງອອກ, ຮູ້ປະຕິບັດຕົວ ອັນໃດຄວນ ຫລືບໍ່ຄວນ. ແຕ່ສິ່ງສຳຄັນຄວນຄຳນຶງ ແລະປະຕິບັດຕາມລະບຽບການຂອງວຽກງານນັ້ນໆ. ຕັ້ງໃຈເຮັດວຽກໃຫ້ດີ, ຮູ້ເຄົາລົບເຈົ້ານາຍຕາມກາລະເທສະ, ບໍ່ສະແດງສີໜ້າທ່າທາງ ຫລືອະຄະຕິທີ່ບໍ່ມີເຫດຜົນ, ບໍ່ຄວນລົບກວນໃນເວລາທີ່ບໍ່ຈຳເປັນ.

#### 3.3.2. ການສ້າງສາຍພົວພັນກັບເພື່ອນຮ່ວມງານ

ກ່ອນອື່ນຄວນສຶກສາເພື່ອນຮ່ວມງານນັ້ນ ມີຈຸດພິເສດແນວໃດ, ມີຄວາມຮູ້ໃນລະດັບໃດ ແລະໃນໄວອາຍຸໃດ, ແລ້ວຈຶ່ງວາງຕົວໃຫ້ມີຄວາມເໝາະສົມກັບແຕ່ລະລະດັບຄົນດັ່ງກ່າວ. ຖ້າວ່າເຮົາຕ້ອງການໃຫ້ກາຍເປັນບຸກຄົນທີ່ໜ້າເຄົາລົບນັບຖືຈາກເພື່ອນຮ່ວມງານ ເຮົາຕ້ອງພັດທະນາຕົນເອງຕໍ່ໜ້າທີ່ວຽກງານໃນທຸກດ້ານ, ຕ້ອງມີຄວາມຊື່ສັດບໍລິສຸດ, ມີຄວາມຮັກແພງ, ສາມັກຄີຊ່ວຍເຫລືອເຊິ່ງກັນແລະກັນ, ບໍ່ຄວນເຫັນແກ່ຕົວ, ຄວນຟັງຄວາມຄິດຄວາມເຫັນຂອງເພື່ອນຮ່ວມງານ ພ້ອມທັງປຶກສາຫາລື. ຮ່ວມເຮັດວຽກແບບປະຊາທິປະໄຕດ້ວຍຄວາມຮັບຜິດຊອບ, ຍົກຍ້ອງຜົນງານຂອງໝູ່ເພື່ອນຕາມຄວາມເໝາະສົມ. ພ້ອມນັ້ນ ຄວນສຶກສາ ຫລືຮູ້ຈັກຈຸດພິເສດ, ນິດໄສໃຈຄໍຂອງເພື່ອນຮ່ວມງານຍິ່ງເປັນການດີ.

#### 3.3.3. ການສ້າງສາຍພົວພັນກັບບຸກຄົນທົ່ວໄປ

ບຸກຄົນທົ່ວໄປ ໝາຍເຖິງບຸກຄົນທີ່ມີສ່ວນກ່ຽວຂ້ອງ ຫລືມີການພົວພັນໃນການດຳລົງຊີວິດຫລາຍດ້ານເຊັ່ນ ການສ້າງສາຍສຳພັນທາງດ້ານຍາດພີ່ນ້ອງ, ເພື່ອນມິດສະຫາຍ. ອີກຢ່າງໜຶ່ງ ການສ້າງສາຍພົວພັນກັບບຸກຄົນອື່ນ ເພື່ອກໍ່ໃຫ້ເກີດຜົນດີນັ້ນ, ຄວນຄຳນຶງເຖິງ ບັນຫາຫລາຍຢ່າງເປັນຕົ້ນ, ຄວນທຳຕົນໃຫ້ເປັນຜູ້ທີ່ມີຈິດໃຈກວ້າງຂວາງພໍເໝາະພໍດີ, ມີສະຕິ ແລະເຮັດໃຫ້ອາລົມໝັ້ນທ່ຽງ, ເບິ່ງຄົນອື່ນໃນແງ່ດີ, ຟັງຄົນອື່ນດ້ວຍວິຈາລະນາຍານ, ຮູ້ຕຳໜິຜູ້ອື່ນໃນທາງສ້າງສັນ, ຮູ້ໃຫ້ອະໄພແກ່ກັນໃນທາງຄວນ ແລະໃຫ້ກຳລັງໃຈແກ່ຄົນອື່ນອີກດ້ວຍ.

ຮວມຄວາມແລ້ວ, ການສ້າງສາຍພົວພັນສັງຄົມ ຍ່ອມມີຜົນຄຽງຄູ່ຄົນເຮົາຢູ່ສະເໝີ, ເຮົາຈະໄດ້ຮັບຄວາມຮັກແພງນັບຖື, ເຊື່ອໝັ້ນ, ຍົກຍ້ອງ, ໃຫ້ກຽດຈາກຄົນອື່ນ, ເປັນທີ່ພົບປະສັງສັນຈາກບຸກຄົນອ້ອມຂ້າງ, ເພື່ອນຮ່ວມງານ. ກົງກັນຂ້າມ ຖ້າເຮົາບໍ່ມີສາຍພົວພັນສັງຄົມ ຫລືການພົວພັນສັງຄົມບໍ່ດີ ກໍ່ຈະຂາດຄວາມເຊື່ອໝັ້ນຈາກການຈັດຕັ້ງ ຫລືສັງຄົມ. ວຽກງານທຸກຢ່າງກໍ່ຍາກທີ່ຈະປະສົບຜົນສຳເລັດ. ສະນັ້ນ ຈຳເປັນຕ້ອງມີການຮຽນຮູ້ການພົວພັນສັງຄົມໃຫ້ດີ ຍິ່ງຈະເປັນຜົນແກ່ຕົວເຮົາຫລາຍຂຶ້ນ.

ນີ້ວມືທັງສອງເບື້ອງຕິດແປະກັນແບບເບົາໆ., ປາຍມືຈຸ່ມເຂົ້າເປັນຮູບຄ້າຍຄືດອກບົວຈູມ ແລະ ວາງທ່າຂອງຮ່າງກາຍດັ່ງນີ້:

❖ ຖ້າເປັນການນົບໄຫວ້ພະພຸດທະຮູບ ຫລືພະສົງອົງເຈົ້າໃນວາລະໃດໜຶ່ງຄື ປາຍມືຍົກສູງພຽງໜ້າຜາກ, ໂຕຢູ່ໃນທ່າຕັ້ງຊື່, ກົ້ມຫົວເບົາໆ ແລະກົ່ງຕົວພໍດີງາມ. ຖ້າຢູ່ວັດ, ຢູ່ເຮືອນ ຜູ້ທຳການເຄົາລົບນັ່ງພັບແພບ, ນັ່ງຊູ້ເຂົ່າກົ້ມຫົວລົງໃສ່ພື້ນ 3 ຄັ້ງ, ຖ້າຢູ່ໃນສະຖານທີ່ທົ່ວໄປ ສະແດງຄວາມເຄົາລົບຕາມທຳມະດາ.

❖ ຖ້າເປັນການເຄົາລົບທ່ານຜູ້ນຳ, ຜູ້ມີໜ້າທີ່ຕຳແໜ່ງສູງກວ່າ, ຜູ້ຊົງຄຸນວຸດທິ, ຜູ້ມີຖານະໃນສັງຄົມ, ບຸກຄົນສຳຄັນ, ຄູອາຈານ ຍໍມືໄຫວ້ປາຍມືສູງພຽງດັງ, ທ່າຕັ້ງຊື, ກົ້ມຫົວ ແລະກົ່ງຕົວລົງເບົາໆພໍດີງາມທັງທັກທາຍ ດ້ວຍຄວາມສຸພາບ, ສີໜ້າ ແລະຮອຍຍິ້ມຕາມສົມຄວນ.

❖ ຖ້າເປັນໝູ່ເພື່ອນ ຫລືຜູ້ມີຖານະຕຳແໜ່ງເທົ່າທຽມກັນ, ເປັນເພື່ອນຮ່ວມງານໃນສະຖາບັນຫລືຕ່າງສະຖາບັນ. ໃນເວລາພົບກັນຢູ່ເທິງເວທີທີ່ເປັນທາງການ, ເວທີງານຕ່າງໆ ຫລືພົບກັນບາງຄັ້ງຍໍມືນົບໄຫວ້ພຽງເອິກ, ອະລິຍະບົດທາງຮ່າງກາຍຢູ່ໃນທ່າທຳມະດາ, ສົ່ງຮອຍຍິ້ມເບົາໆ, ມີສາຍຕາດ້ວຍຄວາມເປັນມິດ.

ການສະແດງຄວາມເຄົາລົບມີ 3 ແບບ

1. ການປະນົບ ຫລືປະນົມ ( ອັນຊະລີ )
2. ການໄຫວ້ ( ນະມັດສະການ )
3. ການຂາບ ( ອະພິວາດ )



ສິ່ງທີ່ຄວນຄິດສະເໝີວ່າ ຖ້າເປັນການທັກທາຍດ້ວຍການຍໍມືນົບໄຫວ້ ແມ່ນບຸກຄົນທີ່ມີຕໍາແໜ່ງຕໍ່າກວ່າ ເປັນຜູ້ຍໍມືໄຫວ້ກ່ອນ, ຖ້າເປັນການທັກທາຍແບບການຢື້ມືໄປຈັບຕາມວັດທະນະທໍາສາກົນ ຕ້ອງເປັນຜູ້ໃຫຍ່ເປັນຜູ້ຢື້ມືມາຈັບ ຫລືສະແດງຄວາມຍິນດີນໍາກ່ອນ; ຜູ້ນ້ອຍຈະບໍ່ໄດ້ໄປຂໍຈັບມືເພິ່ນກ່ອນ ມັນຈະເສຍມາລະຍາດ ຫລື ເພິ່ນອາດຈະລັງກຽດກໍ່ເປັນໄດ້.

### 2.3. ບຸກຄົນສໍາຄັນເຊິ່ງຄວນເຄົາລົບດ້ວຍການກົ້ມຫົວຂໍານັບ

– ກົ້ມຫົວຂໍານັບທ່ານຜູ້ນໍາຂອງຊາດ, ນັກຮົບວິລະຊົນ, ພະນັກງານລັດຖະກອນ ຜູ້ທີ່ເສຍສະລະຊີວິດເພື່ອປະເທດຊາດ ແລະດວງວິນຍານຂອງບັນພະບຸລຸດ.

– ກົ້ມຫົວຂໍານັບຕໍ່ຜູ້ບັງຄັບບັນຊາ ບັນດາທ່ານຂ້າລາຊະການຊັ້ນຜູ້ໃຫຍ່, ຄູອາຈານໃນສະຖານທີ່ ຫລື ໂອກາດໃນພິທີການໃດໜຶ່ງຕາມຄວາມເໝາະສົມ.

## 3. ມາລະຍາດໃນໂອກາດຕ່າງໆເວລາຮ່ວມກັນຫລາຍຄົນ ຫລືຮ່ວມແຂກ

### 3.1. ມາລະຍາດການເຄົາລົບໃນໂອກາດຕ່າງໆ ຫລືບາງສະຖານະການ.

❖ ການຂຶ້ນລົດລົງເຮືອ: ຄວນໃຫ້ໂອກາດແກ່ພະສົງສະມະເນນ, ຄົນຊະລາ, ຄົນພິການ, ແມ່ມານ, ເດັກນ້ອຍ, ແມ່ນລູກອ່ອນ. ປະຕິບັດລະບຽບວິໄນໃນການເດີນທາງໃຫ້ເຂັ້ມງວດ, ບໍ່ຖິ້ມຂອງເສດລົງໃສ່ລົດໃສ່ພື້ນ ຫລືຖິ້ມຊະຊາຍ, ບໍ່ລ່ວງເກີນຂໍ້ຫ້າມໃນລັກສະນະຮູ້ແລ້ວພາໂລເຮັດບໍ່ຮູ້. ພ້ອມນັ້ນ, ການຂຶ້ນລົງສະຖານທີ່ຕ່າງໆ ຄວນໃຫ້ຄວາມເຄົາລົບນັບຖື ດ້ວຍການໃຫ້ໂອກາດແກ່ພວກທ່ານເຫລົ່ານີ້ຈະເປັນການດີ. ພ້ອມນັ້ນ, ການຂຶ້ນລົງຂັ້ນໄດ ແລະຍ່າງຕາມທາງ ຕ້ອງຍ່າງທາງຂວາມືຂອງຕົນສະເໝີ.

❖ ການຊົມມະໂຫລະສົບ: ຮັກສາຄວາມສະຫງົບ, ມີລະບຽບ, ໄປຕົງເວລາ, ບໍ່ສູບຢາ, ບໍ່ດື່ມຂອງມຶນເມົາ, ບໍ່ກິນອາຫານ ແລະບໍ່ຖິ້ມຂີ້ເຫຍື້ອຊະຊາຍຕາມສະຖານທີ່. ທຸກຄົນຄວນເປັນເຈົ້າຕົນເອງຮັກສາຄວາມສະອາດ ແລະສິ່ງແວດລ້ອມໃນສະຖານທີ່ໃຫ້ເປັນສະຖານໜ້າຢູ່ຄືກັບເຮືອນຂອງຕົນ.

### 3.2. ມາລະຍາດໃນການຈາລະຈອນ

ອຸບັດເຫດເກີດຂຶ້ນໃນທ້ອງຖະໜົນ ຍ້ອນບຸກຄົນບໍ່ປະຕິບັດລະບຽບຈາລະຈອນ, ເມົາແລ້ວຂັບຂີ່ລົດໄວ, ຂາດສະຕິ. ດັ່ງນັ້ນ, ເຮົາຄວນມີມາລະຍາດຄື ປະຕິບັດຕໍ່ລະບຽບໄຟອໍານາດຕາມຖະໜົນທຸກບ່ອນ, ເຄົາລົບຕໍ່ສິ່ງທີ່ຕ້ອງຫ້າມ ເປັນຕົ້ນ ທາງຂຶ້ນ, ທາງລ່ອງ, ປ້າຍຫ້າມຈອດ, ຫ້າມຜ່ານ, ບໍ່ລັງວລົດຕັດໜ້າ, ບໍ່ຊ່ວງເສັງລົດຕາມຖະໜົນ ທີ່ບໍ່ແມ່ນສະໜາມແຂ່ງ, ບໍ່ແຂ່ງລົດບ່ອນຂັບຂັນ, ບໍ່ຂັບລົດ ແລະຍ່າງເປັນແພຮຽງກັນ, ລະບົບສັນຍານເຕືອນໃນລົດຕ້ອງຄົບຖ້ວນ, ມີໃບຂັບຂີ່, ມີເອກະສານລົດຕິດຕົວທຸກຄັ້ງເມື່ອອອກເດີນທາງ. ເມື່ອຂັບພາຫະນະຜ່ານທ້ອງຖະໜົນສາທາລະນະ ບໍ່ຄວນປ່ອຍສຽງດັງລົບກວນຊາວບ້ານໃນຍາມປົກກະຕິ ແລະຍາມເດິກດື່ນ.

### 3.3. ມາລະຍາດໃນການນັ່ງ

❖ ນັ່ງຕັ່ງ: ໂຕຄີງຕັ້ງຊື່ ຫລືນັ່ງກົ່ງໂຕໜ້ອຍໜຶ່ງ, ເທົ້າ ແລະຫົວເຂົ່າທັງສອງແນບຕິດກັນ, ມືທັງສອງວາງໄວ້ຂາ ຫລືຕັກ,. ຖ້າຕັ່ງມີແຂນ ເອົາແຂນວາງໄວ້ເທິງແຂນຕັ່ງກໍໄດ້. ບໍ່ຄວນນັ່ງຂາໄຂວ່ກັນ, ບໍ່ນັ່ງຍະຂາວາແຂນ ຫລືເນີ້ງໜ້າເນີ້ງຫລັງ, ກະດິດປາຍເທົ້າ ແລະສັ່ນຂາຢັອກໆ. ແມ່ຍິງນັ່ງຫຸບຕີນສົ້ນ.

❖ ນັ່ງກັບພື້ນ: ແມ່ຍິງນັ່ງພັບແພບ ມືວາງຢູ່ເທິງຕັກ ຫລືແຂນເບື້ອງໜຶ່ງລົງພື້ນຄໍ້າໂຕໄວ້, ອ່ຽງຄີງໜ້ອຍໜຶ່ງ, ສ່ວນຜູ້ຊາຍນັ່ງຂັດສະໝາດ. ລັກສະນະຂອງການນັ່ງຕັ່ງ ແລະນັ່ງພື້ນ ຍັງອີງຕາມສະພາບໂດຍສະເພາະແມ່ຍິງຄວນລະມັດລະວັງ, ຖະໜອມຖ່ອມຕົວຫລາຍກວ່າຜູ້ຊາຍ ເພື່ອບໍ່ໃຫ້ກາຍເປັນເປົ້າສາຍຕາ.

### 3.4. ມາລະຍາດໃນການຮຽນ ແລະການຟັງ

ການຮຽນ, ສະຖານທີ່ຮຽນ ແລະການຟັງ ມີຄວາມສຳຄັນທີ່ສຸດສຳລັບປັນຍາຊົນ, ນັກຮຽນນັກສຶກສາ ຈຶ່ງຕ້ອງປະຕິບັດຄື:

- ການເຂົ້າ-ອອກຫ້ອງຖືກກັບເວລາ, ເຂົ້າຫ້ອງຊ້າຕ້ອງຂໍອະນຸຍາດນຳຄູອາຈານສາກ່ອນ.
- ໃນເວລາຮຽນ ຄູອາຈານຖາມຕ້ອງລຸກຂຶ້ນແລ້ວຈຶ່ງຕອບ ຫລືມີຄວາມເຫັນ, ຖ້າຈະຖາມ, ສົນທະນາ, ແນະນຳ ຫລືມີທຸລະໃດຢ່າງໃດ ຄວນຍົກມືຂຶ້ນເພື່ອເປັນສັນຍານ ຫລືຂໍອະນຸຍາດ ແລ້ວຈຶ່ງປະຕິບັດ. ພ້ອມນັ້ນ ການນຸ່ງຖືຕ້ອງເປັນລະບຽບຮຽບຮ້ອຍຈົບງາມຕາມຫລັກການຂອງໂຮງຮຽນວາງອອກ. ການມາຮຽນຕ້ອງນຸ່ງຊຸດປະຈຳການ.
- ຕ້ອງຕັ້ງໃຈຟັງ, ຈົດກ່າຍ, ບໍ່ຍ້າຍບ່ອນໃນເວລາຮຽນ, ບໍ່ບົ່ນແຊວ, ບໍ່ນອນ, ບໍ່ຫລິ້ນເກມ, ບໍ່ກິນອາຫານ ຫລືດື່ມຂອງມຶນເມົາແລ້ວມາຮຽນ ຫລືເຮັດທຸກສິ່ງທີ່ຜິດລະບຽບ, ເຮັດໃຫ້ຄົນຮອບຂ້າງ ແລະຄູອາຈານເປັນໜ້າລັງກຽດ, ເບື່ອໜ່າຍ.

### 3.5. ມາລະຍາດໃນການສົນທະນາ ແລະການອອກຄຳຄິດຄຳເຫັນ

ການສົນທະນາ ແລະການອອກຄຳຄິດຄຳເຫັນທີ່ເປັນທາງການຄວນຜັດປ່ຽນກັນ, ບໍ່ເວົ້າແຕ່ຝ່າຍດຽວ ຫລືເວົ້າພ້ອມກັນຫລາຍຄົນ, ບໍ່ເວົ້າຕັດຄວາມຜູ້ກຳລັງເວົ້າ, ເວົ້າໃຫ້ຜູ້ອື່ນເຂົ້າໃຈ ແລະສາມາດຮັບເອົາໄດ້. ການເວົ້າ ຫລືສົນທະນາ ໃຫ້ມີລັກສະນະຈູງໃຈ, ມີທາງອອກຮ່ວມກັນ, ມີເນື້ອຫາສາລະທີ່ເປັນປະໂຫຍດ. ການມີຄຳເຫັນ ແລະຄຳຕຳໜິຕ້ອງໃຫ້ເປັນການສ້າງສັນ, ຫລີກເວັ້ນການເວົ້າສຽດສີໃສ່ຮ້າຍ ຫລືດູໝິ່ນກັນ.

3.6. ມາລະຍາດໃນການຢືນ ແລະການຍ່າງ

❖ ການຢືນ: ຢືນໃຫ້ມີລັກສະນະສະຫງ່າຜ່າເຜີຍ, ບໍ່ຢືນຍະຂາກວ້າງ, ຖ້າຢືນຢູ່ຮ່ວມເຈົ້ານາຍ ບໍ່ຄວນຢືນຢູ່ຕໍ່ໜ້າ ຄວນຢືນບ່ຽງໄປທາງຊ້າຍ ຫລືທາງຂວາ, ຢືນໃນທ່າຊື່, ປ່ອຍມືລົງເປັນທຳມະຊາດ ຫລືໄຂວ່ກັນ, ປາຍເທົ້າຫ່າງກັນ ບາງເລັກໜ້ອຍ, ຂາເບື້ອງໜຶ່ງກົ່ງໄປເບື້ອງໜ້າພໍດີງາມ.

❖ ການຍ່າງ: ຍ່າງຢ່າງສຸພາບ, ບາດກ້າວຂາບໍ່ກວ້າງ ແລະບໍ່ແຄບເກີນໄປ, ແກວ່ງແຂນພໍດີງາມ, ປົງບາດເທົ້າ ບໍ່ໃຫ້ສຽງດັງເກີນໄປ. ຖ້າຍ່າງນຳເຈົ້ານາຍ, ຜູ້ໃຫຍ່ ຄວນຍ່າງຢູ່ທາງຊ້າຍ ຫລືທາງຫລັງ ຫ່າງເພິ່ນພໍປະມານ, ຍ່າງກ້າວຂາໃຫ້ສະໝ່ຳສະເໝີ.

3.7. ມາລະຍາດໃນການນອນ

ນອນໃຫ້ຖືກກາລະເທສະ, ກ່ອນຈະເຂົ້ານອນ ຕ້ອງຊຳລະຮ່າງກາຍໃຫ້ຮຽບຮ້ອຍ. ຍິງຫລືຊາຍບໍ່ຄວນເປີຍກາຍ. ພິເສດແມ່ນແມ່ຍິງບໍ່ຄວນນອນຂວັມ, ນອນຫງາຍວາແຂນ ແລະຍະຂາກວ້າງ,. ຄວນນອນສະແຄງ ແລະຫຸບຕີນສົ້ນເຂົ້າລຳຄີງ. ໃນສະໄໝບູຮານເພິ່ນເອົາໃຈໃສ່ຢ່າງເປັນພິຖີພິຖັນ ໃນເລື່ອງນີ້ ສະແດງອອກໃນການປູສອນຫລານ, ອິນທິຍານສອນລູກ, ຄຳສອນເລືອກເມຍ ເປັນຕົ້ນ.

3.8. ມາລະຍາດໃນການກິນດື່ມ

ການກິນດື່ມ ມີຫລາຍລະດັບ. ການກິນໃນສະໄໝບູຮານ ເພິ່ນບໍ່ມັກກິນຈິນເຂາະຖ້ວຍເຂາະບ່ວງ, ກິນຈົນໝົດສຽງຊູ່ອັນ. ໃນທີ່ນີ້ ຈະເວົ້າເຖິງ ການກິນທີ່ເປັນພິທີການຄື ການກິນຢູ່ໃນງານທາງການ ເຊັ່ນ ງານລ້ຽງ, ງານພົບປະສັງສັນ, ງານສົ່ງແຂກ ຫລືຮັບແຂກ... ຄວນມີມາລະຍາດ ແລະປະຕິບັດຄື:

- ຟັງຄຳເຊື້ອເຊີນຈາກຜູ້ປະກາດ ຫລືເຈົ້າພາບກ່ອນຈະລົງມືກິນ, ບໍ່ຄວນກິນຫລາຍເກີນໄປຈົນເອື້ອມ; ຖ້າຫລົງເອື້ອມກໍຄວນຂໍຄຳອະໄພໂທດຈາກຜູ້ຢູ່ຮອບຂ້າງ, ບໍ່ຄວນກິນຄຳໃຫຍ່ ຫລືຄຳນ້ອຍເກີນໄປ. ກິນໄວ ຫລືກິນຊ້າລັກສະນະສະແດງເຖິງຄວາມຫິວ ຫລືຖະໜອມຖ່ອມຕົວໂພດ. ເອົາອາຫານມາກິນໃຫ້ພໍດີກິນອີ່ມ, ບໍ່ໃຫ້ອາຫານເຫລືອຈານ

- ຫຍ້ຳເຂົ້າ, ຫຍ້ຳອາຫານບໍ່ໃຫ້ມີສຽງດັງແຮງ, ບໍ່ຍົ້ມືຂ້າມໜ້າແຂກ, ຖ້າຈຳເປັນກໍຮ້ອງຫາແຂກຊ່ວຍ ຫລື ຂໍອະນຸຍາດສາກ່ອນ, ບໍ່ໃຊ້ພາຊະນະຢ່າງຊະຊາຍ, ບໍ່ລົມທະນາບິນແຊວ ( ເວັ້ນເສຍແຕ່ການຊຸມແຊວກັນໃນວົງແຄບ ) ບໍ່ກ່າວຂວັນນິນທາຄົນອື່ນໃນຍາມກິນດື່ມທາງພິທີການ.

- ບໍ່ຄວນເວົ້າຄຳເພີ, ເລື່ອງຕະຫລົກ, ສຽດສີ, ບໍ່ໃຊ້ແພເຊັດມືມາ ເຊັດປາກທົ່ວທິບ, ລະວັງໃນ

ການຈາມ, ໄອ ແລະສະມັກ. ອີກຢ່າງໜຶ່ງໃນເວລາໄປຮ່ວມງານຕ່າງໆໃນສັງຄົມ ແຕ່ງກາຍໃຫ້ສຸພາບ ຮຽບຮ້ອຍ, ຊຳລະຮ່າງກາຍໃຫ້ພໍເໝາະພໍດີກັບງານນັ້ນໆ.

- ໃນເວລາຮ່ວມຮັບປະທານອາຫານບໍ່ຄວນຍ້ອງ ຫລືກ່າວຕຳໜິວິຈານລົດຊາດອາຫານ ເຊິ່ງອາດຈະເປັນການສ້າງຄວາມລຳຄານ ຫລືຂັດຫູຄົນອ້ອມຂ້າງ.
- ເມື່ອຍົກຈອກຕຳຮ່ວມກັບຜູ້ໃຫຍ່ ຄວນກົ້ມຫົວລົງໜ້ອຍໜຶ່ງ ເພື່ອສະແດງຄວາມເຄົາລົບ ແລະ ຄວນຍົກຈອກຕ່ຳກວ່າເພິ່ນ.

3.9. ມາລະຍາດໃນການສູບຢາ

ບໍ່ຄວນສູບຢາໃນຫ້ອງເຮັດວຽກ, ຫ້ອງຊຸມນຸມມິດຕິງ, ທີ່ສາທາລະນະ, ໂຮງໝໍ, ຢູ່ໃນລົດເມ, ຮ້ານອາຫານ ແລະສະຖານທີ່ຫວງຫ້າມອື່ນໆ. ຖ້າຈຳເປັນກໍຄວນໄປສູບຢູ່ບ່ອນທີ່ເໝາະສົມ, ບໍ່ໃຫ້ຄວັນຢາໄປລົບກວນຜູ້ອື່ນ, ຖ້າມີບ່ອນສູບຢາໄວ້ໃຫ້ບໍລິການ ກໍຄວນໄປສູບຢູ່ຕາມສະຖານທີ່ດັ່ງກ່າວ. ດີແທ້ຄວນສັງເກດປ້າຍເຕືອນ. ໂດຍສະເພາະເມືອງຫລວງພະບາງ ເປັນເມືອງປອດຢາສູບໃນສະຖານທີ່ສາທາລະນະຊົນ, ທຸກຄົນຕ້ອງປະຕິບັດ.

3.10. ມາລະຍາດທີ່ຢູ່ອາໄສ

ທີ່ຢູ່ອາໄສ ໝາຍເຖິງເຮືອນ ຫລືທີ່ພັກພາອາໄສເປັນຂອງຕົນເອງ ຫລືສ່ວນລວມ ຄວນຮັກສາໃຫ້ສະອາດສະເໝີ, ຂັ້ນໄດໝັ່ນປັດກວາດ, ຫ້ອງຮັບແຂກໃຫ້ສະອາດ, ມີການປະດັບປະດາ, ການຈັດສັນເຄື່ອງຂອງຕ່າງໆໃນເຮືອນໃຫ້ເປັນລະບຽບ ຫລືສິ່ງສຳຄັນອີກຢ່າງໜຶ່ງຄື ບໍ່ຕາກເຄື່ອງ ຫລືສິ່ງຂອງຕ່ຳຕ້ອຍຢູ່ໜ້າເຮືອນ, ໃກ້ຫ້ອງຮັບແຂກ ຫລືບ່ອນທີ່ແຂກເຫັນໄດ້ງ່າຍ.

3.11. ມາລະຍາດໃນການໂທລະສັບ ແລະໃຊ້ໂທລະສັບ

- ການໂທລະສັບມີຄວາມຈຳເປັນຕ້ອງໃຊ້ຄຳສຸພາບ. ເຖິງວ່າຈະເປັນການໂທ ຫລືຕອບຮັບກໍຕ້ອງກ່າວຄຳວ່າ " ອາໂລ ຫລືສະບາຍດີ " ສາກ່ອນ. ຖ້າບໍ່ຮູ້ຜູ້ໂທມາ ຫລື ຄຳບໍ່ແຈ້ງ ຕ້ອງການຖາມເພື່ອຄວາມແນ່ໃຈ ກໍຕ້ອງກ່າວຄຳຂໍໂທດ. ຖ້າເປັນການຕອບຮັບກໍຄວນກ່າວ ເຈົ້າ, ໂດຍ, ຂອບໃຈ ເປັນຕົ້ນ. ຫລີກລຽງຄຳວ່າ ນີ້ແມ່ນໃຜ, ເບີຂອງໃຜ, ໂທມາເຮັດຫຍັງ. ຖ້າໂທຜິດກໍກ່າວຄຳຂໍໂທດເບົາໆ.
- ການໃຊ້ໂທລະສັບໃນຝູງຊົນ ຄວນຫຼີກໃຫ້ຫ່າງໆຈາກຝູງຊົນ ຫລືບໍ່ຄວນເວົ້າດັງ. ຖ້າເປັນໂທລະສັບສາທາລະນະ ກໍຕ້ອງຄຳນຶງເຖິງຜູ້ທີ່ກຳລັງລໍຖ້າ ໃຊ້ບໍລິການຢູ່ຂ້າງນອກອີກດ້ວຍ.
- ຢູ່ໃນຫ້ອງປະຊຸມ, ຫ້ອງຮຽນ ເວທີປາໄສ... ດີແທ້ຄວນປິດໂທລະສັບໄວ້ ຫລື ຜ່ອນສຽງໃຫ້ຄ່ອຍໆ ແລະໃຊ້ລະບົບສັ່ນສະເທືອນ.

3.12. ມາລະຍາດໃນການຕ້ອນຮັບແຂກ

ການຮັບແຂກເປັນວັດທະນະທຳ, ຮີດຄອງປະເພນີມາແຕ່ສະໄໝບູຮານ ແລະມີຄວາມສຳຄັນ

ທີ່ສຸດໃນສັງຄົມທີ່ມີການພົວພັນໄປມາຫາສູ່ກັນ. ຜູ້ຕ້ອນຮັບ ຫລືເຈົ້າພາບຄວນປະຕິບັດຄື

- ເມື່ອແຂກຂຶ້ນເຮືອນມາ ຖາມສະບາຍດີ ຫລືສະແດງຄວາມເຄົາລົບຕ່າງໆ. ຖ້າຮູ້ວ່າ ແຂກຈະມາເວລາໃດ ກໍກຽມຕ້ອນຮັບຕາມສົມຄວນ ກ່ອນຈະເຊີນແຂກນັ່ງລົງ ບໍ່ຄວນຖາມແຂກວ່າ ມາຫຍັງ ?
- ແຂກຂຶ້ນມາຖືກກັບເວລາຮັບປະທານ ກໍເຊີນແຂກຮ່ວມຮັບປະທານນຳຕາມປະເພນີ
- ເອົາຂອງມາສູ່ແຂກຮັບປະທານຕາມສົມຄວນ, ຕາມປະເພນີນິຍົມທີ່ສຸດຂອງຄົນລາວແມ່ນ ນ້ຳດື່ມ, ໝາກຄຽງ, ຢາດູດ ເຫລົ່ານີ້ເປັນຕົ້ນ.
- ຖ້າແຂກມາຮ້ອງຂໍຄວາມຊ່ວຍເຫລືອ ກໍຄວນຊ່ວຍຕາມສົມຄວນ ຖ້າຂັດຂ້ອງກໍຄວນແຈ້ງດ້ວຍຄວາມສຸພາບຕາມຄວາມຈິງ.
- ເວົ້າຈາກັບແຂກດ້ວຍຄວາມສຸພາບ, ໃນເວລາແຂກຍັງຢູ່ ບໍ່ຄວນຮ້າຍດ່າວ່າແຮງຄົນໃນເຮືອນ.
- ບໍ່ຄວນເບິ່ງໂມງເລື້ອຍໆ, ຄວນເຂົ້າໃຈສະເໝີວ່າ ມີແຂກມາເຮືອນຖືວ່າ ມີກຽດ. ຖ້າມີວຽກຈຳເປັນກໍຄວນຂໍອະນຸຍາດໃນເວລາອັນສົມຄວນ.

## 3.13. ມາລະຍາດໃນການແນະນຳຕົນເອງ ແລະການໄປຢ້ຽມຢາມຄົນອື່ນ

❖ ການແນະນຳຕົນເອງ: ແມ່ນການແນະນຳກ່ຽວກັບຕົວເຮົາ ເພື່ອໃຫ້ຜູ້ອື່ນໄດ້ຮັບຊາບ. ໃນບາງກໍລະນີທີ່ເຫັນວ່າຈຳເປັນຄື ໃນເວລາພິທີທີ່ເປັນທາງການ. ຖ້າຈຳເປັນກໍສະເໜີຊື່ ແລະ ນາມສະກຸນ, ໜ້າທີ່ຕຳແໜ່ງ, ສະຖາບັນທີ່ສັງກັດ ຕາມສະຖານະການຕົວຈິງ ແຕ່ບໍ່ຄວນສະເໜີວ່າ ຂ້າພະເຈົ້າແມ່ນ " ທ່ານ, ພະນະທ່ານ, ທ່ານນາງ, ສາດສະດາຈານ, ດອກເຕີ... "

ຖ້າແນະນຳຕົນເອງຢູ່ນອກເວທີທາງລັດຖະການ ບໍ່ຄວນແນະນຳນາມມະຍົດ, ນາມສະກຸນ, ໜ້າທີ່ຕຳແໜ່ງ ເພາະການສະເໜີແບບນີ້ ສັງຄົມປັດຈຸບັນແມ່ນນິຍົມໃຊ້ຊຽນໄວ້ຢູ່ໃນນາມບັດ. ພ້ອມກັນນັ້ນ, ຖ້າຈຳເປັນແຈກນາມບັດໃນສະຖານະການໃດໜຶ່ງທີ່ເໝາະສົມ ດີແທ້ກໍກ່າວຄຳອະໄພໂທດຄື ຂໍໂທດຫລາຍ ນີ້ແມ່ນນາມບັດຂອງ...

❖ ການໄປຢ້ຽມຢາມ: ຄວນບອກໃຫ້ຮູ້ລ່ວງໜ້າ, ບໍ່ຄວນຢູ່ເຫິງເກີນຂອບເຂດ, ຖ້າບໍ່ຈຳເປັນແທ້ໆ ບໍ່ຄວນເລົ່າແຕ່ຄວາມທຸກ, ຍ່າງໄປທຸກມູມເຮືອນ ຫລືຕຳໜິເຈົ້າພາບສິ່ງໃດສິ່ງໜຶ່ງ. ການໄປຢາມແຕ່ລະຄັ້ງ ຄວນມີຂອງຕ້ອນຕິດໄມ້ຕິດມືໄປບາງເລັກນ້ອຍຕາມປະເພນີ ແລະມາລະຍາຂອງຄົນລາວ.

## 3.14. ການສະແດງຄວາມດີໃຈ ແລະເສຍໃຈ

ການສະແດງຄວາມດີໃຈ ແລະເສຍໃຈ ແມ່ນມາລະຍາດຂອງຄົນຜູ້ດີ, ສະແດງຄວາມປາຖະໜາດ້ວຍຄວາມຈິງໃຈ, ບໍ່ອິດສາລິດສະຫຍາຕໍ່ຄົນອື່ນໃນສະພາບໃດໜຶ່ງ. ຖ້າເປັນຄວາມຈິງໃຈກໍຄວນກ່າວວ່າ ຂໍສະແດງຄວາມດີໃຈນຳ, ສະແດງຄວາມດີໃຈນຳດ້ວຍທີ່ໄດ້... , ຂໍສະແດງຄວາມເສຍໃຈ ດ້ວຍທີ່ໄດ້

ຂ່າວວ່າ ... ເປັນຕົ້ນ. ພ້ອມນີ້ ການສະແດງທ່າທີດັ່ງກ່າວ ຄວນສະແດງສີໜ້າທ່າທີ, ອະລິຍະບົດ ຕ້ອງກົງກັບຄວາມໝາຍ, ຈຶ່ງເຮັດໃຫ້ຜູ້ອື່ນ ເຂົ້າໃຈໃນຄວາມຮູ້ສຶກຫວັງດີ ຈາກຕົວເຮົາຢ່າງຊາບຊຶ້ງ ຕະຫລອດໄປ.

ການສະແດງຮອຍຍິ້ມ ແລະສຽງຫົວ ມີທັງຜົນດີ ແລະຜົນຮ້າຍ, ສາມາດສ້າງມິດ ແລະເປັນສັດຕູກໍໄດ້. ສຽງຫົວ ແລະຮອຍຍິ້ມທີ່ດີມີສະເໜ, ເໝາະສົມກັບສະຖານະການເປັນສຽງຫົວທີ່ເກີດຂຶ້ນ ດ້ວຍຄວາມດີໃຈ ແລະພໍໃຈ. ດັ່ງນັ້ນ, ສຽງຫົວ ແລະຮອຍຍິ້ມຈຶ່ງມີຄວາມສຳຄັນຫລາຍ ທັງເຮັດໃຫ້ເຮົາມີຄວາມສຸກອີກດ້ວຍ.

### 3.15. ມາລະຍາດການພົວພັນວຽກກັບຫົວໜ້າ ຫລືເຈົ້າໜ້າທີ່ຂັ້ນຕ່າງໆ

ກ່ອນຈະໄປພົວພັນວຽກ ຕ້ອງແຕ່ງຕົວໃຫ້ຮຽບຮ້ອຍ, ໃສ່ຊຸດປະຈຳການທີ່ທາງສະຖາບັນກຳນົດໃຫ້, ເມື່ອປະຕູຫ້ອງອັດ ຄວນເຄາະປະຕູເບົາໆ 2 ຫາ 3 ເທື່ອ, ເມື່ອເຂົ້າໄປຫາຫົວໜ້າ ຄວນສະແດງຄວາມເຄົາລົບດ້ວຍການຍໍມືໄຫວ້ ຫລື ກົ້ມຫົວເຄົາລົບເບົາໆຕາມສະພາບຄວາມເໝາະສົມຂອງກາລະເທສະ. ພ້ອມນັ້ນ, ເມື່ອສຳເລັດວຽກແລ້ວກະສະແດງຄວາມຂອບໃຈນຳ ບວກກັບຮອຍຍິ້ມ ແລະໃບໜ້າທີ່ເບີກບານແຈ່ມໃສ ທັງຍ່າງອອກຄ່ອຍໆ ແລະອັດປະຕູເບົາໆ.

### 3.16. ມາລະຍາດໃນການຮຽກເອີ້ນ, ການຖາມ ແລະການຕອບຮັບ

ການຮຽກເອີ້ນ, ການຖາມ, ການຕອບຮັບ ແລະການຮ້ອງຂໍ ລວມທັງຜູ້ທີ່ເຮົາຮູ້ຈັກ ຫລືບໍ່ຮູ້ຈັກ, ເຮົາຄວນເບິ່ງກາລະເທສະ ຫລືສະຖານະພາບຂອງບຸກຄົນນັ້ນເປັນຕົວຊ່ວຍ ແລະໃຊ້ຄຳວ່າ ຂໍໂທດ ທ່ານ, ລຸງ, ອ້າຍ, ນ້ອງ.. ສ່ວນຄຳຂານຕອບ ໂດຍ, ເຈົ້າ, ແມ່ນ, ຂໍໂທດບໍ່ແມ່ນ...ເຊິ່ງບາງຄັ້ງຄາວ ມີຜູ້ຕ້ອງການຢາກຮູ້, ຢາກຂໍຮ້ອງໃຫ້ຊ່ວຍ, ຢາກປຶກສາ... ໃນທາງກົງ ແລະທາງອ້ອມ ກໍຄວນພິຈາລະນາຕາມສົມຄວນເພື່ອສະແດງເຖິງຄວາມມີມະນຸດສຳພັນ ແລະຄວາມເປັນມິດທີ່ດີ. ສິ່ງທີ່ຄວນໃສ່ໃຈວ່າ ການເອີ້ນ, ການຖາມ ແລະການຕອບ ຕາມແບບປະເພນີລາວ ບໍ່ເອີ້ນຊື່ ແລະນາມສະກຸນພ້ອມກັນ ( ເອີ້ນແຕ່ຊື່ ) ເຊິ່ງນອກຈາກ ການຂຽນ ແລະພິທີທາງການ.

## 4. ການສົ່ງເສີມປະຕິບັດວັດທະນະທຳ-ຮີດຄອງປະເພນີແບບມີສ່ວນຮ່ວມ

### 4.1. ການສົ່ງເສີມປະຕິບັດ ແລະກິລິຍາມາລະຍາດທີ່ເປັນເອກະລັກດີງາມຂອງຊາດເຮົາ

ວັດທະນະທຳ, ຮີດຄອງປະເພນີ ແລະກິລິຍາມາລະຍາດ ທີ່ເປັນເອກະລັກຂອງຊາດລາວເຮົາ ແມ່ນມໍລະດົກອັນປະເສີດ ທີ່ຜູກພັນ ແລະສະໜິດແໜ້ນກັບສັງຄົມລາວ. ດັ່ງນັ້ນ, ເພື່ອບໍ່ໃຫ້ສູນເສຍໄປຄັ້ງແລ້ວຄັ້ງເຫລົ່າເໝືອນອະດີດ. ພວກເຮົາເປັນປັນຍາຊົນພົນລະເມືອງລາວທຸກຄົນ ຄວນຮູ້ ແລະປະຕິບັດ ໜ້າທີ່ຂອງຕົນໃນການປົກປັກຮັກສາ ແລະເສີມຂະຫຍາຍວັດທະນະທຳ-ຮີດຄອງປະເພນີດີ

- ເປັນຜູ້ຮັກສາ ແລະສົ່ງເສີມມູນເຊື້ອອັນດີງາມ, ມີຄວາມຮູ້ສຶກຕື່ນຕົວສູງ, ເຫັນໄດ້ຄວາມ

5.11.96.

ສຳຄັນ ແລະຄວາມຈຳເປັນຂອງວັດທະນະທຳ,ຮີດຄອງປະເພນີ.

- ຄວນສະກັດກັ້ນ ແລະຕີຖອຍທຸກປາກົດການຂອງວັດທະນະທຳທີ່ເສື່ອມຊາມ, ຮູ້ຈັກເລືອກເຟັ້ນໃນ ສິ່ງທີ່ດີງາມຈາກວັດທະນະທຳສາກົນໃຫ້ສອດຄອງກັບສັງຄົມລາວ.

- ພ້ອມກັນທະນຸບຳລຸງເອກະລັກ, ມູນເຊື້ອອັນດີງາມ, ຜັດສີເຈລະໄນໃນຂະບວນການຂອງສັງຄົມ ຢ່າງຕັ້ງໜ້າ ແລະໃຫ້ມີຮູບປະທຳຫລາຍຂຶ້ນເລື້ອຍໆ.

- ປະຕິບັດຕາມນະໂຍບາຍຂອງພັກລັດ ທີ່ວ່າດ້ວຍວຽກງານວັດທະນະທຳ-ສັງຄົມ, ຮີດຄອງປະເພນີ, ເພື່ອເຮັດໃຫ້ປະຊາຊົນຮັບຮູ້ ແລະເຂົ້າໃຈຕໍ່ວຽກງານວັດທະນະທຳເປັນຢ່າງດີ.

- ການອະນຸລັກ ແລະ ສົ່ງເສີມວັດທະນະທຳ-ຮີດຄອງປະເພນີຕ້ອງເອົາໃຈໃສ່ເຖິງແນວຄິດ, ອຸດົມຄະຕິຂອງທຸກຄົນ ແຕ່ສູນກາງລົງຮອດທ້ອງຖິ່ນ, ຄອບຄົວ, ຊາວບ້ານ, ຊຸມຊົນ, ອົງການ, ສຳນັກງານ. ອົງການຈັດຕັ້ງພາກລັດ ແລະເອກະຊົນ ຄວນເປັນເຈົ້າການຊີ້ນຳນຳພາ ແລະສະໜັບສະໜູນໃນວຽກງານ ນີ້ຢ່າງຕັ້ງໜ້າ ຕາມແນວທາງນະໂຍບາຍຂອງພັກ-ລັດຖະບານວາງອອກ.

ການອະນຸລັກຕ້ອງຕິດພັນກັບຂະບວນການພັດທະນາໃນສອງດ້ານຄື ດ້ານວັດຖຸ ແລະຈິດໃຈ, ດຳເນີນໄປພາຍໃຕ້ການສຶກສາຄົ້ນຄວ້າ, ຕີລາຄາດ້ານດີ ແລະດ້ານຫຍໍ້ທໍ້ ແລະຮູ້ຈັກປັບປຸງແກ້ໄຂໃຫ້ຖືກຕ້ອງຕາມສະພາບການຕົວຈິງ ຂອງສັງຄົມລາວໃນຍຸກພັດທະນາເສດຖະກິດສັງຄົມ ແລະເທັກໂນໂລຊີ.

### 4.2. ການມີສ່ວນຮ່ວມ

- ຊາວບ້ານທຸກຄົນ, ພົນລະເມືອງລາວທຸກເຜົ່າ ຄວນເປັນຜູ້ເຂົ້າໃຈວັດທະນະທຳຂອງຕົນກວ່າຄົນພາຍນອກ. ຄວນຮວມແຮງຮ່ວມໃຈກັນ.

- ເຖົ້າແກ່ອາວຸໂສ, ໝໍຂັບໝໍລຳ, ສິລະປິນ, ນັກປະພັນ, ນັກດົນຕີ, ສື່ມວນຊົນ ແລະຊັ້ນຄົນທຸກລະດັບ ເປັນຜູ້ຮັບຜິດຊອບໃນການເຜີຍແຜ່ວັດທະນະທຳຮ່ວມກັນ.

- ປັນຍາຊົນ, ນັກຮຽນຮູ້, ນັກສຶກສາ, ຜູ້ຊົງຄຸນວຸດທິ ເປັນເຈົ້າການໃນການຊຸກຍູ້ປະຕິບັດ, ປະສານສົມທົບ ແລະເຂົ້າຮ່ວມວຽກງານວັດທະນະທຳ.

- ນັກວິຊາການ, ຄູອາຈານ, ລັດຖະກອນ, ເຈົ້າໜ້າທີ່ທັງພາກລັດ ແລະເອກະຊົນ ອຸທິດສະຕິປັນຍາຂອງຕົນ ເຂົ້າໃນການພັດທະນາວັດທະນະທຳໃຫ້ທັນສະໄໝ.

- ນັກພັດທະນາມີການວາງແຜນ ແລະຂຸດຄົ້ນມໍລະດົກຊັບສິນທາງປັນຍາ, ພັດທະນາທາງວັດຖຸ ແລະຈິດໃຈ. ພ້ອມນັ້ນ, ອົງການ ( ພສລ ) ພະສົງສຳມະເນນ, ນັກວິຊາການ ແລະສື່ມວນຊົນ ແມ່ນພາກສ່ວນທີ່ສຳຄັນໃນການເຜີຍແຜ່, ປຸກລະດົມຊາວບ້ານ, ຄົ້ນຄິດ, ຂີດຂຽນ, ແປ... ຊັບສິນທາງປັນຍາຢູ່ໃນຄຳພີໃບລານອອກມາສູ່ສັງຄົມ, ເຮັດໃຫ້ຄອບຄົວ ແລະບ້ານ ເປັນສູນວັດທະນະທຳ ທີ່ດີງາມຂອງຊາດ

ຕາມ ນະໂຍບາຍສ້າງບ້ານວັດທະນະທຳຂອງພັກ-ລັດ ໃຫ້ເປັນຜົນທາງຮູບປະທຳທີ່ດີງາມ ແລະຖືກຕ້ອງສອດຄ່ອງ.

ວັດທະນະທຳຮີດຄອງປະເພນີອັນດີງາມຂອງຊາດ ແມ່ນຂອງຄົນລາວໝົດທຸກຄົນ. ສະນັ້ນ, ພວກເຮົາຕ້ອງເປັນຜູ້ສືບທອດໄວ້ໃຫ້ຄຽງຄູ່ກັບສັງຄົມລາວ ໂດຍການສຶກສາຮຽນຮູ້, ພ້ອມກັນປະຕິບັດ ແລະ ປັບປຸງພັດທະນາສືບຕໍ່ໄປ ໂດຍພວກເຮົາທີ່ເປັນຄົນລາວໝົດທຸກຄົນເປັນເຈົ້າຮ່ວມກັນ, ເຮັດແນວໃດໃຫ້ສົມກັບວ່າ: ( ປະເທດລາວ-ຄົນລາວມີວັດທະນະທຳອັນດີງາມ )